# ຍຸດທະສາດການພັດທະນາຊາວໜຸ່ມ, ເຍົາວະຊົນລາວ ປີ 2021-2030




ສູນກາງຊາວໜຸ່ມ ປະຊາຊົນ ປະຕິວັດລາວ

ສິງຫາ 2021

# ຍຸດທະສາດການພັດທະນາຊາວໜຸ່ມ, ເຍົາວະຊົນລາວ ປີ 2021-2030

ສູນກາງຊາວໜຸ່ມ ປະຊາຊົນ ປະຕິວັດລາວ

ສິງຫາ 2021

# ສາລະບານ

**ດຳລັດວ່າດ້ວຍການຮັບຮອງ ແລະ ປະກາດໃຊ້**

**ຄຳນຳ** ຄະນະບໍລິຫານງານ ສູນກາງຊາວໜຸ່ມ ປະຊາຊົນ ປະຕິວັດລາວ.........1

**ຄຳເຫັນ** ຜູ້ຕາງໜ້າ ອົງການສະຫະປະຊາຊາດ ກອງທຶນສຳລັບປະຊາກອນ.........3

## I. ພາກສະເໜີ .........5

1. **ສະພາບລວມ** .........6
   - 1.1. ສະພາບການສາກົນ ແລະ ພາກພື້ນ.........6
   - 1.2. ສະພາບດ້ານເສດຖະກິດ-ສັງຄົມ ໃນ ສປປ ລາວ.........7
   - 1.3. ສະພາບດ້ານປະຊາກອນ.........7
2. **ສະພາບການພັດທະນາຊາວໜຸ່ມ, ເຍົາວະຊົນ** .........8
   - 2.1. ຄຳນິຍາມຂອງຊາວໜຸ່ມ, ເຍົາວະຊົນ.........8
   - 2.2. ຜົນສຳເລັດ.........9
   - 2.3. ຂໍ້ຄົງຄ້າງ ແລະ ສິ່ງທ້າທາຍ.........11
   - 2.4. ຄວາມຈຳເປັນຕ້ອງມີຍຸດທະສາດການພັດທະນາຊາວໜຸ່ມ, ເຍົາວະຊົນລາວ.........13

## II. ວິໄສທັດ, ຈຸດປະສົງ ແລະ ຫຼັກການຂອງຍຸດທະສາດ .........15

1. **ວິໄສທັດ**.........16
2. **ຈຸດປະສົງ**.........16
   - 2.1. ຈຸດປະສົງລວມ.........16
   - 2.2. ຈຸດປະສົງສະເພາະ.........16
3. **ຫຼັກການ** .........17
   - 3.1. ຫຼັກການລວມ.........17
   - 3.2. ຫຼັກການສະເພາະ.........18

## III. ຂົງເຂດບຸລິມະສິດຂອງຍຸດທະສາດ .........19

1. **ສຸຂະພາບ ແລະ ສະຫວັດດີພາບ** .........21
   - 1.1. ສະພາບລວມດ້ານສຸຂະພາບ ແລະ ສະຫວັດດີພາບ.........21
   - 1.2. ຂອບເຂດກົດໝາຍ ແລະ ຍຸດທະສາດ.........22
   - 1.3. ທິດທາງຍຸດທະສາດ.........22
2. **ການສຶກສາ, ກິລາ ແລະ ການຝຶກອົບຮົມ**.........27
   - 2.1. ສະພາບລວມດ້ານການສຶກສາ, ກິລາ ແລະ ການຝຶກອົບຮົມ.........27
   - 2.2. ຂອບເຂດກົດໝາຍ ແລະ ຍຸດທະສາດ.........29
   - 2.3. ທິດທາງຍຸດທະສາດ.........29

3. ວຽກເຮັດງານທຳ ແລະ ການປະກອບການ ....................................................................33
3.1 ສະພາບລວມດ້ານວຽກເຮັດງານທຳ ແລະ ການປະກອບການ ...............................33
3.2 ຂອບເຂດກິດໝາຍ ແລະ ຍຸດທະສາດ ...............................................................34
3.3 ທິດທາງຍຸດທະສາດ ..........................................................................................34

4. ການປົກປ້ອງທາງສັງຄົມ ........................................................................................37
4.1. ສະພາບລວມດ້ານການປົກປ້ອງທາງສັງຄົມ ......................................................37
4.2. ຂອບເຂດກິດໝາຍ ແລະ ຍຸດທະສາດ ..............................................................38
4.3. ທິດທາງຍຸດທະສາດ .........................................................................................39

5. ພັນທະພົນລະເມືອງ ແລະ ການມີສ່ວນຮ່ວມ .............................................................41
5.1. ສະພາບລວມດ້ານພັນທະພົນລະເມືອງ ແລະ ການມີສ່ວນຮ່ວມ...............................41
5.2. ຂອບເຂດກິດໝາຍ ແລະ ຍຸດທະສາດ ..............................................................41
5.3. ທິດທາງຍຸດທະສາດ .........................................................................................42

IV. ມາດຕະການໃນການຈັດຕັ້ງປະຕິບັດ........................................................43
4.1. ການນຳພາ-ຊີ້ນຳ.............................................................................................44
4.2. ການສ້າງຄວາມເຂັ້ມແຂງ ໃຫ້ແກ່ຄະນະຊາວໜຸ່ມ ປະຊາຊົນ ປະຕິວັດລາວ................45
4.3. ການປະສານງານ...............................................................................................45
4.4. ດ້ານງົບປະມານ ...............................................................................................46

V. ການຕິດຕາມກວດກາ ແລະ ປະເມີນຜົນ ..................................................47

VI. ເອກະສານອ້າງອີງ...................................................................................48

VII. ເອກະສານຊ້ອນທ້າຍ ............................................................................51

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ນາຍົກລັດຖະມົນຕີ

ເລກທີ 625 /ນຍ

ນະຄອນຫຼວງວຽງຈັນ, ວັນທີ 22.12.2020.

# ດຳລັດ
## ວ່າດ້ວຍການຮັບຮອງ ແລະ ປະກາດໃຊ້
## ຍຸດທະສາດການພັດທະນາຊາວໜຸ່ມ, ເຢົາວະຊົນລາວ ປີ 2021-2030.

- ອີງຕາມ ກົດໝາຍວ່າດ້ວຍລັດຖະບານ ເລກທີ 04/ສພຊ, ລົງວັນທີ 08 ພະຈິກ 2016;
- ອີງຕາມ ກົດໝາຍວ່າດ້ວຍ ຄະນະຊາວໜຸ່ມປະຊາຊົນປະຕິວັດລາວ ເລກທີ 15/ສພຊ, ລົງວັນທີ 03 ພຶດສະພາ 2017;
- ອີງຕາມ ໜັງສືສະເໜີ ຂອງສູນກາງຊາວໜຸ່ມປະຊາຊົນປະຕິວັດລາວ ສະບັບເລກທີ 870/ລຂ, ລົງວັນທີ 13 ພະຈິກ 2020.

**ນາຍົກລັດຖະມົນຕີ ອອກດຳລັດ:**

**ມາດຕາ 1** ຮັບຮອງ ແລະ ປະກາດໃຊ້ ຍຸດທະສາດການພັດທະນາຊາວໜຸ່ມ, ເຢົາວະຊົນລາວ ປີ 2021-2030.

**ມາດຕາ 2** ມອບໃຫ້ສູນກາງຊາວໜຸ່ມປະຊາຊົນປະຕິວັດລາວ ເປັນເຈົ້າການ ແລະ ປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ຜັນຂະຫຍາຍ ແລະ ຈັດຕັ້ງປະຕິບັດຍຸດທະສາດດັ່ງກ່າວ ໃຫ້ມີປະສິດທິພາບ ແລະ ປະສິດທິຜົນ, ພ້ອມທັງລາຍງານໃຫ້ລັດຖະບານ ເພື່ອຊາບ ເປັນແຕ່ລະໄລຍະ.

**ມາດຕາ 3** ບັນດາກະຊວງ, ອົງການລັດ, ແຂວງ, ນະຄອນຫຼວງ ແລະ ພາກສ່ວນທີ່ກ່ຽວຂ້ອງ ຈົ່ງຮັບຮູ້ ໃຫ້ການຮ່ວມມື ແລະ ພ້ອມກັນຈັດຕັ້ງປະຕິບັດດຳລັດສະບັບນີ້ ໃຫ້ໄດ້ຮັບຜົນເປັນຢ່າງດີ.

**ມາດຕາ 4** ດຳລັດສະບັບນີ້ ມີຜົນສັກສິດ ນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ.

**ນາຍົກລັດຖະມົນຕີ**

**ທອງລຸນ ສີສຸລິດ**



# ຄຳນຳ

ຄະນະບໍລິຫານງານ, ສູນກາງຊາວໜຸ່ມ ປະຊາຊົນ ປະຕິວັດລາວ

ຍຸດທະສາດການພັດທະນາຊາວໜຸ່ມ, ເຍົາວະຊົນລາວ ໄດ້ຮັບການຮ່າງຂຶ້ນເປັນຄັ້ງທຳອິດໃນປະຫວັດສາດ ສປປ ລາວ ແລະ ເປັນຍຸດທະສາດທີ່ສຳຄັນຫຼາຍ ເພາະວ່າປະເທດລາວມີຈຳນວນປະຊາກອນໜຸ່ມ ກວມເອົາອັດຕາສ່ວນຫຼາຍຂອງພົນລະເມືອງ ແລະ ເປັນກຳລັງແຮງງານຕົ້ນຕໍໃນທຸກຂົງເຂດວຽກງານໃນສັງຄົມ, ຜ່ານມາພວກເຮົາຍັງບໍ່ທັນມີຍຸດທະສາດສະເພາະສຳລັບການພັດທະນາຊາວໜຸ່ມ-ເຍົາວະຊົນ, ກອງປະຊຸມໃຫຍ່ຜູ້ແທນຊາວໜຸ່ມທົ່ວປະເທດ ຄັ້ງທີ VII ໄດ້ຮັບຮອງເອົາ 7 ແຜນງານ ແລະ 40 ໂຄງການເຊິ່ງແຜນການສ້າງຍຸດທະສາດການພັດທະນາຊາວໜຸ່ມ, ເຍົາວະຊົນ ແມ່ນນອນຢູ່ໃນແຜນງານທີ 2: “ສ້າງຄວາມເຂັ້ມແຂງດ້ານການຈັດຕັ້ງຊາວໜຸ່ມ-ເຍົາວະຊົນ” ແລະ ແຜນງານທີ 3: “ປົກປ້ອງສິດຜົນປະໂຫຍດ ແລະ ສະກັດກັ້ນປະກົດການຫຍໍ້ທໍ້ຂອງຊາວໜຸ່ມ-ເຍົາວະຊົນ” ເພື່ອສົ່ງເສີມຄະນະຊາວໜຸ່ມປະຊາຊົນປະຕິວັດລາວແຕ່ລະຂັ້ນ ແລະ ບັນດາຂະແໜງການທີ່ກ່ຽວຂ້ອງພັດທະນາແຜນການ ແລະ ແຜນດຳເນີນງານທີ່ກ່ຽວກັບຊາວໜຸ່ມ-ເຍົາວະຊົນທີ່ເປັນອັນລວມຂອງປະເທດ, ເພື່ອສືບຕໍ່ພັດທະນາດັດສະນີພາຍການພັດທະນາຊາວໜຸ່ມພາຍໃນປະເທດໂດຍຕິດພັນກັບການປະກອບສ່ວນເຂົ້າໃນການສ້າງດັດສະນີພາຍການພັດທະນາຊາວໜຸ່ມອາຊຽນ ແລະ ສາກົນ.

ສະນັ້ນ, ສູນກາງຊາວໜຸ່ມປະຊາຊົນປະຕິວັດລາວ ຈຶ່ງໄດ້ມີການປຶກສາຫາລືກັບບັນດາກະຊວງ, ອົງການທີ່ກ່ຽວຂ້ອງ, ອົງການຈັດຕັ້ງສາກົນ ແລະ ອົງການຈັດຕັ້ງທາງສັງຄົມ ກ່ຽວກັບເຫດຜົນ, ຄວາມຈຳເປັນໃນການສ້າງຍຸດທະສາດການພັດທະນາຊາວໜຸ່ມ, ເຍົາວະຊົນລາວ ເຊິ່ງແນວຄວາມຄິດເບື້ອງຕົ້ນກ່ຽວກັບການພັດທະນາຍຸດທະສາດການພັດທະນາຊາວໜຸ່ມ-ເຍົາວະຊົນ ພ້ອມດ້ວຍແຜນປະຕິບັດງານໄດ້ຮັບການສ້າງຂຶ້ນ ແລະ ຮັບຮອງເອົາເພື່ອຮັບປະກັນການດຳເນີນງານຂອງຂະບວນການຍຸດທະສາດ, ກົນໄກການປະສານງານ ແລະ ກົນໄກການຈັດຕັ້ງປະຕິບັດໄດ້ຮັບການສ້າງຕັ້ງຂຶ້ນ, ກົນໄກດັ່ງກ່າວ ລວມມີການສ້າງຕັ້ງຄະນະກຳມະການຊີ້ນຳລະດັບຊາດ, ທີມງານວິຊາການ ແລະ ກອງເລຂາ. ຈາກນັ້ນ ມີການສ້າງໂຄງຮ່າງ, ກຳນົດຂົງເຂດບຸລິມະສິດ ໂດຍກຳນົດຄຳຖາມຊີ້ນຳການຄົ້ນຄວ້າແຕ່ລະຂົງເຂດ ແລະ ໄດ້ສັງລວມເອກະສານອ້າງອີງຂອງແຕ່ລະຂົງເຂດບຸລິມະສິດ ໂດຍສະເພາະ ອົງການເຄືອຂ່າຍສະຫະປະຊາຊາດເປັນຕົ້ນ ອົງການສະຫະປະຊາຊາດກອງທຶນສຳລັບປະຊາກອນ (UNFPA ໄດ້ສະໜັບສະໜູນດ້ານວິຊາການ ແລະ ງົບປະມານໃນທຸກຂັ້ນຕອນຂອງການພັດທະນາຍຸດທະສາດດັ່ງກ່າວນີ້. ນອກນີ້ ຍັງມີອົງການສະຫະປະຊາຊາດ ເພື່ອການສຶກສາ, ວິທະຍາສາດ ແລະ ວັດທະນະທຳ (UNESCO) ທີ່ໄດ້ສະໜັບສະໜູນໃນຂັ້ນຕອນການຮ່າງຍຸດທະສາດ.

ຍຸດທະສາດສະບັບນີ້ ແມ່ນໄດ້ອີງໃສ່ກົດໝາຍວ່າດ້ວຍຄະນະຊາວໜຸ່ມປະຊາຊົນປະຕິວັດລາວ ສະບັບປັບປຸງປີ 2019, ຜົນຂອງການວິເຄາະສະພາບຊາວໜຸ່ມ-ເຍົາວະຊົນ ໃນປີ 2014 ແລະ ອີງໃສ່ແຜນຍຸດທະສາດ 5 ປີ ຂອງສູນກາງຊາວໜຸ່ມ ປະຊາຊົນ ປະຕິວັດລາວ, ໄດ້ລິເລີ່ມການສົນທະນາເພື່ອສ້າງຍຸດທະສາດການພັດທະນາຊາວໜຸ່ມ, ເຍົາວະຊົນ ໃນປີ 2016. ບົດລາຍງານດ້ານວິຊາການ, ເອກະສານ ແລະ ຂໍ້ມູນຈາກແຫຼ່ງຕ່າງໆທີ່ມີຢູ່ແລ້ວ ໄດ້ຖືກນຳມາທົບທວນ, ໄດ້ເກັບກຳຂໍ້ມູນເພື່ອກຳນົດບັນຫາ, ຄວາມຕ້ອງການຂອງຊາວໜຸ່ມ-ເຍົາວະຊົນ ໃຫ້ສອດຄ່ອງກັບຄວາມເປັນຈິງ ແລະ ໄດ້ນຳພາຂະບວນການສ້າງຍຸດທະສາດການ

ພັດທະນາຊາວໜຸ່ມ, ເຍົາວະຊົນລາວ (2021-2030) ໂດຍຜ່ານກອງປະຊຸມປຶກສາຫາລືລະດັບວິຊາການ ແລະ ລະດັບຊາດຫຼາຍຄັ້ງ.

ທາງຄະນະຮັບຜິດຊອບໄດ້ມີມາດຕະການອັນຈຳເປັນ ເພື່ອຮັບປະກັນການມີສ່ວນຮ່ວມຢ່າງເລິກເຊິ່ງຂອງຊາວໜຸ່ມ-ເຍົາວະຊົນ ຮ່ວມກັບການນຳທີ່ມີບົດບາດຕັດສິນໃນຂະບວນການສ້າງຍຸດທະສາດ ແລະ ຮັບປະກັນວ່າທິດທາງຍຸດທະສາດສອດຄ່ອງກັບຄວາມຕ້ອງການ, ຄວາມຈຳເປັນ, ຄວາມປາຖະໜາຂອງຊາວໜຸ່ມ, ເຍົາວະຊົນທຸກຄົນໂດຍບໍ່ຈຳແນກຄວາມແຕກຕ່າງໃດໆເພື່ອແນ່ໃສ່ພັດທະນາຊາວໜຸ່ມ-ເຍົາວະຊົນ ແລະ ໝົດທຸກຄົນຕ້ອງຖືກພັດທະນາໄປພ້ອມກັນ.

ເພື່ອເຮັດໃຫ້ຍຸດທະສາດດັ່ງກ່າວ ໄດ້ກາຍເປັນຂອງຂະແໜງການຕ່າງໆ ທີ່ປະຕິບັດແຜນງານກ່ຽວກັບຊາວໜຸ່ມ, ເຍົາວະຊົນຢ່າງແທ້ຈິງ ແລະ ມີການເຄື່ອນໄຫວຢ່າງມີປະສິດທິພາບສູງ ໄດ້ຮຽກຮ້ອງໃຫ້ມີການປະກອບສ່ວນຢ່າງຕັ້ງໜ້າຂອງທຸກພາກສ່ວນ ລວມທັງປະຊາຊົນບັນດາເຜົ່າທຸກທົ່ວໜ້າ ຈົ່ງພ້ອມກັນສະໜັບສະໜູນ ແລະ ປະກອບສ່ວນເຂົ້າໃນການຈັດຕັ້ງປະຕິບັດຍຸດທະສາດສະບັບນີ້ຈົນສຸດຄວາມສາມາດ.

ໃນນາມຄະນະບໍລິຫານງານສູນກາງຊາວໜຸ່ມ ປະຊາຊົນ ປະຕິວັດລາວ, ຂ້າພະເຈົ້າຂໍຊົມເຊີຍ ແລະ ຂອບໃຈຢ່າງຈິງໃຈມາຍັງທຸກໆທ່ານທີ່ໄດ້ອອກເຫື່ອເທແຮງທັງກຳລັງໃຈກຳລັງກາຍ, ຄວາມຮູ້ຄວາມສາມາດ, ສຸມທຸກສະຕິປັນຍາຂອງຕົນ ເຂົ້າໃນການຄົ້ນຄວ້າກຳນົດຍຸດທະສາດການພັດທະນາຊາວໜຸ່ມ, ເຍົາວະຊົນລາວ ສະບັບປະຫວັດສາດນີ້ ແລະ ຫວັງຢ່າງຍິ່ງວ່າຍຸດທະສາດສະບັບນີ້ ຈະເປັນປະໂຫຍດຫຼາຍໃຫ້ແກ່ການປະຕິບັດຕົວຈິງຂອງແຕ່ລະພາກສ່ວນ, ເຖິງຢ່າງໃດກໍ່ຕາມຍຸດທະສາດສະບັບນີ້ອາດຍັງບໍ່ທັນຄົບຖ້ວນສົມບູນເທົ່າທີ່ຄວນ. ສະນັ້ນ, ເພື່ອເຮັດໃຫ້ຍຸດທະສາດສະບັບນີ້ ມີຄວາມຄົບຖ້ວນແລະສົມບູນຂຶ້ນຕື່ມຈຶ່ງສະເໜີໃຫ້ທ່ານປະກອບຄຳເຫັນມາຍັງສູນກາງຊາວໜຸ່ມ ປະຊາຊົນ ປະຕິວັດລາວ, ພວກເຮົາຍິນດີທີ່ຈະພິຈາລະນາທຸກຂໍ້ສະເໜີເພື່ອປັບປຸງຍຸດທະສາດສະບັບນີ້ໃຫ້ສົມບູນຍິ່ງຂຶ້ນ.

**ຄະນະບໍລິຫານງານສູນກາງຊາວໜຸ່ມປະຊາຊົນປະຕິວັດລາວ**

**ເລຂາ**

**ອາລຸນໄຊ ສູນນະລາດ**



# ຄຳເຫັນ

ຜູ້ຕາງໜ້າ ອົງການສະຫະປະຊາຊາດ ກອງທຶນສຳລັບປະຊາກອນ

ສ ປ ປ ລາວ ມີປະຊາກອນຫຼາຍກວ່າເຄິ່ງໜຶ່ງທີ່ມີອາຍຸຕໍ່າກວ່າ 25 ປີ ແລະ ເປັນໜຶ່ງໃນບັນດາປະເທດໃນພາກພື້ນທີ່ມີປະຊາກອນໜຸ່ມທີ່ສຸດເຊິ່ງຈະເປັນກຳລັງແຮງໃນການຊຸກຍູ້ການພັດທະນາເສດຖະກິດ-ສັງຄົມຂອງປະເທດໃນບັນດາຊຸມປີຕໍ່ໜ້ານີ້. ໃນອີກສອງທົດສະວັດຕໍ່ໜ້ານີ້ ຈະເປັນໂອກາດທີ່ສຳຄັນຕໍ່ກັບຜົນປະໂຫຍດທີ່ຈະໄດ້ຮັບ "ຜົນປະໂຫຍດດ້ານປະຊາກອນ", ການເຕີບໂຕທາງດ້ານເສດຖະກິດທີ່ເລັ່ງລັດ, ຖ້າວ່າໄວໜຸ່ມຫາກໄດ້ຮັບການພັດທະນາ, ການສຶກສາ, ສ້າງຄວາມເຂັ້ມແຂງ ແລະ ເຂົ້າເຖິງໂອກາດ ທາງດ້ານເສດຖະກິດ ແລະ ມີວຽກເຮັດງານທຳທີ່ເໝາະສົມແລ້ວ. ສປປ ລາວ ຈະໄດ້ຮັບຜົນປະໂຫຍດທາງດ້ານປະຊາກອນຈາກການລົງທຶນເພື່ອພັດທະນາຊັບພະຍາກອນມະນຸດແບບມີຍຸດທະສາດ ແລະ ໃຫ້ທັນເວລາໂດຍສະເພາະ ແມ່ນ ເຍົາວະຊົນ ແລະ ຊາວໜຸ່ມທີ່ສາມາດຫັນປ່ຽນເສດຖະກິດສັງຄົມຂອງປະເທດໃຫ້ດີຂຶ້ນ.

ສປປລາວໄດ້ມີຄວາມຄືບໜ້າຫຼາຍດ້ານໃນສອງສາມທົດສະວັດທີ່ຜ່ານມາເປັນຕົ້ນແມ່ນການຂະຫຍາຍໂອກາດການເຂົ້າເຖິງການສຶກສາ, ການຫຼຸດຜ່ອນອັດຕາການຕາຍຂອງແມ່, ການສ້າງໂອກາດໃຫ້ເດັກຍິງເຂົ້າເຖິງການສຶກສາ ແລະ ການຫຼຸດຜ່ອນຄວາມທຸກຍາກ. ເຖິງຢ່າງໃດກໍ່ຕາມ, ສິ່ງທ້າທາຍຕໍ່ການພັດທະນາຊັບພະຍາກອນມະນຸດຍັງຄົງມີ ເຊັ່ນ: ອັດຕາປະລະການຮຽນທີ່ສູງ (ໂດຍສະເພາະເດັກຍິງໃນຊັ້ນມັດທະຍົມ), ການຖືພາກ່ອນໄວອັນຄວນ, ການແຕ່ງງານແຕ່ອາຍຸຍັງນ້ອຍ ແລະ ບັນຫາແຮງງານເດັກ. ນອກຈາກສິ່ງທ້າທ້າຍທີ່ກ່າວມານັ້ນ, ຍັງມີການລະບາດຂອງພະຍາດ COVID 19 ແມ່ນໄດ້ເພີ້ມທະວີຄວາມຮຸນແຮງການປົກປ້ອງສິດທິຂອງ ເຍົາວະຊົນ ແລະ ຊາວໜຸ່ມ, ການແກ້ໄຂບັນຫາກ່ຽວກັບສຸຂະພາບຈະເລີນພັນ, ສຸຂະພາບທາງເພດ, ການສຶກສາ, ການຝຶກອົບຮົມດ້ານວິຊາຊີບ, ທັກສະຊີວິດທີ່ຈຳເປັນ ແລະ ການປົກປ້ອງຈະ ສາມາດປັບປຸງດ້ານສຸຂະພາບ ແລະ ໝາກຜົນຂອງການພັດທະນາສຳລັບເຂົາເຈົ້າກໍ່ຄືປະເທດຊາດ. ນະວັດຕະກຳໃໝ່ໆເຊັ່ນ: ແຜນງານ ນາງນ້ອຍ ແມ່ນຕົວຢ່າງທີ່ດີຂອງການລົງທຶນໃສ່ໄວໜຸ່ມແບບຮອບດ້ານ.

ຂ້າພະເຈົ້າມີຄວາມຍິນດີເປັນຢ່າງຍິ່ງທີ່ຍຸດທະສາດການພັດທະນາຊາວໜຸ່ມ, ເຍົາວະຊົນແຫ່ງຊາດ ຄັ້ງທຳອິດນີ້ ໄດ້ຮັບການພັດທະນາໂດຍຜ່ານຂະບວນການປຶກສາຫາລືກັບ ຊາວໜຸ່ມ ເຍົາວະຊົນທົ່ວສັງຄົມ, ບັນດາກະຊວງ, ອົງການຈັດຕັ້ງສາກົນ, ອົງການຈັດຕັ້ງທາງສັງຄົມ, ຄູ່ຮ່ວມພັດທະນາທຸກພາກສ່ວນທີ່ກ່ຽວຂ້ອງ. ສິ່ງເຫຼົ່ານີ້ໄດ້ສະທ້ອນໃຫ້ເຫັນເຖິງສະພາບການ, ຄວາມຮຽກຮ້ອງຕ້ອງການທີ່ຈຳເປັນ ແລະວິທີການແກ້ໄຂບັນຫາຕ່າງໆທີ່ກ່ຽວຂ້ອງກັບຊາວໜຸ່ມ ທີ່ມີຄວາມຫຼາກຫຼາຍໃນ ສ ປ ປ ລາວ ເຊິ່ງໄດ້ຍົກໃຫ້ເຫັນບັນດາຂົງເຂດວຽກງານບຸລິມະສິດ. ການນຳໃຊ້ບົດຮຽນ ແລະ ແບບຢ່າງທີ່ດີຈາກທ້ອງຖິ່ນ, ພາກພື້ນ ແລະ ສາກົນເຫຼົ່ານີ້ໄດ້ໃຫ້ຄຳແນະນຳກ່ຽວການອຳນວຍຄວາມສະດວກ ໃນການຈັດຕັ້ງປະຕິບັດວຽກງານດ້ານການສຶກສາ, ການມີວຽກເຮັດງານທຳ, ການປົກປ້ອງ, ການນຳພາ ແລະ ການມີສ່ວນຮ່ວມຂອງເຍົາວະຊົນ ແລະ ຊາວໜຸ່ມຢ່າງຮອບດ້ານ. ຂໍ້ສະເໜີແນະ ແລະ ວິທີການແກ້ໄຂບັນຫາທີ່ໄດ້ລະບຸໃນຍຸດທະສາດນີ້ແມ່ນອີງໃສ່ຫຼັກຖານ, ການປະຕິບັດຕົວຈິງແລະ ການມີສ່ວນຮ່ວມຂອງທຸກພາກສ່ວນ.

ຂ້າພະເຈົ້າເຊື່ອໝັ້ນວ່າ ຍຸດທະສາດສະບັບນີ້ຈະເປັນກຸນແຈທີ່ສຳຄັນໃນ ການຈັດຕັ້ງປະຕິບັດວິໄສທັດໃຫ້ປະກົດຜົນເປັນຈິງ ທີ່ວ່າ ຈະບໍ່ປ່ອຍໃຫ້ໄວໜຸ່ມຄົນໃດໄວ້ຂ້າງຫຼັງ ຂອງການພັດທະນາ. ການປະກາດນຳໃຊ້ຍຸດທະສາດດັ່ງກ່າວໃນຂັ້ນສູນກາງ, ແຂວງ, ເມືອງ ແລະ ທ້ອງຖິ່ນ, ໃນຊຸມປີຕໍ່ໜ້ານີ້ ຈະເປັນສິ່ງອຳນວຍຄວາມສະດວກໃຫ້ແກ່ການພັດທະນາຊັບພະຍາກອນມະນຸດ ແລະ ການສົ່ງເສີມສິດທິຂອງເຍົາວະຊົນ ແລະ ຊາວໜຸ່ມ ໃຫ້ປະກົດເປັນຈິງ. ອີກປະການໜຶ່ງທີ່ສຳຄັນໃນການຈັດຕັ້ງປະຕິບັດຜັນຂະຫຍາຍຍຸດທະສາດນີ້ໃຫ້ທ່ວງທັນທັນເວລາ, ບັນລຸຕາມເປົ້າໝາຍ ແລະ ເປັນການປະກອບສ່ວນເຂົ້າໃນການປະຕິບັດຄຳໝັ້ນໝາຍຂອງ ສປປ ລາວ ທີ່ໃຫ້ໄວ້ຕໍ່ກັບກອງປະຊຸມສາກົນກ່ຽວກັບປະຊາກອນ ແລະ ການພັດທະນາ ແລະ ແຜນພັດທະນາເສດຖະກິດສັງຄົມ ຄັ້ງທີ 9, ການຫຼຸດພົ້ນອອກຈາກສະຖານະປະເທດດ້ອຍພັດທະນາ ແລະ ເປົ້າໝາຍການພັດທະນາແບບຍືນຍົງ.

ອົງການສະຫະປະຊາຊາດກອງທຶນສຳລັບປະຊາກອນ ຂໍສະແດງຄວາມຊົມເຊີຍ ມາຍັງສູນກາງຊາວໜຸ່ມປະຊາຊົນປະຕິວັດລາວ ແລະ ລັດຖະບານແຫ່ງ ສປປ ລາວ ທີ່ໃຫ້ຄວາມຍັ້ງຢືນຄວາມສຳຄັນໃນການປົກປ້ອງສິດທິຂອງເຍົາວະຊົນ ແລະ ຊາວໜຸ່ມ. ອົງການສະຫະປະຊາຊາດກອງທຶນສຳລັບປະຊາກອນ ຈະສືບຕໍ່ໃຫ້ການສະໜັບສະໜູນແກ່ຊາວໜຸ່ມລາວ.



**ທ່ານ ນາງ ມາຣຽມ ເອ ຄານ**

**ຜູ້ຕາງໜ້າ ອົງການສະຫະປະຊາຊາດ ກອງທຶນສຳລັບປະຊາກອນ,**
**ປະຈຳ ສປປ ລາວ**

# I. ພາກສະເໜີ



# 1. ສະພາບລວມ

## 1.1. ສະພາບການສາກົນ ແລະ ພາກພື້ນ

ສະພາບເສດຖະກິດຂອງໂລກ ແລະ ພາກພື້ນ ໂດຍລວມຍັງສືບຕໍ່ຂະຫຍາຍຕົວຊັກຊ້າ, ບໍ່ມີສະຖຽນລະພາບ, ເສດຖະກິດຂອງອາເມລິກາ, ສະຫະພາບເອີຣົບ ແລະ ສປ ຈີນ ຂະຫຍາຍຕົວຕໍ່າກວ່າລະດັບທີ່ຄາດຄະເນໄວ້. ສະເພາະເສດຖະກິດຂອງບັນດາປະເທດອາຊີຕາເວັນອອກສ່ຽງໃຕ້ ຫຼື ບາງບັນດາປະເທດໃນກຸ່ມອາຊຽນ (ໂດຍສະເພາະໄທ ແລະ ຫວຽດນາມ) ຊຶ່ງເປັນຄູ່ຄ້າທີ່ສໍາຄັນຂອງ ສປປ ລາວ ຍັງສືບຕໍ່ຂະຫຍາຍຕົວໃນລະດັບດີ, ແຕ່ເຖິງຢ່າງໃດກໍ່ຕາມໄພວ່າງງານຍັງຄົງເປັນບັນຫາໃຫຍ່ສໍາລັບຊາວໜຸ່ມໃນທົ່ວໂລກ. ອີງຕາມບົດລາຍງານຂອງອົງການ ສປຊ ເພື່ອຊາວໜຸ່ມ 2015, ຈໍານວນຊາວໜຸ່ມຫຼາຍກວ່າ 73 ລ້ານຄົນໃນທົ່ວໂລກກໍາລັງປະສົບກັບໄພວ່າງງານ, ໃນບາງປະເທດອັດຕາວ່າງງານຂອງຊາວໜຸ່ມເພີ່ມຂຶ້ນສູງກວ່າ 50%, ໃນກຸ່ມປະເທດທີ່ມີລາຍໄດ້ຕໍ່າ ແລະ ລາຍໄດ້ປານກາງການວ່າງງານໃນຂະແໜງການບໍ່ເປັນທາງການ[1] ຖືວ່າເປັນບັນຫາໃຫຍ່ ແລະ ເປັນສິ່ງທ້າທາຍຫຼາຍທີ່ຊາວໜຸ່ມກໍາລັງປະເຊີນໃນປະຈຸບັນ (UN Youth Report 2015).

ໃນທົ່ວໂລກ, ການມີສ່ວນຮ່ວມຂອງຊາວໜຸ່ມເຂົ້າໃນຂະບວນການຕັດສິນບັນຫາທີ່ພົວພັນກັບຊີວິດຂອງເຂົາເຈົ້າເອງຍັງຢູ່ໃນລະດັບຂ້ອນຂ້າງຕໍ່າ, ການມີສ່ວນຮ່ວມໃນດ້ານການເມືອງຍັງບໍ່ມີໂຄງສ້າງ ແລະ ຊ່ອງທາງທີ່ຊັດເຈນ ໂດຍສະເພາະເຫັນໄດ້ຈາກຈໍານວນຊາວໜຸ່ມທີ່ເປັນຕົວແທນໃນສະພາຍັງບໍ່ທັນສູງ, ການເຂົ້າເປັນສະມາຊິກພັກການເມືອງກໍ່ຍັງຕໍ່າ; ໃນຊຸມປີມໍ່ໆມານີ້, ການມີສ່ວນຮ່ວມໃນຮູບແບບການສະແດງອອກຢ່າງເປັນທາງການໄດ້ຫຼຸດລົງ, ແຕ່ການສະແດງອອກຜ່ານສື່ສັງຄົມອອນລາຍແມ່ນເພີ່ມສູງຂຶ້ນ, ທັງນີ້ກໍ່ຍ້ອນຄວາມກ້າວໜ້າຂອງເທັກໂນໂລຊີການສື່ສານ (ICT) ແລະ ການເຂົ້າເຖິງມືຖືລຸ້ນໃໝ່ໄດ້ເຮັດໃຫ້ຊາວໜຸ່ມທີ່ມີໂອກາດສະແດງອອກຮູບແບບດັ່ງກ່າວໄດ້ດີກວ່າ.

ໃນຂະນະທີ່ຊາວໜຸ່ມພວມປະເຊີນກັບໄພວ່າງງານຍ້ອນການເຂົ້າສູ່ຕະຫຼາດແຮງງານທີ່ຫຼ້າຊ້າ ຫຼື ບໍ່ເຕັມເມັດເຕັມໜ່ວຍ, ລັດຖະບານຫຼາຍປະເທດກໍາລັງສຸມໃສ່ການສົ່ງເສີມການປະກອບການທຸລະກິດຂອງຊາວໜຸ່ມ, ການປະກອບການທີ່ສາມາດແກ້ໄຂບັນຫາໄພວ່າງງານ ແລະ ກາຍ ເປັນອາຊີບທາງເລືອກທີ່ດີຢ່າງແທ້ຈິງໃຫ້ກັບຊາວໜຸ່ມມາແລ້ວເປັນຈໍານວນຫຼວງຫຼາຍ (World Youth Report, 2015). ການລິເລີ່ມ, ການພັດທະນາທັກສະຕ່າງໆລ້ວນແຕ່ມາຈາກການສຶກສາ ບໍ່ວ່າຈະເປັນໃນລະບົບ ແລະ ນອກລະບົບ, ການສຶກສາເປັນສິ່ງສໍາຄັນໃນການພັດທະນາ ແລະ ປັບປຸງຊີວິດການເປັນຢູ່ຂອງຊາວໜຸ່ມທົ່ວໂລກ ສະນັ້ນ, ຫຼາຍປະເທດໄດ້ຖືເອົາການສຶກສາເປັນບຸລິມະສິດເພື່ອເປັນກຸນແຈໄປສູ່ການພັດທະນາຂົງເຂດອື່ນໆ. ທົ່ວໂລກໄດ້ຕົກລົງເຫັນດີກໍານົດເປົ້າໝາຍການພັດທະນາສະຫັດສະວັດ ແລະ ເປົ້າໝາຍການພັດທະນາແບບຍືນຍົງທີ່ກວມເອົາການພັດທະນາຊາວໜຸ່ມ-ເຍົາວະຊົນ. ນອກຈາກນັ້ນ, ຍັງມີໂຄງການປະຕິບັດງານຂອງໂລກສະເພາະສໍາລັບຊາວໜຸ່ມ. ຢ່າງໃດກໍ່ຕາມ, ເຖິງວ່າການພັດທະນາການສຶກສາໂດຍສະເພາະຢູ່ປະເທດທີ່ກໍາລັງພັດທະນາແມ່ນໄດ້ຮັບການປັບປຸງດີຂຶ້ນໃນຂັ້ນປະຖົມ, ແຕ່ຄວາມຄືບໜ້າໃນຂັ້ນມັດທະຍົມ ແລະ ຂັ້ນທີ່ສູງຂຶ້ນໄປແມ່ນຍັງບໍ່ທັນເຮັດໄດ້ດີ ຊາວໜຸ່ມ, ເຍົາວະຊົນໃນທົ່ວໂລກ ກໍ່ກໍາລັງປະເຊີນກັບຫຼາຍບັນຫາໂດຍສະເພາະຕິດພັນກັບດ້ານສຸຂະພາບຫຼາຍຢ່າງທັງພະຍາດຕິດຕໍ່ທາງເພດສໍາພັນ, ການບໍລິໂພກສິ່ງມຶນເມົາ, ການໃຊ້ສານເສບຕິດ ແລະ ອື່ນໆທັງນີ້ກໍ່ຍ້ອນຄວາມຊິນເຄີຍ ແລະ ສຸຂະອະນາໄມທີ່ບໍ່ດີ, ພຶດຕິກໍາສ່ຽງ, ຂາດສຸຂາພິບານຂັ້ນພື້ນຖານ ໂດຍສະເພາະຢູ່ບັນດາປະເທດທີ່ກໍາລັງພັດທະນາ (UN Youth Report 2015).

---

[1] *ຂະແໜງການບໍ່ແມ່ນທາງການໝາຍເຖິງຂະແໜງການເສດຖະກິດທີ່ຍັງບໍ່ໝັ້ນຄົງ, ຍັງບໍເປັນທາງການ, ຍັງບໍ່ເຂົ້າໃນລະບຽບຫຼັກການ ແລະ ຍັງບໍ່ໄດ້ຮັບການປົກປ້ອງຈາກລະບຽບກົດໝາຍຢ່າງເຕັມສ່ວນ (ອົງການແຮງງານສາກົນ, 2018). https://stats.oecd.org/glossary/detail.asp?ID=778*

## 1.2. ສະພາບດ້ານເສດຖະກິດ-ສັງຄົມໃນ ສປປ ລາວ

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ (ສປປ ລາວ) ມີສະຖຽນລະພາບທາງດ້ານການເມືອງຢ່າງຕໍ່ເນື່ອງ, ສັງຄົມມີຄວາມສະຫງົບ, ເສດຖະກິດສືບຕໍ່ຂະຫຍາຍຕົວໃນລະດັບດີ ຖ້າທຽບໃສ່ຫຼາຍໆປະເທດໃນພາກພື້ນ; ການດຳເນີນທຸລະກິດ ແລະ ການຜະລິດຂອງປະຊາຊົນໂດຍພື້ນຖານຍັງສືບຕໍ່ດຳເນີນໄປຢ່າງປົກກະຕິ; ດ້ານການພັດທະນາຊັບພະຍາກອນມະນຸດ, ການແກ້ໄຂຄວາມທຸກຍາກ, ການເຂົ້າເຖິງການສຶກສາ ແລະການບໍລິການສາທາລະນະສຸກມີການປັບປຸງດີຂຶ້ນເລື້ອຍໆ,ດ້ານວັດທະນະທຳຮີດຄອງປະເພນີອັນດີງາມຂອງຊາດໄດ້ຮັບການອະນຸລັກ ແລະ ເຜີຍແຜ່ຢ່າງກວ້າງຂວາງ; ດ້ານສິ່ງແວດລ້ອມ, ຊັບພະຍາກອນປ່າໄມ້ ແລະ ການຮັກສາຕົ້ນກຳເນີດຂອງແຫຼ່ງນໍ້າໄດ້ຮັບການເອົາໃຈໃສ່ຢ່າງຈິງຈັງ, ການນຳໃຊ້ຊັບພະຍາກອນທຳມະຊາດໄດ້ມີປະສິດທິຜົນສູງຂຶ້ນ, ມີຄວາມພ້ອມໃນການຮັບມືກັບໄພພິບັດດີຂຶ້ນເປັນກ້າວໆ, ຍຸດທະສາດການເຕີບໂຕສີຂຽວແຫ່ງຊາດໄດ້ຮັບການຮັບຮອງໂດຍລັດຖະບານ.

ເສດຖະກິດຂອງ ສປປ ລາວ ມີການຂະຫຍາຍຕົວຢ່າງມີສະຖຽນລະພາບ ສປປ ລາວ ໄດ້ສຸມທຸກກຳລັງເພື່ອບັນລຸເງື່ອນໄຂຂອງການຫຼຸດພົ້ນອອກຈາກສະຖານະພາບປະເທດທີ່ພັດທະນາໜ້ອຍ (LDC) ພາຍໃນປີ 2020[2]. ໃນປີ 2017, ລາຍຮັບຕໍ່ຫົວຄົນບັນລຸ USD 2.330. ແຕ່ເຖິງຢ່າງໃດກໍຕາມ, ປະຊາກອນຈຳນວນ 23,2% ຍັງດຳລົງຊີວິດຢູ່ພາຍໃຕ້ຄວາມທຸກຍາກ (ADB, 2018). ການເຕີບໂຕດ້ານເສດຖະກິດຍັງຂຶ້ນກັບການນຳໃຊ້ຊັບພະຍາກອນທຳມະຊາດຢ່າງໜັກໜ່ວງ ແລະ ໂຄງການພັດທະນາຕ່າງໆຍັງບໍ່ສາມາດສ້າງວຽກເຮັດງານທຳໃຫ້ຊາວໜຸ່ມໄດ້ເທົ່າທີ່ຄວນ ແລະ ລັດຖະບານ ພວມພະຍາຍາມຊຸກຍູ້ໂຄງສ້າງເສດຖະກິດກ້າວໄປສູ່ການເຕີບໂຕທີ່ມາຈາກຫຼາກຫຼາຍຂະແໜງການ, ທຸກຄົນມີສ່ວນຮ່ວມ ແລະ ມີຄວາມຍືນຍົງ (VNR, 2018). ແນ່ນອນ, ຊາວໜຸ່ມ, ເຍົາວະຊົນ ຖ້າຫາກໄດ້ຮັບການພັດທະນາຄວາມຮູ້ ແລະ ທັກສະທີ່ຈຳເປັນຈະກາຍເປັນແຮງຂັບເຄື່ອນສຳລັບການພັດທະນາເສດຖະກິດ-ສັງຄົມແບບທົ່ວເຖິງ ແລະ ຍືນຍົງຂອງປະເທດເຮົາ. ດັ່ງນັ້ນ, ການລົງທຶນໃສ່ຊາວໜຸ່ມ-ເຍົາວະຊົນ ຈຶ່ງມີຄວາມສຳຄັນ ແລະ ຈຳເປັນເພື່ອບັນລຸເຖິງເປົ້າໝາຍການພັດທະນາເສດຖະກິດ-ສັງຄົມແຫ່ງຊາດຄັ້ງທີ 8 (2016-2020) ແລະ ເປົ້າໝາຍການພັດທະນາແບບຍືນຍົງ (2030).

## 1.3 ສະພາບດ້ານປະຊາກອນ

ສປປ ລາວ ເປັນປະເທດທີ່ມີປະຊາກອນໜຸ່ມອາຍຸ 10 ຫາ 35 ປີຫຼາຍກວ່າເຄິ່ງໜຶ່ງ (50,8%) ຂອງປະຊາກອນທັງໝົດ[3] (Lao Statistics Bureau [LSB], 2015). ປະຊາກອນກຸ່ມນີ້ປຽບເໝືອນແຮງຂັບເຄື່ອນເສດຖະກິດ, ສະຫວັດດີພາບຂອງສັງຄົມ, ຄວາມຈະເລີນກ້າວໜ້າຂອງປະເທດ ທັງໃນປັດຈຸບັນ ແລະ ອະນາຄົດ. ສະນັ້ນ, ການມີຍຸດທະສາດທີ່ຖືກຕ້ອງ, ການລົງທຶນເຂົ້າໃສ່ການພັດທະນາຊາວໜຸ່ມ, ເຍົາວະຊົນຢ່າງເໝາະສົມ ແລະ ມີປະສິດທິຜົນຈຶ່ງມີຄວາມສຳຄັນຕັດສິນຊີ້ຂາດການພັດທະນາຂອງຊາດຢ່າງບໍ່ຕ້ອງສົງໃສ, ການລົງທຶນເຂົ້າໃນການພັດທະນາຊາວໜຸ່ມ-ເຍົາວະຊົນ ເປັນໝາກຫົວໃຈຂອງການປັບປຸງດ້ານອື່ນໆ ເຊັ່ນ: ດ້ານສາທາລະນະສຸກ, ດ້ານການພັດທະນາກຳລັງແຮງງານຂອງສັງຄົມ, ການຫຼຸດຜ່ອນຄວາມທຸກຍາກ, ການເພີ່ມທະວີຄວາມສະເໝີພາບດ້ານບົດບາດຍິງ-ຊາຍ ແລະ ດ້ານການພັດທະນາເສດຖະກິດ ແລະ ສັງຄົມຂອງຊາດ. ໃນໄລຍະຜ່ານມາ ສປປ ລາວ ໄດ້ສ້າງນະໂຍບາຍ, ຍຸດທະສາດ, ແຜນງານ ແລະ ໂຄງການພັດທະນາຕ່າງໆທີ່ປະກອບສ່ວນແກ້ໄຂບັນຫາ ແລະ ຕອບສະໜອງຄວາມຮຽກຮ້ອງຕ້ອງການຂອງຊາວໜຸ່ມ, ເຍົາວະຊົນໄດ້ຫຼາຍພໍສົມຄວນ. ແຕ່ຢ່າງໃດກໍ່ຕາມລັດຖະບານຍັງຈຳເປັນຕ້ອງສ້າງຍຸດທະສາດເພື່ອເປັນທິດຊີ້ນຳທີ່ຊັດເຈນ ແລະຢືນຢັນຢ່າງໜັກແໜ້ນເຖິງຄວາມມຸ້ງມາດປາຖະໜາຂອງຊາວໜຸ່ມ-ເຍົາວະຊົນຮັບປະກັນໃຫ້ຍຸດທະສາດ

[2] *ການປະເມີນຄັ້ງທຳທິດ (ລວມທັງໝົດສາມຄັ້ງ ເພື່ອປະກາດຫຼຸດພົ້ນອອກຈາກສະຖານະພາບດັ່ງກ່າວ) ແມ່ນຜ່ານແລ້ວສອງໃນສາມເງື່ອນໄຂໃຫຍ່ໃນປີ 2018 (UNDP, 2018)*

[3] *ສູນສະຖິຕິແຫ່ງຊາດ (LSB, 2015), https://lao.unfpa.org/en/publications/results-population-and-housing-census-2015-english-version*

ການພັດທະນາຊາວໜຸ່ມ, ເຍົາວະຊົນລາວ ເປັນຍຸດທະສາດເພື່ອຊາວໜຸ່ມ, ເຍົາວະຊົນ ແລະ ໂດຍຊາວໜຸ່ມ-ເຍົາວະຊົນ. ເຊິ່ງມັນສະແດງອອກໂດຍການມີສ່ວນຮ່ວມຂອງຊາວໜຸ່ມເຍົາວະຊົນເຂົ້າໃນຂະບວນການຮ່າງຍຸດທະສາດລວມທັງການຈັດຕັ້ງປະຕິບັດ ເພື່ອຕອບສະໜອງຕາມຄວາມຕ້ອງການສະເພາະຂອງຊາວໜຸ່ມ-ເຍົາວະຊົນ. ຍຸດທະສາດການພັດທະນາຊາວໜຸ່ມ, ເຍົາວະຊົນລາວ ແມ່ນສອດຄ່ອງກັບເປົ້າໝາຍການພັດທະນາແບບຍືນຍົງ, ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ຄັ້ງທີ 9 ແລະ ວິໄສທັດ 2030 ຂອງລັດຖະບານ ເຊິ່ງຕ່າງກໍ່ຖືເອົາແຜນວຽກຊາວໜຸ່ມເປັນຈຸດໃຈກາງໃນການພັດທະນາ ເພື່ອບັນລຸຂໍ້ໄດ້ປຽບທີ່ເກີດຈາກປະຊາກອນໜຸ່ມທີ່ມີຈຳນວນຫຼາຍກວ່າປະຊາກອນກຸ່ມອື່ນໃນປະເທດ.

ສປປ ລາວ ໂຄງປະກອບດ້ານອາຍຸຂອງປະຊາກອນປ່ຽນແປງໄປໃນທິດທາງທີ່ດີຍ້ອນຈຳນວນປະຊາກອນກຳລັງກ້າວເຂົ້າສູ່ໄລຍະຂ້າມຜ່ານດ້ານປະຊາກອນໝາຍຄວາມວ່າປະຊາກອນໜຸ່ມໃນມື້ນີ້ຈະກາຍເປັນຜູ້ໃຫຍ່ໃນສອງທົດສະວັດຂ້າງໜ້າສະນັ້ນ, ມັນຈະເປັນ "ກາລະໂອກາດ" ເໝາະສົມທີ່ພວກເຮົາຕ້ອງລົງທຶນໃສ່ການພັດທະນາຊາວໜຸ່ມ-ເຍົາວະຊົນ, ເພາະວ່າມັນຈະສົ່ງຜົນໄດ້ຮັບທີ່ເອີ້ນວ່າ"ຜົນປະໂຫຍດສູງສຸດຈາກການປ່ຽນແປງດ້ານໂຄງປະກອບຂອງປະຊາກອນ". ຜົນປະໂຫຍດສູງສຸດດັ່ງກ່າວ ຈະເກີດຂຶ້ນຖ້າຫາກຊາວໜຸ່ມເຊິ່ງມີຈຳນວນຫຼາຍກວ່າປະຊາກອນກຸ່ມອື່ນທີ່ເອື່ອຍອີງດ້ານແຮງງານໄດ້ຮັບການພັດທະນາໃຫ້ກາຍເປັນກຳລັງແຮງງານທີ່ມີປະສິດທິຜົນ ແລະ ໃນທີ່ສຸດຈຶ່ງສາມາດບັນລຸຜົນປະໂຫຍດສູງສຸດຈາກການປ່ຽນແປງທາງດ້ານໂຄງປະກອບຂອງປະຊາກອນດັ່ງກ່າວ (ຜກ, 2018).

ອີງຕາມການສຳຫຼວດພົນລະເມືອງ ແລະ ຄົວເຮືອນແຫ່ງຊາດ ຄັ້ງທີ 4 ໃນປີ 2015, ລວມທັງເຍົາວະຊົນ ແລະ ຊາວໜຸ່ມ ອາຍຸລະຫວ່າງ 10 ຫາ 35 ປີ ມີທັງໝົດ 3,298,643 ຄົນ, ໃນນັ້ນປະມານ 64% ຂອງຊາວໜຸ່ມ, ເຍົາວະຊົນ ແມ່ນອາໄສຢູ່ໃນເຂດຊົນນະບົດ ແລະ ປະມານ 12% ອາໄສຢູ່ໃນເຂດຫ່າງໄກສອກຫຼີກທີ່ບໍ່ມີເສັ້ນທາງເຂົ້າເຖິງ, ພວກເຂົາເຈົ້າໄດ້ປະເຊີນກັບສິ່ງທ້າທາຍ ແລະ ຄວາມສ່ຽງຫຼາຍຢ່າງ ເຊັ່ນ: ບໍ່ສາມາດເຂົ້າເຖິງການສຶກສາ, ຂໍ້ມູນຂ່າວສານ ແລະ ການບໍລິການທາງສັງຄົມຕ່າງໆ ນອກຈາກນັ້ນ, ຊາວໜຸ່ມສ່ວນຫຼາຍໃນເຂດຊົນນະບົດ ແມ່ນມີການແຕ່ງງານໄວ, ຖືພາ ແລະ ອອກແຮງງານແຕ່ອາຍຸຍັງນ້ອຍ (ສູນສະຖິຕິແຫ່ງຊາດ 2015)

# 2. ສະພາບການພັດທະນາຊາວໜຸ່ມ, ເຍົາວະຊົນ

## 2.1. ຄຳນິຍາມຂອງຊາວໜຸ່ມ, ເຍົາວະຊົນ

ຄຳນິຍາມກ່ຽວກັບ ຊາວໜຸ່ມ-ເຍົາວະຊົນ ຍັງບໍ່ທັນເປັນເອກະສັນ ແລະ ຄຳນິຍາມຂອງແຕ່ລະປະເທດກໍ່ບໍ່ຄືກັນ. ອົງການ UNESCO ໃຫ້ທັດສະນະວ່າ ສະພາບໂຄງສ້າງຂອງປະຊາກອນ, ສະພາບການດ້ານເສດຖະກິດ, ສັງຄົມ ແລະ ວັດທະນະທຳທີ່ແຕກຕ່າງກັນ ເຮັດໃຫ້ຄຳນິຍາມຂອງຊາວໜຸ່ມແຕກຕ່າງກັນໄປ (UNESCO, 2018). ອົງການອະນາໄມໂລກ (WHO) ໃຫ້ຄຳນິຍາມ "*ຊາວໜຸ່ມ*" ວ່າແມ່ນທຸກຄົນໃນເກນອາຍຸລະຫວ່າງ 10 ຫາ 24 ປີ ແລະ ພາຍໃນກຸ່ມອາຍຸດັ່ງກ່າວໄດ້ກຳນົດກຸ່ມຍ່ອຍເອີ້ນວ່າ "*ເຍົາວະຊົນ*" ອາຍຸແຕ່ 10 ຫາ 19 ປີ ແລະ "*ອານຸຊົນ*" ແຕ່ອາຍຸ 10 ຫາ14 ປີ.

ໃນລະດັບພາກພື້ນ,ການກຳນົດເກນອາຍຸຊາວໜຸ່ມແຕກຕ່າງຈາກຄຳນິຍາມຂອງອົງການອະນາໄມໂລກທີ່ກ່າວມາເທິງນີ້. ອົງກອນຕິດຕາມການພັດທະນາຊາວໜຸ່ມຂອງອາຊຽນ (AYDI) ໄດ້ກຳນົດເກນອາຍຸຊາວໜຸ່ມແຕ່ 15 ຫາ 34 ປີ, ເຊິ່ງແຕກຕ່າງຈາກເກນອາຍຸຊາວໜຸ່ມທີ່ສູນກາງຊາວໜຸ່ມ ປະຊາຊົນ ປະຕິວັດລາວ (ສຊປລ) ໄດ້ກຳນົດໄວ້ຄື 15 ຫາ 35 ປີ (ASEAN Secretariat, 2017; LPRYU, 2017).

ສູນກາງຊາວໜຸ່ມ ປະຊາຊົນ ປະຕິວັດລາວ ໄດ້ກຳນົດເກນອາຍຸກຸ່ມຍ່ອຍ ດັ່ງນີ້:

- *ຊາວໜຸ່ມ ອາຍຸ 15 ຫາ 35 ປີ;*
- *ເຍົາວະຊົນ ອາຍຸ 9 ຫາ 14 ປີ;*
- *ອະນຸຊົນ ອາຍຸ 6 ຫາ 8 ປີ.*

ຍຸດທະສາດການພັດທະນາຊາວໜຸ່ມ, ເຍົາວະຊົນລາວ ສະບັບນີ້ໄດ້ກຳນົດອາຍຸແຕ່ 10 ຫາ 35 ປີ.




ຍຸດທະສາດການພັດທະນາຊາວໜຸ່ມ, ເຍົາວະຊົນລາວ (2021-2030) ສະບັບນີ້ ແມ່ນຖືເອົາເກນອາຍຸທີ່ສູນກາງຊາວໜຸ່ມ ປະຊາຊົນ ປະຕິວັດລາວ ໄດ້ກຳນົດໄວ້, ສິ່ງສຳຄັນແມ່ນຜູ້ທີ່ມີບົດບາດໃນການຮ່າງຍຸດທະສາດ, ການຕັດສິນໃຈໃນບັນຫາທີ່ກ່ຽວຂ້ອງກັບຊາວໜຸ່ມ-ເຍົາວະຊົນຕ້ອງເຂົ້າໃຈວ່າ ຊາວໜຸ່ມໂດຍລວມມີຄວາມຕ້ອງການ ແລະ ສິ່ງທ້າທາຍແຕກຕ່າງຈາກຜູ້ໃຫຍ່ ແລະ ຍິ່ງໄປກວ່ານັ້ນ ຊາວໜຸ່ມ-ເຍົາວະຊົນ ແຕ່ລະເກນອາຍຸກໍ່ມີຄວາມແຕກຕ່າງກັນ, ຄວາມຕ້ອງການ ແລະ ບັນຫາຂອງເຂົາເຈົ້າກໍ່ຕ່າງກັນ. ສະນັ້ນ, ການວາງຍຸດທະສາດການຊອກຊ່ອງທາງແກ້ໄຂບັນຫາ ແລະ ສິ່ງທ້າທາຍຂອງເຂົາເຈົ້າຈຶ່ງຕ້ອງແຕກຕ່າງກັນໄປ.

## 2.2. ຜົນສຳເລັດ

ໃນໄລຍະຜ່ານມາ ສູນກາງຊາວໜຸ່ມ ປະຊາຊົນ ປະຕິວັດລາວ ແລະ ສະມາຊິກທົ່ວປະເທດຍັງຮັກສາ 5 ມູນເຊື້ອຂອງຊາວໜຸ່ມຮຸ່ນກ່ອນໄດ້ ໂດຍສະເພາະຄວາມຈົ່ງຮັກພັກດີຕໍ່ພັກຄວາມເສຍສະຫຼະ, ມີຄວາມສາມັກຄີໜັກແໜ້ນເວົ້າລວມຖັນແຖວຊາວໜຸ່ມຍັງບໍ່ທັນມີບັນຫາໃຫ້ການຈັດຕັ້ງຫຍຸ້ງຍາກ, ຂະບວນການໂຄສະນາສຶກສາອົບຮົມປູກຈິດສຳນຶກເຫັນວ່າໄດ້ມີຂະບວນການພົ້ນເດັ່ນຫຼາກຫຼາຍມີຮູບການໃໝ່, ເຄື່ອງມືກໍ່ໄດ້ມີການປັບປຸງເພື່ອໃຫ້ແທດເໝາະກັບສະພາບ ແລະ ຈຸດພິເສດຂອງຊາວໜຸ່ມ, ເຍົາວະຊົນ ເປັນຕົ້ນການຈັດເວທີສົນທະນາໃນຫົວຂໍ້ຕ່າງໆ, ຂະບວນການຄາລະວານ, ການໂຄສະນາຫຼຸດຜ່ອນອຸປະຕິເຫດຕາມ

ຫີນທາງ, ຕ້ານການຄ້າມະນຸດ, ສິ່ງແວດລ້ອມ, ການນໍາໃຊ້ສັງຄົມອອນລາຍ, ຄວາມຝັນຂອງຂ້ອຍອາຊີບຂອງຂ້ອຍ, ຂະບວນການບູລະນະການຈັດຕັ້ງເປັນຕົ້ນການສ້າງນິຕິກໍາ (ກົດໝາຍ, ຍຸດທະສາດ), ສ້າງການຈັດຕັ້ງທາງສັງຄົມ, ຝຶກອົບຮົມພາຍໃນ ແລະ ຕ່າງປະເທດ, ປັບປຸງແບບແຜນ, ປັບປຸງກົນໄກ, ຂະບວນການຫັນລົງຮາກຖານຕາມສາຍຕັ້ງຂອງ ຄຊປປລ ກະຊວງອົງການ ແລະ ບັນດາແຂວງ, ຂະບວນການວິຊາສະເພາະຕາມສາຂາອາຊີບໄດ້ເອົາໃຈໃສ່ພັດທະນາຊາວໜຸ່ມ ແລະ ເຍົາວະຊົນໃຫ້ມີຄວາມຮູ້ຄວາມສາມາດ, ມີວິຊາຊີບ, ມີຄວາມຊໍານານງານເພື່ອສາມາດຮອງຮັບຄວາມຕ້ອງການຂອງຕະຫຼາດແຮງງານ, ສ້າງ ແລະ ສົ່ງເສີມບັນດາຜູ້ປະກອບການໜຸ່ມໃຫ້ນັບມື້ນັບຫຼາຍຂຶ້ນເປັນຕົ້ນການຮຽນ-ການສອນການຜະລິດທຸລະກິດຂອງນັກທຸລະກິດໜຸ່ມ, ການບໍລິການ, ຕັດຫຍິບ, ເສີມສວຍ ແລະ ວິຊາຊີບອື່ນໆ, ຂະບວນການສົ່ງເສີມພອນສະຫວັນເປັນຕົ້ນສົ່ງເສີມຜູ້ປະກອບການໃໝ່, ແຂ່ງຂັນການປະດິດ, ແຂ່ງຂັນເວົ້າເພື່ອຊາດ, ກິລາ-ສິລະປະ, ສູນກາງຊາວໜຸ່ມປະຊາຊົນ ປະຕິວັດລາວ ກໍ່ໄດ້ສຸມໃສ່ເຄື່ອນໄຫວວຽກງານເຝິກອົບຮົມຍົກລະດັບຄວາມຮູ້ຄວາມສາມາດໃຫ້ແກ່ຜູ້ນໍາພາຊາວໜຸ່ມ, ເຍົາວະຊົນ ແລະ ອະນຸຊົນເຊິ່ງມີການຕັ້ງຄ້າຍເຍົາວະຊົນຂຶ້ນເພື່ອຝຶກຝົນບົດບາດການນໍາພາ ແລະ ຄວາມກ້າສະແດງອອກເຊິ່ງມີຊາວໜຸ່ມ, ເຍົາວະຊົນ ເຂົ້າຮ່ວມເປັນຈໍານວນຫຼວງຫຼາຍ, ຂະບວນການອາສາສະໝັກຕະລຸມບອນຊ່ວຍເຫຼືອສັງຄົມແມ່ນມີປັດໃຈໃໝ່ ແລະ ພົ້ນເດັ່ນຢ່າງກວ້າງຂວາງໂດຍສືບຕໍ່ເສີມຂະຫຍາຍຄໍາຂວັນອໍາມະຕະຂອງຊາວໜຸ່ມຮຸ້ນກ່ອນທີ່ວ່າ

**“ ບ່ອນໃດຍາກຊາວໜຸ່ມບຸກ ບ່ອນໃດທຸກຊາວໜຸ່ມຜ່ານຜ່າ**
**ເມື່ອໃດຊາດຕ້ອງການຊາວໜຸ່ມຂານອາສາ ”**

ແລະ ໄດ້ຊູຄັນທຸງດັ່ງກ່າວໃນພາລະກິດ **ຊາວໜຸ່ມອາສາສະໝັກຕະລຸມບອນຊ່ວຍຜູ້ປະສົບໄພ**. ຂະບວນການພົວພັນ-ຮ່ວມມືກັບຕ່າງປະເທດເພື່ອຜັນຂະຫຍາຍແນວທາງການຕ່າງປະເທດຂອງພັກ ແລະ ຜົນການພົບປະຢ້ຽມຢາມຂອງຜູ້ນໍາໂດຍສະເພາະບັນດາປະເທດເພື່ອນມິດຍຸດທະສາດແມ່ນໄດ້ຮັບຜົນດີໄດ້ມີການພົວພັນດີກັບບັນດາປະເທດໃນພາກພື້ນ ແລະ ສາກົນເປັນເຈົ້າພາບ ແລະ ເປັນປະທານກອງປະຊຸມລັດຖະມົນຕີຊາວໜຸ່ມອາຊຽນ.

ດ້ານວຽກງານຂໍ້ມູນຂ່າວສານ ແລະ ການປະຊາສໍາພັນໄດ້ຈັດຝຶກອົບຮົມກ່ຽວກັບວຽກງານການຜະລິດສື່ ແລະ ນັກຂ່າວ, ສື່ມວນຊົນ ໃນຂອບເຂດທົ່ວປະເທດໂດຍມີຊາວໜຸ່ມເຂົ້າຮ່ວມ 50 ກວ່າສະຫາຍ, ໄດ້ຍົກລະດັບ ແລະ ຂະຫຍາຍພາຫະນະສື່ມວນຊົນຂອງຊາວໜຸ່ມ ໂດຍສະເພາະການສ້າງສະຖານີວິທະຍຸກະຈາຍສຽງຊາວໜຸ່ມສົນໄຊ ຍຸກໃໝ່ FM 90,0 MHZ ທີ່ສູນກາງຊາວໜຸ່ມ (ອອກອາກາດ 6 ໂມງເຊົ້າ - 11 ໂມງແລງ), ວິທະຍຸກະຈາຍສຽງລະບົບ AM 567KHZ 103.7MHZ ຂອງວິທະຍຸກະຈາຍສຽງແຫ່ງຊາດ, ວາລະສານລາຍເດືອນ, ໜັງສືພິມປະຈໍາອາທິດ. ລາຍການໂທລະພາບ “ເພື່ອນຊາວໜຸ່ມ” ອອກອາກາດທາງໂທລະພາບແຫ່ງຊາດລາວ, ອອກອາກາດ 4 ຊົ່ວໂມງຕໍ່ອາທິດ, ເວັບໄຊ້ຊາວໜຸ່ມ www.lpryu.gov.la ແລະ Facebook “Lao Youth Union”.

ການປະກອບສ່ວນຂອງຊາວໜຸ່ມຕໍ່ສ່ວນລວມຜ່ານມາ ເຮັດໄດ້ດີສົມຄວນ ເຊັ່ນ: ໄດ້ປະສານສົມທົບກັບຄະນະພັກ-ອໍານາດການປົກຄອງແຕ່ລະຂັ້ນ ແລະ ພາກສ່ວນທີ່ກ່ຽວຂ້ອງໃນການຄົ້ນຄວ້າແກ້ໄຂບັນຫາປະກົດການຫຍໍ້ທໍ້ທີ່ເກີດຂຶ້ນໃນຄອບຄົວ ແລະ ສັງຄົມ ໂດຍການເຜີຍແຜ່ປູກລະດົມ, ໂຄສະນາແລະຂົນຂວາຍໃຫ້ປະຊາຊົນໃຫ້ຮັບຮູ້ເຂົ້າໃຈ ແລະ ຈັດຕັ້ງປະຕິບັດລະບຽບກົດໝາຍບ້ານເມືອງຢ່າງເຂັ້ມງວດ, ເລັ່ງໃສ່ຈັດຕັ້ງປະຕິບັດຫົວໜ່ວຍພື້ນຖານຄອບຄົວ, ບ້ານ, ເມືອງເພື່ອຕ້ານ, ສະກັດກັ້ນປະກົດການທີ່ບໍ່ດີ ແລະ ສິ່ງທີ່ກີດຂວາງການພັດທະນາເປັນຕົ້ນ: ການນໍາໃຊ້, ຄ້າຢາເສບຕິດ, ການຄ້າຂາຍເຖື່ອນ, ການງັດແງະປຸ້ນຈີ້ ແລະ ການກໍ່ອາດສະຍາກໍາອື່ນໆ ເຊິ່ງສ່ວນໃຫຍ່ຜູ້ທີ່ມີສ່ວນໃນຂະບວນການແມ່ນອາຍຸຍັງຢູ່ເກນຊາວໜຸ່ມ ຫຼື ເຍົາວະຊົນ.

ສູນກາງຊາວໜຸ່ມ ປະຊາຊົນ ປະຕິວັດລາວ ໄດ້ປະກອບສ່ວນຈັດຕັ້ງປະຕິບັດໂຄງການເພື່ອນຊ່ວຍເພື່ອນ ເພື່ອຫຼຸດຜ່ອນການປະລະການຮຽນຂອງຊາວໜຸ່ມ-ເຍົາວະຊົນ, ຫຼຸດຜ່ອນການເກີດອຸປະຕິເຫດຕາມທ້ອງຖະໜົນ, ການລະເມີດກົດໝາຍຕ່າງໆ, ຊຸກຍູ້ໃຫ້ຊາວໜຸ່ມຫັນມາຫຼິ້ນກິລາຫຼາຍຂຶ້ນ; ໄດ້ຊຸກຍູ້ປະຊາຊົນບັນດາເຜົ່າ, ບັນດາຊັ້ນຄົນໃຫ້ມີຄວາມສາມັກຄີ ແລະ ເປັນເຈົ້າການໃນການແກ້ໄຂປະກົດການຫຍໍ້ທໍ້ທີ່ເກີດຂຶ້ນໃນຄອບຄົວ, ສັງຄົມໂດຍສະເພາະທີ່ເກີດຂຶ້ນກັບຊາວໜຸ່ມຍິງ. ສົ່ງເສີມສຸຂະພາບທາງດ້ານຈິດໃຈຂອງຊາວໜຸ່ມ, ເຍົາວະຊົນ ໃຫ້ດີຂຶ້ນໂດຍສ້າງພື້ນຖານໂຄງລ່າງເຕັກນິກ ເພື່ອຮັບໃຊ້ໃນການພັດທະນາຊາວໜຸ່ມເຍົາວະຊົນເປັນຕົ້ນ ສ້າງສະຫະພັນຊາວໜຸ່ມ, ວັງເຍົາວະຊົນ ແລະ ຫໍມູນເຊື້ອຊາວໜຸ່ມ, ສ້າງສູນພັດທະນາວິຊາຊີບຊາວໜຸ່ມພ້ອມທັງປະກອບວັດຖຸ ແລະ ອຸປະກອນທີ່ຈຳເປັນ.

## 2.3 ຂໍ້ຄົງຄ້າງ ແລະ ສິ່ງທ້າທາຍ

ການສຶກສາວິໄຈ ແລະ ການສຳຫຼວດຜ່ານມາ ຊີ້ໃຫ້ເຫັນຫຼາຍບັນຫາທີ່ພົວພັນເຖິງຊາວໜຸ່ມ, ເຍົາວະຊົນໂດຍສະເພາະຄວາມບໍ່ເທົ່າທຽມກັນໃນດ້ານການເຂົ້າເຖິງການສຶກສາ, ການບໍລິການສຸຂະພາບແລະໂອກາດໃນການພັດທະນາ, ການສຳຫຼວດພົນລະເມືອງ ແລະ ຄົວເຮືອນ (2015); ການສຳຫຼວດດັດສະນີໝາຍສັງຄົມລາວ (2017), ການສຳຫຼວດດ້ານແຮງງານປີ 2018 ແລະ ການວິໄຈສະພາບຊາວໜຸ່ມ-ເຍົາວະຊົນ ໃນ ສປປ ລາວ (AYSA 2014) ຊີ້ໃຫ້ເຫັນໃນລວງດຽວກັນວ່າໃນຂະນະທີ່ຊາວໜຸ່ມ, ເຍົາວະຊົນລາວບາງສ່ວນໃນປະເທດມີສຸຂະພາບແຂງແຮງດີ, ມີໂອກາດດ້ານການສຶກສາ, ມີວຽກເຮັດງານທຳ, ສາມາດເຂົ້າເຖິງບໍລິການດ້ານກິລາກາຍະກຳ, ສະຖານທີ່ພັກຜ່ອນຢ່ອນໃຈທີ່ປອດໄພ ແລະ ເໝາະສົມ. ຍັງມີຊາວໜຸ່ມ, ເຍົາວະຊົນລາວຈຳນວນຫຼວງຫຼາຍທີ່ບໍ່ສາມາດເຂົ້າເຖິງໂອກາດດັ່ງກ່າວ ຍ້ອນເງື່ອນໄຂທາງດ້ານສະພາບແວດລ້ອມ ແລະ ໂອກາດຍັງບໍ່ທັນເອື້ອອຳນວຍ. ສະພາບດັ່ງກ່າວ ຊີ້ໃຫ້ເຫັນວ່າຍັງມີຄວາມຫຼຸດໂຕນກັນໃນການເຂົ້າເຖິງບໍລິການດ້ານສັງຄົມຕ່າງໆ ເຊັ່ນ: ດ້ານການສຶກສາ, ບໍລິການດ້ານສາທາລະນະສຸກ, ການປົກປ້ອງ ແລະ ຊ່ວຍເຫຼືອທາງສັງຄົມລະຫວ່າງຊາວໜຸ່ມແຕ່ລະພື້ນທີ່, ລະຫວ່າງຊົນເຜົ່າ, ເພດ ແລະ ຖານະດ້ານເສດຖະກິດ-ສັງຄົມອື່ນໆ.



ເດັກນັກຮຽນຈາກຊົນເຜົ່າຈຳນວນໜຶ່ງຈະປະສົບຄວາມທ້າທາຍສະເພາະ, ເດັກຊົນເຜົ່າທີ່ພາສາແມ່ບໍ່ແມ່ນລາວ-ໄຕຈະພົບຄວາມຫຍຸ້ງຍາກໃນການຮຽນເພາະພາສາທີ່ໃຊ້ໃນການຮຽນການສອນບໍ່ແມ່ນພາສາແມ່ຂອງພວກເຂົາ, ເຊິ່ງມີຜົນກະທົບໂດຍກົງຕໍ່ຄວາມສາມາດຂອງເຂົາເຈົ້າໃນການຮຽນຮູ້ທັກສະພື້ນຖານທີ່ຕ້ອງການເພື່ອສອບເສັງຈົບຂັ້ນປະຖົມ. ເຖິງວ່າຈະມີນະໂຍບາຍແຫ່ງຊາດກ່ຽວກັບການສຶກສາຮຽນຮ່ວມ ແລະ ສາມາດລົງທະບຽນເຂົ້າຮຽນຢ່າງເປັນທາງການ ແຕ່ເດັກນ້ອຍພິການຍັງມີຄວາມຫຍຸ້ງຍາກໃນການເຂົ້າໂຮງຮຽນ ແລະຮຽນຮ່ວມກັບເດັກນ້ອຍທົ່ວໄປ.

ຍຸດທະສາດ ແລະ ໂຄງການຕ່າງໆບໍ່ພຽງແຕ່ສຸມໃສ່ຕອບສະໜອງຕາມຄວາມຕ້ອງການຂອງຊາວໜຸ່ມ-ເຍົາວະຊົນເທົ່ານັ້ນ ແຕ່ຍັງຕ້ອງສະໜັບສະໜູນພາກສ່ວນກ່ຽວຂ້ອງຜູ້ປະຕິບັດໜ້າທີ່ທີ່ພົວພັນກັບການພັດທະນາຊາວໜຸ່ມ, ເຍົາວະຊົນ ເປັນຕົ້ນແມ່ນຜູ້ໃຫ້ບໍລິການກໍ່ຕ້ອງຄຳນຶງເຖິງຜົນກະທົບທີ່ຈະເກີດຂຶ້ນກັບຊາວໜຸ່ມ-ເຍົາວະຊົນ ຄວນມີການກວດກາຢ່າງເຄັ່ງຄັດຜູ້ໃດທີ່ອາຍຸກະສຽນຍັງບໍ່ທັນເຖິງຕາມກົດໝາຍທີ່ໄດ້ລະບຸໄວ້ຄວນຕັກເຕືອນຫຼື ບໍ່ຄວນບໍລິການເຄື່ອງດື່ມທີ່ມີທາດເຫຼົ້າ ແລະອື່ນໆທີ່ຈະເປັນການທຳລາຍສຸຂະພາບຂອງເຂົາເຈົ້າ, ສະຖາບັນຄອບຄົວກໍ່ຕ້ອງເອົາໃຈໃສ່ດູແລລູກຫຼານ, ສຶກສາອົບຮົມ ຕິດຕາມການເຄື່ອນໄຫວເມື່ອພົບເຫັນເຂົາເຈົ້າເຮັດໃນສິ່ງທີ່ບໍ່ດີ ຫຼື ຜິດຕໍ່ກັບກົດໝາຍກໍ່ຄວນໂອ້ລົມ ຫຼື ລາຍງານການຈັດຕັ້ງ ເພື່ອຊອກຫາວິທີທາງໃນການແກ້ໄຂບັນຫາ ແລະ ຄູອາຈານຕ້ອງໄດ້ເພີ່ມຄວາມເອົາໃຈໃສ່ໃນການສິດສອນໃຫ້ຄວາມຮູ້ຍົກໃຫ້ເຫັນເຖິງຄວາມສຳຄັນຂອງການສຶກສາ ແລະ ຕ້ອງລາຍງານຜູ້ປົກຄອງຂອງເດັກໃຫ້ຮັບຊາບເຖິງການເຄື່ອນໄຫວຂອງເຂົາເຈົ້າໃນແຕ່ລະໄລຍະທີ່ເຫັນວ່າກຳລັງຕົກຢູ່ໃນຄວາມສ່ຽງເພື່ອເສີມສ້າງຂີດຄວາມສາມາດຂອງພວກເຂົາເຈົ້າໃນການເຮັດໜ້າທີ່ຂອງຕົນໃຫ້ມີປະສິດທິພາບ, ຕອບສະໜອງຕາມຄວາມຕ້ອງການຂອງຊາວໜຸ່ມ-ເຍົາວະຊົນ ພ້ອມທັງພັດທະນາຕົນເອງໃຫ້ກ້າວໜ້າຂຶ້ນເລື້ອຍໆ ແລະ ສາມາດຕິດຕາມກວດກາຄວາມຄືບໜ້າ ໃນການບັນລຸເປົ້າໝາຍການພັດທະນາຂອງຊາວໜຸ່ມ-ເຍົາວະຊົນອີກດ້ວຍ ສະນັ້ນ, ຈຶ່ງເຫັນວ່າ ສປປ ລາວ ຕ້ອງມີຍຸດທະສາດສຸມໃສ່ການພັດທະນາຊາວໜຸ່ມ, ເຍົາວະຊົນລາວ ຢ່າງຮອບດ້ານ ໂດຍສະເພາະເລັ່ງໃສ່ກຸ່ມຊາວໜຸ່ມ, ເຍົາວະຊົນທີ່ດ້ອຍໂອກາດ ແລະ ໃຊ້ຊີວິດແບບມີຄວາມສ່ຽງດ້ານສຸຂະພາບ ແລະຄວາມປອດໄພທາງສັງຄົມ.

ໂດຍລວມແລ້ວ ສປປ ລາວ ມີຫຼາຍຍຸດທະສາດ ແລະ ນິຕິກຳທີ່ດີຊຶ່ງໄດ້ຮັບການພັດທະນາຂຶ້ນມາແຕ່ລະໄລຍະແຕ່ການປະຕິບັດຕາມຍຸດທະສາດ ແລະ ການບັງຄັບໃຊ້ກົດໝາຍເຫຼົ່ານັ້ນ ຍັງມີຂໍ້ຈຳກັດ, ສາເຫດຫຼັກໆກໍ່ແມ່ນຍ້ອນຂາດລະບົບໂຄງສ້າງດ້ານສະຖາບັນເພື່ອບັງຄັບໃຊ້ນິຕິກຳເຫຼົ່ານັ້ນຢ່າງມີຜົນສັກສິດບວກກັບການຂາດຄວາມເຂົ້າໃຈຂອງທົ່ວປວງຊົນຕໍ່ເນື້ອໃນຂອງຍຸດທະສາດແລະນິຕິກຳເຫຼົ່ານັ້ນເຮັດໃຫ້ກາຍເປັນຂໍ້ຈຳກັດໃນການຕອບສະໜອງຄວາມຕ້ອງການຂອງຊາວໜຸ່ມ, ເຍົາວະຊົນລາວ ເຊັ່ນ ການປົກປ້ອງສິດທິຂອງເຂົາເຈົ້າ.

ສະນັ້ນ, ຍຸດທະສາດການພັດທະນາຊາວໜຸ່ມ, ເຍົາວະຊົນລາວ (2021-2030) ຈຶ່ງມີຈຸດປະສົງເພື່ອຕື່ມເຕີມຊ່ອງຫວ່າງ ແລະ ເນັ້ນໜັກການປະຕິບັດຍຸດທະສາດທີ່ມີຢູ່ແລ້ວ ແລະ ກຳນົດຍຸດທະສາດ ຫຼື ນິຕິກຳດ້ານຕ່າງໆທີ່ຈຳເປັນແນໃສ່ເສີມສ້າງຄວາມເຂັ້ມແຂງຂອງພາກສ່ວນກ່ຽວຂ້ອງທີ່ເຮັດໜ້າທີ່ແກ້ໄຂບັນຫາ, ພັດທະນາ ແລະ ສະໜອງຕອບຄວາມຕ້ອງການຂອງຊາວໜຸ່ມ, ເຍົາວະຊົນ ນອກຈາກນັ້ນ, ການສຶກສາວິໄຈ ແລະການສຳຫຼວດຜ່ານມາຍັງຊີ້ໃຫ້ເຫັນເຖິງຄວາມຂາດແຄນດ້ານທຶນຮອນທີ່ນຳໃຊ້ເຂົ້າໃນກິດຈະກຳການພັດທະນາທີ່ກ່ຽວຂ້ອງກັບຊາວໜຸ່ມ-ເຍົາວະຊົນ, ສະແດງວ່າ ລັດຖະບານຈຳເປັນຕ້ອງເພີ່ມການລົງທຶນຢ່າງຫຼວງຫຼາຍເຂົ້າໃນຂະແໜງການສຶກສາ, ສາທາລະນະສຸກ, ການບໍລິການທາງສັງຄົມ, ການມີວຽກເຮັດງານທຳ ແລະການປັບປຸງມາດຖານການດຳລົງຊີວິດເພື່ອເຮັດໃຫ້ຄົນຮຸ່ນຕໍ່ໄປຂອງປະເທດສາມາດບັນລຸຂີດຄວາມສາມາດອັນເຕັມສ່ວນຂອງຕົນເພື່ອປະກອບສ່ວນເຂົ້າໃນພາລະກິດປົກປັກຮັກສາ ແລະ ສ້າງສາພັດທະນາປະເທດຊາດສົມກັບກັບຄຳເວົ້າທີ່ວ່າ **"ຊາວໜຸ່ມແມ່ນກະດູກສັນຫຼັງຂອງຊາດ"**. ການລົງທຶນເຂົ້າໃນການພັດທະນາຊາວໜຸ່ມຕ້ອງຮັບປະກັນວ່າ ຄວາມຕ້ອງການ, ຄວາມປາຖະໜາ ແລະ ບັນຫາຕ່າງໆຂອງເຂົາເຈົ້າໄດ້ຮັບການ

ພິຈາລະນານັບຕັ້ງແຕ່ຂະບວນການຮ່າງຍຸດທະສາດ,ການຈັດຕັ້ງປະຕິບັດ,ການຕິດຕາມກວດກາ ແລະປະເມີນຜົນ, ຢາກເຮັດໄດ້ແນວນັ້ນພາກສ່ວນກ່ຽວຂ້ອງຕ້ອງສົ່ງເສີມການມີສ່ວນຮ່ວມຢ່າງເຕັມສ່ວນ ແລະ ເທົ່າທຽມກັນຂອງຊາວໜຸ່ມ, ເຍົາວະຊົນທຸກຄົນໃນສັງຄົມ, ການມີສ່ວນຮ່ວມຂອງເຂົາເຈົ້າຈະເຮັດໃຫ້ບັນຫາໂດຍສະເພາະຂອງກຸ່ມທີ່ດ້ອຍໂອກາດ ເຊັ່ນ: ການຖືກກົດຂີ່ຂູດຮີດ, ຖືກປ່ອຍປະລະເລີຍ ຫຼື ໄດ້ຮັບການລ່ວງລະເມີດສິດໄດ້ຮັບການເອົາໃຈໃສ່.

## 2.4. ຄວາມຈຳເປັນຕ້ອງມີຍຸດທະສາດການພັດທະນາຊາວໜຸ່ມ, ເຍົາວະຊົນລາວ

ການວິໄຈສະພາບຂອງຊາວໜຸ່ມ ແລະ ເຍົາວະຊົນໃນສປປລາວປີ 2014 ເປັນການປະເມີນສະພາບຂອງຊາວໜຸ່ມ-ເຍົາວະຊົນ ເພື່ອຊ່ວຍ ສປປ ລາວ ໃນການສ້າງຍຸດທະສາດການພັດທະນາຊາວໜຸ່ມ, ເຍົາວະຊົນລາວ ໃນໄລຍະຍາວ, ການວິໄຈດັ່ງກ່າວຊີ້ໃຫ້ເຫັນວ່າ ໂດຍທົ່ວໄປແລ້ວ ສປປ ລາວ ມີສະພາບແວດລ້ອມດ້ານນະໂຍບາຍກ່ຽວກັບຊາວໜຸ່ມເປັນຢ່າງດີ, ແຕ່ເຖິງຢ່າງໃດກໍ່ຕາມ, ການວິໄຈກໍ່ຍັງຊີ້ໃຫ້ເຫັນຕື່ມອີກວ່າໃນປະຈຸບັນກົນໄກປະສານງານເພື່ອເອື້ອອຳນວຍໃຫ້ແກ່ການຮ່ວມມືລະຫວ່າງຂະແໜງການຍັງບໍ່ທັນເຂັ້ມແຂງ, ເປັນທີ່ຈະແຈ້ງວ່າ ຊາວໜຸ່ມ, ເຍົາວະຊົນນອນຢູ່ໃນຍຸດທະສາດ ແລະ ແຜນງານຂອງຫຼາຍຂະແໜງການ, ແຕ່ວ່າຍັງຂາດນະໂຍບາຍ ຫຼື ຍຸດທະສາດແຫ່ງຊາດ ສະເພາະຊາວໜຸ່ມ-ເຍົາວະຊົນ.

ນັກຈິດຕະວິທະຍາໃຫ້ທັດສະນະວ່າ ຊ່ວງເວລາທີ່ຄົນເຮົາເຕີບໃຫຍ່ຂຶ້ນມາຈະມີການຮຽນຮູ້ຕາມແຕ່ລະຊ່ວງເວລາຢ່າງຕໍ່ເນື່ອງ, ຊ່ວງເວລາແຫ່ງການຮຽນຮູ້ທີ່ສຳຄັນທີ່ສຸດ ແມ່ນຊ່ວງທີ່ຄົນມີອາຍຸໃນເກນທີ່ເອີ້ນວ່າອະນຸຊົນ, ເຍົາວະຊົນ ແລະ ຊາວໜຸ່ມ, ຖ້າກາຍຊ່ວງເວລາເຫຼົ່ານີ້ໄປແລ້ວຄວາມສາມາດໃນການຮຽນຮູ້ຈະຫຼຸດລົງ ສະນັ້ນ, ອະນຸຊົນ-ເຍົາວະຊົນ ແລະ ຊາວໜຸ່ມ ແມ່ນຊ່ວງທີ່ສຳຄັນທີ່ທຸກຄົນຕ້ອງມີໂອກາດຮຽນຮູ້ເພື່ອໃຫ້ສາມາດພັດທະນາຈິນບັນລຸທ່າແຮງອັນເຕັມສ່ວນເຕີບໂຕຂຶ້ນມາເປັນຜູ້ໃຫຍ່ໃນອານາຄົດຂອງເຂົາເຈົ້າ. ນອກຈາກນັ້ນ, ນັກປາດຫຼາຍທ່ານຍັງຢັ້ງຢືນວ່າ ນອກຈາກເດັກຈະຮຽນຮູ້ ແລະ ພັດທະນາໄປຕາມໄວແລ້ວ, ສຸຂະພາບແຂງແຮງດີ, ຄວາມອົບອຸ່ນທີ່ໄດ້ຮັບຈາກຄອບຄົວ, ສັງຄົມກໍເປັນປັດໄຈສຳຄັນກະຕຸ້ນການຮຽນຮູ້ ແລະ ພັດທະນາການຂອງເດັກເຊັ່ນກັນ, ການຂ້າມຜ່ານຈາກຊ່ວງເວລາເຍົາວະຊົນໄປສູ່ຊາວໜຸ່ມ ແລະ ຜູ້ໃຫຍ່ຮຽກຮ້ອງໃຫ້ມີການລົງທຶນໃນຫຼາຍຂະແໜງການທີ່ຮັບຮູ້ເຖິງຄວາມຕ້ອງການຢ່າງຫຼາກຫຼາຍຂອງຊາວໜຸ່ມແຕ່ລະໄລຍະ ແລະ ຄວາມຕ້ອງການເຫຼົ່ານີ້ມີການປ່ຽນແປງຢ່າງໄວວາຍ້ອນວ່າ ເຍົາວະຊົນອາຍຸ 9-14 ປີ ເປັນກຸ່ມປະຊາກອນທີ່ໃຫຍ່ທີ່ສຸດ ໃນ ສປປ ລາວ, 718,606 ຄົນ ຫຼື 11% ຂອງປະຊາກອນທັງໝົດໃນທົ່ວປະເທດ, (ການສຳຫຼວດພົນລະເມືອງ, ປີ 2015) ແລະ ບໍ່ຄ່ອຍໄດ້ຮັບຄວາມສົນໃຈໃນເວລາສ້າງຍຸດທະສາດ ແລະ ວາງແຜນການພັດທະນາສະນັ້ນ,ກຸ່ມດັ່ງກ່າວນີ້ຈຶ່ງສຳຄັນຕໍ່ກັບການຮ່າງຍຸດທະສາດການພັດທະນາຊາວໜຸ່ມ, ເຍົາວະຊົນລາວ ສະບັບນີ້. ຊາວໜຸ່ມ, ເຍົາວະຊົນໃນກຸ່ມອາຍຸດຽວກັນລະຫວ່າງ 9 ຫາ 35 ປີ ມີຄວາມຕ່າງກັນຫຼາຍທາງດ້ານໂອກາດ ແລະ ຖານະທາງສັງຄົມ ດັ່ງນັ້ນ, ຍຸດທະສາດການພັດທະນາຊາວໜຸ່ມ, ເຍົາວະຊົນລາວ ຕ້ອງໄດ້ເອົາໃຈໃສ່ກຸ່ມຊາວໜຸ່ມ-ເຍົາວະຊົນທຸກຍາກ ແລະ ດ້ອຍໂອກາດກວ່າໝູ່ ເພື່ອຮັບປະກັນໃຫ້ຊາວໜຸ່ມ, ເຍົາວະຊົນໄດ້ຮັບໂອກາດອັນເອື້ອອຳນວຍຢ່າງສະເໝີພາບ.

ໃນອີກດ້ານໜຶ່ງ, ເປັນທີ່ຍອມຮັບກັນທົ່ວໂລກແລ້ວວ່າ ຊາວໜຸ່ມ, ເຍົາວະຊົນເປັນກຸ່ມຄົນທີ່ເອີ້ນວ່າ ພາກສ່ວນກ່ຽວຂ້ອງສຳຄັນຂອງການພັດທະນາທີ່ຍືນຍົງຂອງແຕ່ລະສັງຄົມ, ຫຼາຍໆແຜນງານ, ຍຸດທະສາດ ແລະ ເປົ້າໝາຍພັດທະນາລະດັບສາກົນ ເຊັ່ນ: ແຜນປະຕິບັດງານສາກົນເພື່ອຊາວໜຸ່ມ (UN 2010), ວາລະການພັດທະນາແບບຍືນຍົງແຫ່ງ ສປຊ (UN 2015) ດັດສະນີການພັດທະນາຊາວໜຸ່ມອາຊຽນ (ASEAN Secretariat 2017) ກໍຖືເອົາຊາວໜຸ່ມ-ເຍົາວະຊົນເປັນພາກສ່ວນກ່ຽວຂ້ອງຫຼັກຂອງການພັດທະນາແບບຍືນຍົງເຊັ່ນກັນ, ແຜນປະຕິບັດງານສາກົນ ເພື່ອຊາວໜຸ່ມຍັງສະໜອງຂອບຍຸດທະສາດ ແລະ ບົດແນະນຳລະອຽດ

ເພື່ອໃຫ້ລັດພາຄີນຳໃຊ້ເປັນບ່ອນອີງເພື່ອສົ່ງເສີມແຜນການຈັດຕັ້ງປະຕິບັດປະເທດ ແລະ ສາກົນເພື່ອນຳໄປສູ່ການປັບປຸງສະພາບຂອງຊາວໜຸ່ມໃຫ້ດີຂຶ້ນ.

ສະນັ້ນ, ຍຸດທະສາດການພັດທະນາຊາວໜຸ່ມ, ເຍົາວະຊົນລາວ ສະບັບນີ້ ຈຶ່ງມີຈຸດປະສົງຕື່ມເຕີມຊ່ອງຫວ່າງທາງຍຸດທະສາດດັ່ງກ່າວ, ເພື່ອເປັນເຄື່ອງມືສົ່ງເສີມການປະສານສົມທົບລະຫວ່າງຂະແໜງການທີ່ເຮັດໜ້າທີ່ກ່ຽວຂ້ອງກັບຊາວໜຸ່ມ ແລະ ເຍົາວະຊົນ ປຽບເໝືອນຕົວແທນຂອງຄວາມມຸ່ງໝັ້ນຈາກລັດຖະບານເພື່ອຮັບປະກັນຊາວໜຸ່ມເຍົາວະຊົນຂອງຊາດໄດ້ຮັບໂອກາດໃນການພັດທະນາຮອບດ້ານຢ່າງທົ່ວເຖິງ,ຍຸດທະສາດສະບັບນີ້ ໄດ້ຮັບການສ້າງຂຶ້ນໂດຍອີງໃສ່ຂະບວນການປຶກສາຫາລືກັບພາກສ່ວນກ່ຽວຂ້ອງທັງສູນກາງ ແລະທ້ອງຖິ່ນ, ທັງຂະແໜງການ ແລະ ອົງການຈັດຕັ້ງມະຫາຊົນ ເພື່ອກຳນົດຫົວຂໍ້ດ້ານຕ່າງໆທີ່ຈະໄດ້ຮັບພິຈາລະນາພາຍໃຕ້ຍຸດທະສາດການພັດທະນາຊາວໜຸ່ມ, ເຍົາວະຊົນລາວ ຊຶ່ງເຂດທີ່ເປັນບູລິມະສິດລວມມີບັນຫາດ້ານສຸຂະພາບ, ລວມທັງສຸຂະພາບທາງເພດ ແລະ ສຸຂະພາບຈະເລີນພັນ, ການສຶກສາລວມທັງການຝຶກອົບຮົມດ້ານເຕັກນິກ ແລະ ວິຊາຊີບ, ການມີວຽກເຮັດງານທຳ, ການປະກອບການທຸລະກິດ, ການປະກອບສ່ວນການມີສ່ວນຮ່ວມ ແລະ ການປົກປ້ອງທາງສັງຄົມ.



# II. ວິໄສທັດ, ຈຸດປະສົງ ແລະ ຫຼັກການ ຂອງຍຸດທະສາດ



# 1. ວິໄສທັດ

ຊາວໜຸ່ມ, ເຍົາວະຊົນລາວທຸກຄົນ ໂດຍບໍ່ຈຳແນກຖານະດ້ານໃດໆໄດ້ຮັບການພັດທະນາຮອບດ້ານ, ມີຄຸນສົມບັດດີ, ມີຄວາມເຂັ້ມແຂງທາງດ້ານຮ່າງກາຍ ແລະ ສະຕິປັນຍາ, ສາມາດດຳລົງຊີວິດໃນສັງຄົມຢ່າງປອດໄພ, ມີໄມຕີຈິດມິດຕະພາບ, ຮັກຄວາມກ້າວໜ້າ ແລະ ຊ່ວຍເຫຼືອກັນພັດທະນາໃຫ້ບັນລຸທ່າແຮງອັນເຕັມສ່ວນຂອງຕົນປະກອບສ່ວນຢ່າງຫ້າວຫັນເຂົ້າໃນພາລະກິດປົກປັກຮັກສາແລະສ້າງສາພັດທະນາປະເທດຊາດ.

# 2. ຈຸດປະສົງ

## 2.1. ຈຸດປະສົງລວມ

ຈຸດປະສົງລວມຂອງຍຸດທະສາດການພັດທະນາຊາວໜຸ່ມ,ເຍົາວະຊົນລາວ (2021-2030) ແມ່ນເພື່ອວາງທິດທາງລວມໃນການສ້າງໃຫ້ຊາວໜຸ່ມ, ເຍົາວະຊົນລາວບັນດາເຜົ່າໃຫ້ກາຍເປັນກຳລັງແຮງສືບທອດມູນເຊື້ອອຸດົມການຂອງພັກ ແລະ ລັດ ໂດຍການສຶກສາອົບຮົມຊາວໜຸ່ມ, ເຍົາວະຊົນໃຫ້ມີແນວຄິດການເມືອງໜັກແໜ້ນ, ມີຄຸນສົມບັດສິນທຳປະຕິວັດດີ, ປົກປັກຮັກສາ ແລະ ເສີມຂະຫຍາຍມູນເຊື້ອວັດທະນາທຳອັນດີງາມຂອງຊາດ ແລະ ຊົນເຜົ່າ, ມີນ້ຳໃຈສາມັກຄີ, ມີຄວາມມານະອົດທົນ, ເຂົ້າຮ່ວມໃນການປະຕິບັດສິດພັນທະປ້ອງກັນຊາດ, ປ້ອງກັນຄວາມສະຫງົບ, ພັດທະນາເສດຖະກິດ-ສັງຄົມ ແລະ ປົກປັກຮັກສາສິ່ງແວດລ້ອມ; ຍົກລະດັບການສຶກສາ, ວິຊາຊີບສີມືແຮງງານເພື່ອໃຫ້ຊາວໜຸ່ມ ແລະ ເຍົາວະຊົນລາວ ມີຄວາມຮູ້ຄວາມສາມາດໃນການຄົ້ນຄວ້າ, ສ້າງນະວັດຕະກຳໃໝ່, ນຳໃຊ້ວິທະຍາສາດ-ເຕັກໂນໂລຊີໃໝ່ທີ່ທັນສະໄໝ, ຮູ້ພາສາຕ່າງປະເທດ ແລະ ເຂົ້າໃຈສັງຄົມ-ວັດທະນະທຳນາໆຊາດ; ສ້າງສະພາບແວດລ້ອມທີ່ດີ ແລະສົ່ງເສີມການພັດທະນາຊາວໜຸ່ມຢູ່ຂົງເຂດຊົນນະບົດ ໃຫ້ມີການຫັນປ່ຽນທາງດ້ານແບບແຜນວິທີການດຳລົງຊີວິດທີ່ກ້າວໜ້າແນ່ໃສ່ແກ້ໄຂຄວາມທຸກຍາກ ແລະ ຊີວິດການເປັນຢູ່ທີ່ດີຂຶ້ນ ໂດຍໃຫ້ມີໂຄງການສະເພາະໃນລະດັບຊາດ. ຊາວໜຸ່ມ ແລະ ເຍົາວະຊົນມີຄ່ານິຍົມທີ່ຖືກຕ້ອງ, ຕໍ່ຕ້ານປະກົດການຫຍໍ້ທໍ້ດ້ານຕ່າງໆໃນສັງຄົມ ແລະ ປູກຈິດສຳນຶກໃຫ້ຮັບຮູ້, ເຂົ້າໃຈ, ເຄົາລົບ,ປະຕິບັດລັດຖະທຳມະນູນ ແລະ ກົດໝາຍຢ່າງເຂັ້ມງວດ, ຈຳກັດພຶດຕິກຳລະເມີດກົດໝາຍ, ລະບຽບການຮັບປະກັນໃຫ້ຊາວໜຸ່ມ, ເຍົາວະຊົນມີສິດສະເໝີພາບຕໍ່ໜ້າກົດໝາຍ, ປົກປ້ອງສິດ ແລະ ຜົນປະໂຫຍດອັນຊອບທຳຂອງຊາວໜຸ່ມ; ເພີ່ມການລົງທຶນໃສ່ຊາວໜຸ່ມ-ເຍົາວະຊົນເພື່ອໃຫ້ກາຍເປັນກຳລັງແຮງທີ່ມີຄຸນນະພາບ ແລະ ກາຍເປັນຊັບພະຍາມະນຸດທີ່ມີຄຸນຄ່າສູງສຸດຂອງຊາດ, ສາມາດເຊື່ອມໂຍງກັບພາກພື້ນ ແລະ ສາກົນ.

## 2.2. ຈຸດປະສົງສະເພາະ

ຍຸດທະສາດການພັດທະນາຊາວໜຸ່ມ, ເຍົາວະຊົນລາວ ມີຈຸດປະສົງສະເພາະ ດັ່ງນີ້:

1. ເພື່ອໃຫ້ຊາວໜຸ່ມ, ເຍົາວະຊົນທຸກຄົນໃນທົ່ວປະເທດ ໄດ້ປະກອບສ່ວນເຂົ້າໃນພາລະກິດປົກປັກຮັກສາ ແລະ ສ້າງສາພັດທະນາປະເທດຊາດ;
2. ເພື່ອຮັບປະກັນສິດເທົ່າທຽມກັນຂອງຊາວໜຸ່ມ, ເຍົາວະຊົນທຸກຄົນໃນຂອບເຂດທົ່ວປະເທດ, ເປັນບ່ອນອີງໃນການແກ້ໄຂຄວາມບໍ່ສະເໝີພາບລະຫວ່າງຍິງ-ຊາຍ ໃນທຸກດ້ານລວມທັງດ້ານການເມືອງ, ເສດຖະກິດ-ສັງຄົມ ແລະ ວັດທະນະທຳ;

3. ເພື່ອສົ່ງເສີມການລົງທຶນຂອງລັດຖະບານ, ອົງການຈັດຕັ້ງສັງຄົມ, ພາກເອກະຊົນ ແລະ ພາກສ່ວນກ່ຽວຂ້ອງອື່ນໆເຂົ້າໃນວຽກງານປົກປ້ອງທາງສັງຄົມ, ພັດທະນາຮອບດ້ານ ແລະ ສົ່ງເສີມການມີສ່ວນຮ່ວມຂອງຊາວໜຸ່ມ, ເຍົາວະຊົນຢ່າງທົ່ວເຖິງ;
4. ເພື່ອເປັນບ່ອນອີງໃນການຕິດຕາມກວດກາ ແລະ ຍູ້ດັນຄວາມຮັບຜິດຊອບຂອງທຸກຂະແໜງການໃນວຽກງານພັດທະນາຊາວໜຸ່ມ ແລະເຍົາວະຊົນ ເພື່ອບັນລຸເປົ້າໝາຍການພັດທະນາແບບຍືນຍົງພາຍໃນປີ 2030 ແລະ ໝົດທຸກຄົນຕ້ອງຖືກພັດທະນາໄປພ້ອມກັນ”;
5. ເພື່ອຊຸກຍູ້ການປູກຈິດສໍານຶກກ່ຽວກັບບັນຫາທີ່ກະທົບເຖິງຊາວໜຸ່ມ ແລະ ເຍົາວະຊົນຍົກສູງຄວາມເປັນເຈົ້າການໃນວຽກງານພັດທະນາຊາວໜຸ່ມ, ປົກປ້ອງຊາວໜຸ່ມ, ເຍົາວະຊົນຂອງພາກສ່ວນຕ່າງໆເຊັ່ນ: ຄອບຄົວ, ຊຸມຊົນ, ສະຖານການສຶກສາ, ອົງການຈັດຕັ້ງທີ່ກ່ຽວຂ້ອງ ແລະ ສັງຄົມ.



# 3. ຫຼັກການ

## 3.1. ຫຼັກການລວມ

ຍຸດທະສາດການພັດທະນາຊາວໜຸ່ມ, ເຢົາວະຊົນລາວ ສ້າງຂຶ້ນໂດຍອີງໃສ່ບັນດາຫຼັກການພື້ນຖານທີ່ສອດຄ່ອງກັບຄຸນຄ່າທາງວັດທະນະທຳ ແລະ ຄ່ານິຍົມຂອງສັງຄົມລາວ ທີ່ສືບທອດຈາກລຸ້ນສູ່ລຸ້ນວ່າຄົນລາວມີມູນເຊື້ອດຸໝັ່ນພິລະອາດຫານ "ໄປຢຽບໜາມາຢຽບຂຽດ" ຮັກເຊື້ອແພງຊາດ, ຮັກຄວາມສາມັກຄີ, ມີນ້ຳໃຈເອື້ອເຟື້ອເພື່ອແຜ່ດັ່ງທີ່ສະແດງອອກໃນຄຳຂວັນທີ່ວ່າ "ໄປພຸ້ນກິນປານາພີ້ກິນເຂົ້າ" ເຊິ່ງນອກຈາກຈະສະແດງເຖິງຄວາມມີນ້ຳໃຈຕໍ່ກັນແລ້ວຍັງໝາຍເຖິງຄວາມມີໄມຕີຈິດມິດຕະພາບອັນສູງສົ່ງນຳອີກນອກຈາກນັ້ນ, ຄົນລາວຍັງມີມູນເຊື້ອມານະບາກບັ່ນ ແລະ ເສຍສະລະສູ້ຊົນ ດັ່ງຄຳຂວັນຂອງຊາວໜຸ່ມທີ່ວ່າ: **"ບ່ອນໃດຍາກຊາວໜຸ່ມບຸກ ບ່ອນໃດທຸກຊາວໜຸ່ມຜ່ານຜ່າ ເມື່ອໃດຊາດຕ້ອງການຊາວໜຸ່ມຂານອາສາ"**. ຍຸດທະສາດສະບັບນີ້ຍັງໄດ້ອີງໃສ່ສົນທິສັນຍາສາກົນ, ພາກພື້ນ ແລະ ຖະແຫຼງການຕ່າງໆທີ່ ສປປ ລາວ ໄດ້ຮັບຮອງເອົາບັນດາຫຼັກການເຫຼົ່ານີ້ຍັງເປັນທິດຊີ້ນຳສຳລັບການຈັດຕັ້ງປະຕິບັດຍຸດທະສາດສະບັບນີ້ຍັງອີງໃສ່ຫຼັກການລວມດັ່ງລຸ່ມນີ້:

1. ຮັບປະກັນຄວາມໂປ່ງໃສໃນການປະສານສົມທົບກັບພາກສ່ວນກ່ຽວຂ້ອງ ໃນການຈັດຕັ້ງປະຕິບັດໃຫ້ກວ້າງຂວາງ;
2. ຮັບປະກັນລັກສະນະຊາດ, ວິທະຍາສາດ ແລະ ມະຫາຊົນ ບົນພື້ນຖານແນວທາງນະໂຍບາຍຂອງພັກ ແລະ ລັດວາງອອກ;
3. ຖືກຕ້ອງສອດຄ່ອງຕາມລັດຖະທຳມະນູນ ແລະ ກົດໝາຍ ແຫ່ງ ສປປ ລາວ;
4. ຖືກຕ້ອງ ແລະ ສອດຄ່ອງກັບມູນເຊື້ອ, ວັດທະນາທຳ ແລະ ຮີດຄອງປະເພນີອັນດີງາມຂອງຊາດ;
5. ຖືກຕ້ອງ ແລະ ສອດຄ່ອງຕາມສະພາບການພັດທະນາເສດຖະກິດ-ສັງຄົມໃນປະຈຸບັນ ແລະ ອະນາຄົດ.

## 3.2. ຫຼັກການສະເພາະ

ຍຸດທະສາດການພັດທະນາຊາວໜຸ່ມ, ເຢົາວະຊົນລາວ ໄດ້ຮັບການສ້າງຂຶ້ນອີງໃສ່ຫຼັກການສະເພາະດັ່ງນີ້:

1. ຄວາມເທົ່າທຽມ ແລະ ທົ່ວເຖິງຂອງຊາວໜຸ່ມ-ເຢົາວະຊົນທຸກຄົນ ທີ່ໄດ້ເຂົ້າຮ່ວມຢ່າງຕັ້ງໜ້າໃນການຮ່າງຍຸດທະສາດ, ຈັດຕັ້ງປະຕິບັດ ແລະ ຕິດຕາມກວດກາການປະຕິບັດຍຸດທະສາດເງື່ອນໄຂຕ່າງໆທີ່ເປັນອຸປະສັກຕໍ່ການເຂົ້າຮ່ວມຂອງເຂົາເຈົ້າຕ້ອງໄດ້ຮັບການແກ້ໄຂເພື່ອຮັບປະກັນຄວາມຮັບຜິດຊອບ, ຄວາມໂປ່ງໃສ ແລະ ຄວາມຍືນຍົງ;
2. ການລົງທຶນເຂົ້າໃສ່ການພັດທະນາຊາວໜຸ່ມ-ເຢົາວະຊົນຢ່າງເໝາະສົມ ຈະປະກອບສ່ວນເຂົ້າໃນການພັດທະນາເພື່ອບັນລຸເປົ້າໝາຍການພັດທະນາແບບຍືນຍົງ ແລະ ເປົ້າໝາຍພັດທະນາອື່ນໆຂອງຊາດ;
3. ການສົ່ງເສີມຄວາມສະເໝີພາບລະຫວ່າງຍິງ-ຊາຍທຸກໆດ້ານຢູ່ໃນສັງຄົມ ຕ້ອງຮັບປະກັນການມີສ່ວນຮ່ວມຂອງຍິງ-ຊາຍຢ່າງເທົ່າທຽມກັນ;
4. ທິດທາງຍຸດທະສາດແມ່ນອີງໃສ່ສິດທິມະນຸດຂັ້ນພື້ນຖານລວມທັງຫຼັກການບໍ່ຈຳແນກໃນທຸກໆກໍລະນີ ເພື່ອຮັບປະກັນສິດທິພື້ນຖານກ່ຽວກັບສິດທິມະນຸດ, ສອດຄ່ອງກັບຄຳໝັ້ນສັນຍາທີ່ ສປປ ລາວໃຫ້ໄວ້ກັບວົງຄະນາຍາດສາກົນກໍ່ຄືພາກພື້ນ;
5. ເນັ້ນໜັກຄວາມສຳຄັນ ແລະ ເອົາໃຈໃສ່ເປັນພິເສດຕໍ່ຊາວໜຸ່ມ, ເຢົາວະຊົນທີ່ດ້ອຍໂອກາດ ແລະ ມີຄວາມຫຍຸ້ງຍາກໃນການດຳລົງຊີວິດໃນສັງຄົມ.

# III. ຂົງເຂດບຸລິມະສິດຂອງຍຸດທະສາດ





# 1. ສຸຂະພາບ ແລະ ສະຫວັດດີພາບ

## 1.1. ສະພາບລວມດ້ານສຸຂະພາບ ແລະ ສະຫວັດດີພາບ

ໂດຍທົ່ວໄປແລ້ວ ຊ່ວງໄຍລະຍັງເປັນຊາວໜຸ່ມ, ເຍົາວະຊົນ ຄົນເຮົາຈະມີສຸຂະພາບແຂງແຮງດີ, ຫຼາຍກິດຈະກໍາການພັດທະນາໃນໄລຍະຜ່ານມາໄດ້ສິ່ງຜົນສະທ້ອນອັນດີຕໍ່ສຸຂະພາບ ແລະ ສະຫວັດດີພາບຂອງຊາວໜຸ່ມ-ເຍົາວະຊົນພໍສົມຄວນ ເຖິງຢ່າງໃດກໍດີ, ປະເພນີປະຕິບັດທີ່ຕິດພັນກັບວັດທະນະທໍາ-ສັງຄົມ, ການປ່ຽນແປງທາງສັງຄົມ, ການເຄື່ອນຍ້າຍຖິ່ນຖານ ແລະ ພຶດຕິກໍາຫຼໍ່ແຫຼມບໍ່ປອດໄພໄດ້ເຮັດໃຫ້ຊາວໜຸ່ມ, ເຍົາວະຊົນປະເຊີນກັບຄວາມສ່ຽງດ້ານສຸຂະພາບຫຼາຍຂຶ້ນ, ບັນຫາດ້ານສຸຂະພາບຂອງຊາວໜຸ່ມ ແລະ ເຍົາວະຊົນໃນປະເທດ ມີດັ່ງນີ້: (ແຫຼ່ງຂໍ້ມູນ LSIS ແລະ AYSA).

1. ແຕ່ງງານກ່ອນໄວອັນຄວນ: ເກືອບໜຶ່ງສ່ວນສີ່ (23.5%) ຂອງຍິງໜຸ່ມ ອາຍຸ 15 ຫາ 19 ປີ ແຕ່ງງານແລ້ວ ຫຼື ຢູ່ຮ່ວມກັນແລ້ວ ແລະ 19% ຂອງແມ່ຍິງອາຍຸ 20-24 ປີມີປະສົບການເກີດລູກກ່ອນອາຍຸຮອດ 18 ປີ ອັດຕາສ່ວນຂອງຊາວໜຸ່ມທີ່ມີການຮ່ວມເພດຄັ້ງທໍາອິດຕອນອາຍຸປະມານ 15 ປີໄດ້ເພີ່ມຂຶ້ນເລື້ອຍ, ພຶດຕິກໍາດັ່ງກ່າວອາດນໍາໄປສູ່ການຖືພາແບບບໍ່ຕ້ອງການ, ເຮັດໃຫ້ເຂົາເຈົ້າປະລະການຮຽນ. (LSB, 2018);

2. ການມີລູກແຕ່ອາຍຸຍັງນ້ອຍ: ປະເທດ ລາວ ແມ່ນໜຶ່ງໃນບັນດາປະເທດທີ່ມີອັດຕາການເກີດລູກແຕ່ອາຍຸຍັງນ້ອຍສູງສຸດໃນພາກພື້ນ (83 ຕໍ່ 1,000 ຄົນທີ່ອາຍຸ 15-19) ແລະ ອັດຕາແມ່ນມີຄວາມແຕກຕ່າງລະຫວ່າງໃນເມືອງ (42) ແລະ ຊົນນະບົດທີ່ບໍ່ມີເສັ້ນທາງເຂົ້າເຖິງ (136), ເຮັດໃຫ້ມີຜົນກະທົບຕໍ່ສຸຂະພາບ ແລະ ຂາດໂອກາດໃນການພັດທະນາຕົນເອງ. (LSB, 2018);

3. ຂາດໂພຊະນາການ: ໂພຊະນາການເປັນອີກບັນຫາທີ່ໜ້າກັງວົນ ໂດຍສະເພາະແມ່ນ ສໍາລັບຊາວໜຸ່ມ-ເຍົາວະຊົນ ເຂດຊົນນະບົດ, ອັດຕາສ່ວນພະຍາດເລືອດຈາງທີ່ພົບໃນກຸ່ມຍິງໜຸ່ມ ອາຍຸແຕ່ 15 ຫາ 19 ປີ ມີສູງເຖິງ 42,6% (LSB, 2018);

4. ການເຂົ້າເຖິງປະດຸງຄັນ (ຜູ້ຊ່ວຍເກີດ): ຍິງໜຸ່ມ 1 ໃນ 3 ຄົນ ໃນປະເທດລາວຍັງສືບຕໍ່ເກີດລູກໂດຍບໍ່ມີແພດປະດຸງຄັນທີ່ມີຄວາມຊໍານານ ແລະ ມີຄວາມແຕກຕ່າງກັນທີ່ສຸດລະຫ່ວາງຕົວເມືອງແລະ ຊົນນະບົດ (89.7% ແລະ 34.1%) ດັ່ງນັ້ນ, ການຖືພາ ແລະ ການເກີດລູກແມ່ນຄວາມສ່ຽງຕໍ່ຍິງໜຸ່ມ ໂດຍສະເພາະເຂດຊົນນະບົດ;

5. ການເຂົ້າເຖິງການບໍລິການຄຸມກໍາເນີດຍັງຈໍາກັດ: ອັດຕາສ່ວນຈໍານວນເດັກນ້ອຍທີ່ເກີດກັບແມ່ໜຶ່ງຄົນ ໃນ ສປປ ລາວ ໄດ້ຫຼຸດລົງຈາກ 3.2 ຫາ 2.7% ໃນໄລຍະເວລາ 6 ປີ (ໃນລະຫວ່າງ ປີ 2011 ຫາ 2017). ແຕ່ການໃຫ້ບໍລິການຄຸມກໍາເນີດຍັງບໍ່ທົ່ວເຖິງ, ອັດຕາສ່ວນຍັງບໍ່ໄດ້ຮັບບໍລິການແມ່ນ 22,6% ສໍາລັບກຸ່ມອາຍຸ 15-19 ປີ ແລະ 21,0% ສໍາລັບກຸ່ມອາຍຸ 20-24 ປີ;

6. ການບໍລິການຄຸມກໍາເນີດ (ການວາງແຜນຄອບຄົວ) ທີ່ຍັງບໍ່ສາມາດສະໜອງໃຫ້ຢ່າງພຽງພໍໃນກຸ່ມແມ່ຍິງທີ່ບໍ່ໄດ້ແຕ່ງງານຍັງສູງ (ເກືອບ 75%), ເມື່ອທຽບກັບ 14,3% ໃນກຸ່ມທີ່ແຕ່ງງານແລ້ວ, ຕົວເລກດັ່ງກ່າວສະທ້ອນໃຫ້ເຫັນວ່າການເຂົ້າເຖິງການບໍລິການວາງແຜນຄອບຄົວໃນກຸ່ມແມ່ຍິງທີ່ຍັງບໍ່ທັນໄດ້ແຕ່ງງານຍັງເປັນສິ່ງທ້າທາຍສໍາຄັນຂອງປະເທດ;

7. ການມີເພດສໍາພັນທີ່ບໍ່ປອດໄພ: ຊາວໜຸ່ມຈໍານວນໜຶ່ງຍັງມີເພດສໍາພັນທີ່ບໍ່ປອດໄພ ເຊິ່ງເປັນສາເຫດຂອງການຖືພາທີ່ບໍ່ຕ້ອງການ ແລະ ການເອົາລູກອອກທີ່ບໍ່ປອດໄພລວມທັງການຕິດພະຍາດ

ຕິດຕໍ່ທາງເພດສຳພັນ (ພຕພ) ແລະ ສ່ຽງຕໍ່ການຕິດເຊື້ອ HIV, ໜຶ່ງໃນສາເຫດທີ່ສຳຄັນແມ່ນຍ້ອນວ່າການເຂົ້າເຖິງຂໍ້ມູນທາງດ້ານສຸຂະພາບຈະເລີນພັນຂອງຊາວໜຸ່ມ ແລະ ເຍົາວະຊົນຍັງຕໍ່າ;

8. ອັດຕາການແຜ່ເຊື້ອ HIV: ໃນປະຊາກອນແມ່ນຕໍ່າ (0.2%), ແຕ່ວ່າຊາວໜຸ່ມຍັງມີພຶດຕິກຳທີ່ມີຄວາມສ່ຽງສູງ ເຊັ່ນ: ການມີຄູ່ຮ່ວມເພດຫຼາຍຄົນ, ການມີເພດສຳພັນກ່ອນແຕ່ງງານ ແລະ ອັດຕາສ່ວນຜູ້ໃຊ້ຖົງຢາງອະນາໄມຍັງຕໍ່າ, ອັດຕາສ່ວນຊາວໜຸ່ມ, ເຍົາວະຊົນທີ່ບໍ່ມີຄວາມຮູ້ກ່ຽວກັບ HIV/AIDS ມີເຖິງສາມສ່ວນສີ່, ຍິງໜຸ່ມຈຳນວນໜຶ່ງສ່ວນສີ່ ແລະ ຊາຍໜຸ່ມຈຳນວນໜຶ່ງສ່ວນຫ້າໃນເກນອາຍຸ 15 ຫາ 19 ປີ ເຄີຍມີເພດສຳພັນ ແລະ ມີພຽງແຕ່ 0.7% ຂອງຍິງໜຸ່ມ ອາຍຸ 15- 19 ປີ ແລະ 1% ຂອງຊາຍໜຸ່ມໃນເກນອາຍຸ 20-24 ປີ ໃຊ້ຖົງຢາງອະນາໄມ;

9. ການດື່ມເຄື່ອງດື່ມທີ່ມີທາດເຫຼົ້າ ແລະ ການໃຊ້ສິ່ງເສບຕິດ: ການດື່ມເຫຼົ້າ ແລະ ໃຊ້ສານເສບຕິດ (ຢາບ້າ ແລະ ຢາສູບ) ກຳລັງກາຍເປັນບັນຫາໃຫຍ່ສຳລັບຊາວໜຸ່ມ ແລະ ເຍົາວະຊົນ;

10. ການເຂົ້າເຖິງການໃຫ້ຄຳປຶກສາ: ການເຂົ້າເຖິງຄຳປຶກສາເລື່ອງສຸຂະພາບທາງເພດ ແລະ ສຸຂະພາບຈະເລີນພັນຂອງຊາວໜຸ່ມ-ເຍົາວະຊົນ ແມ່ນຍັງຈຳກັດ, ຂໍ້ມູນຂ່າວສານ, ການບໍລິການສຳລັບແມ່ຍິງທີ່ແຕ່ງງານແລ້ວ ແລະ ຍັງບໍ່ທັນແຕ່ງງານ, ຄ່າບໍລິການ, ທັດສະນະຄະຕິຂອງພະນັກງານໃຫ້ບໍລິການ, ການປິດບັງໂດຍຕົນເອງ, ຄວາມອາຍ, ຄວາມເຂົ້າໃຈວ່າຈະເສຍຄວາມລັບເປັນສິ່ງກີດກັ້ນການເຂົ້າຫາ ແລະ ການນຳໃຊ້ບໍລິການຂອງຊາວໜຸ່ມ ແລະ ເຍົາວະຊົນ.

## 1.2. ຂອບເຂດກົດໝາຍ ແລະ ຍຸດທະສາດ

ກົດໝາຍຫຼາຍສະບັບທີ່ປົກປ້ອງ ແລະ ສົ່ງເສີມສິດທິຂອງຊາວໜຸ່ມ, ເຍົາວະຊົນໃນການເຂົ້າເຖິງບໍລິການ, ຮັກສາສຸຂະພາບ ແລະ ປົກປ້ອງເຂົາເຈົ້າຈາກອັນຕະລາຍຕໍ່ສຸຂະພາບ, ສິດທິຂອງຊາວໜຸ່ມໃນການເຂົ້າເຖິງການບໍລິການຮັກສາສຸຂະພາບ ແມ່ນໄດ້ລະບຸໄວ້ໃນມາດຕາ 4 ຂອງກົດໝາຍວ່າດ້ວຍການຮັກສາສຸຂະພາບ (2005) ຊຶ່ງກຳນົດໄວ້ວ່າປະຊາຊົນທຸກຄົນ ໃນ ສປປ ລາວ ລວມທັງຊາວໜຸ່ມ ໂດຍບໍ່ຈຳແນກເພດ, ອາຍຸ ແລະ ເຊື້ອຊາດ, ມີສິດໄດ້ຮັບການຮັກສາສຸຂະພາບ ໃນດ້ານນະໂຍບາຍ ແລະ ຍຸດທະສາດຂອງຂະແໜງການສາທາລະນະສຸກ, ກະຊວງສາທາລະນະສຸກ ຮັບປະກັນວ່າໝົດທຸກຄົນ (ໂດຍສະເພາະແມ່ນຊາວໜຸ່ມ) ສາມາດເຂົ້າເຖິງການດູແລຮັກສາສຸຂະພາບທົ່ວໄປ, ການດູແລຮັກສາສຸຂະພາບທາງເພດ ແລະ ສຸຂະພາບຈະເລີນພັນ, ສິດທິເຫຼົ່ານີ້ ຍັງໄດ້ຮັບການປົກປ້ອງຈາກນະໂຍບາຍແຫ່ງຊາດ ວ່າດ້ວຍສຸຂະພາບຈະເລີນພັນ (ກະຊວງສາທາລະນະສຸກ, 2005).

## 1.3. ທິດທາງຍຸດທະສາດ

ເພື່ອໃຫ້ຊາວໜຸ່ມ-ເຍົາວະຊົນສາມາດພັດທະນາ ແລະ ບັນລຸທ່າແຮງອັນເຕັມສ່ວນຂອງຕົນ, ສຸຂະພາບແຂງແຮງດີ ເປັນສິ່ງສຳຄັນ ນອກຈາກນັ້ນ, ເຂົາເຈົ້າຍັງຕ້ອງໃຊ້ຊີວິດແບບກ້າວໜ້າບໍ່ບັ່ນທອນສຸຂະພາບພະລານາໄມຂອງຕົນ, ການເຂົ້າເຖິງຂໍ້ມູນຂ່າວສານ, ຄວາມຮູ້ທີ່ຖືກຕ້ອງກ່ຽວກັບສຸຂະພາບທາງເພດ, ສຸຂະພາບຈະເລີນພັນ ມີສາຍສຳພັນທີ່ດີໃນສັງຄົມ ແລະ ພຶດຕິກຳດ້ານບວກອື່ນໆເປັນເງື່ອນໄຂທີ່ທຸກຝ່າຍຍອມຮັບວ່າຈະມີຜົນດີໄລຍະຍາວຕໍ່ສຸຂະພາບຂອງຄົນເຮົາ ສະນັ້ນ,ການແກ້ບັນຫາການແຕ່ງງານກ່ອນໄວອັນຄວນ,ການມີລູກແຕ່ອາຍຸຍັງນ້ອຍ ການຂາດໂພຊະນາການ, ການປັບປຸງການເຂົ້າເຖິງການບໍລິການສຸຂະພາບທາງເພດ, ຈະເລີນພັນ, ລວມທັງການຄຸມກຳເນີດ ແລະ ການສົ່ງເສີມວິຖີຊີວິດທີ່ດີຕໍ່ສຸຂະພາບຈຶ່ງເປັນບຸລິມະສິດທີ່ເປັນຈຸດສຸມຂອງຍຸດທະສາດສະບັບນີ້.



1. ຖືເອົາວິທີການຮ່ວມມືຫຼາຍຂະແໜງການ ແລະ ຫຼາຍຍຸດທະສາດເພື່ອປ້ອງກັນການແຕ່ງງານກ່ອນໄວອັນຄວນ ແລະ ການມີລູກແຕ່ອາຍຸຍັງນ້ອຍດ້ວຍການລະດົມຊຸກຍູ້ໃຫ້ຄອບຄົວສົ່ງເສີມເດັກຍິງບໍ່ໃຫ້ປະລະການຮຽນ, ສົ່ງເສີມການສຶກສາຊັ້ນສູງ ແລະ ເພີ່ມໂອກາດການມີວຽກເຮັດງານທຳ;
2. ປ້ອງກັນການແຕ່ງງານກ່ອນໄວອັນຄວນດ້ວຍການປູກຈິດສຳນຶກກ່ຽວກັບຜົນກະທົບທາງລົບຂອງການແຕ່ງງານກ່ອນໄວອັນຄວນ, ສົ່ງເສີມຄວາມເຂັ້ມແຂງຂອງກົນໄກ ເພື່ອຈັດຕັ້ງປະຕິບັດ ແລະ ບັງຄັບໃຊ້ກົດໝາຍຄອບຄົວ;
3. ປັບປຸງໂພຊະນາການ ແລະ ຫຼຸດຜ່ອນອັດຕາສ່ວນພະຍາດເລືອດຈາງທີ່ເກີດຂຶ້ນກັບເຍົາວະຊົນ, ໂດຍສະເພາະຍິງໜຸ່ມຜ່ານໂຄງການສົ່ງເສີມຄວາມເຂັ້ມແຂງ ເຊັ່ນ: ການສະໜອງອາຫານໃນໂຮງຮຽນ, ການສົ່ງເສີມການເຮັດສວນຄົວ, ການສົ່ງເສີມການປູກພືດຜັກອິນຊີ, ການຂ້າແມ່ທ້ອງ, ການເສີມທາດເຫຼັກ ນອກຈາກນັ້ນ, ຕ້ອງດຳເນີນໂຄງການໂຄສະນາເພື່ອປ່ຽນແປງພຶດຕິກຳກ່ຽວກັບໂພຊະນາການ ແລະ ສຸຂະອະນາໄມ;
4. ປັບປຸງການເຂົ້າເຖິງບໍລິການທາງດ້ານການແພດ, ຜູ້ຊຳນານໃນການປະດຸງຄັນ ແລະ ເພີ່ມທະວີອັດຕາສ່ວນການເກີດລູກໃນສະຖານບໍລິການສາທາລະນະສຸກເພື່ອປັບປຸງສຸຂະພາບຂອງແມ່ ແລະ ເດັກ ໂດຍສະເພາະເຂດຊົນນະບົດທີ່ບໍ່ມີເສັ້ນທາງເຂົ້າເຖິງ;
5. ສົ່ງເສີມການບໍລິການສຸຂະພາບແບບເປັນມິດຕໍ່ຊາວໜຸ່ມ, ເຍົາວະຊົນ ດ້ວຍການປັບປຸງການເຂົ້າເຖິງການບໍລິການ, ການສະໜອງຜະລິດຕະພັນຈະເລີນພັນ ແລະ ພະນັກງານສາທາລະນະສຸກທີ່ໄດ້ຮັບການຝຶກອົບຮົມ ເພື່ອຮັບປະກັນຄວາມເປັນສ່ວນຕົວ ແລະ ການຮັກສາຄວາມລັບ;
6. ສົ່ງເສີມການເຂົ້າເຖິງການບໍລິການຄຸມກຳເນີດຂອງຊາວໜຸ່ມ ໂດຍບໍ່ຈຳແນກວ່າແຕ່ງງານ ຫຼື ຍັງ, ຮັບປະກັນການສະໜອງຜະລິດພັນຄຸມກຳເນີດ ແລະ ການບໍລິການໃຫ້ຄຳປຶກສາບໍ່ເສຍຄ່າຢູ່ຕາມສະຖານບໍລິການ ແລະ ອາສາສະໝັກແພດບ້ານຖ້າເປັນເຂດຊົນນະບົດ;



7. ຂະຫຍາຍການປະກັນສຸຂະພາບແຫ່ງຊາດ ໃຫ້ກວມເອົາການບໍລິການສຸຂະພາບທາງເພດ ແລະ ສຸຂະພາບຈະເລີນພັນເພື່ອຫຼຸດຜ່ອນຄ່າໃຊ້ຈ່າຍຂອງຜູ້ຊົມໃຊ້ບໍລິການທີ່ເປັນຊາວໜຸ່ມ ແລະ ເຍົາວະຊົນ;
8. ສົ່ງເສີມການເຂົ້າເຖິງຂໍ້ມູນຂ່າວສານ, ການໃຫ້ຄໍາປຶກສາ, ການບໍລິການເພື່ອປ້ອງກັນ, ປິ່ງປົວ ມະຕິ ແລະ ປິ່ນປົວພະຍາດຕິດຕໍ່ທາງເພດສໍາພັນ, HIV ໂດຍຜ່ານສະຖານບໍລິການ ແລະ ບໍລິການໃນຊຸມຊົນ;
9. ຍົກສູງສະຕິ ແລະ ຄວາມຮັບຜິດຊອບຕໍ່ພຶດຕິກໍາທີ່ມີຄວາມສ່ຽງດ້ານສຸຂະພາບໂດຍໂຄສະນາສຸຂະສຶກສາເພດສຶກສາໃນໂຮງຮຽນ ແລະ ສະຖານການສຶກສາ;
10. ສົ່ງເສີມວິຖີຊີວິດທີ່ດີຕໍ່ສຸຂະພາບລວມທັງການປ້ອງກັນການນໍາໃຊ້ສານເສບຕິດທຸກປະເພດໂດຍການດໍາເນີນໂຄງການປູກຈິດສໍານຶກແນໃສ່ກຸ່ມຊາວໜຸ່ມໂດຍການນໍາພາຂອງສູນກາງຊາວໜຸ່ມປະຊາຊົນ ປະຕິວັດລາວ, ສູນກາງສະຫະພັນແມ່ຍິງລາວ ແລະ ສະຖານການສຶກສາອື່ນໆ;
11. ຖືເອົາສຸຂະພາບຈິດຂອງຊາວໜຸ່ມ, ເຍົາວະຊົນເປັນບູລິມະສິດດ້ວຍການເພີ່ມທະວີການລົງທຶນໃສ່ໃນການຄົ້ນຄວ້າ ແລະ ການເສີມສ້າງຄວາມເຂັ້ມແຂງ ການບໍລິການທີ່ມີຢູ່ເພື່ອຂະຫຍາຍການໃຫ້ຄໍາປຶກສາດ້ານຈິດຕະວິທະຍາໃນໂຮງຮຽນ ແລະ ໃນສະຖານບໍລິການສາທາລະນະສຸກຕ່າງໆ;
12. ສົ່ງເສີມການຄົ້ນຄວ້າວິໄຈກ່ຽວກັບບັນຫາດ້ານສຸຂະພາບ ແລະ ສະຫັວດດີພາບຂອງຊາວໜຸ່ມ, ເຍົາວະຊົນ ເພື່ອເປັນຫຼັກຖານນໍາໃຊ້ໃນການວາງຍຸດທະສາດ ແລະ ການສ້າງແຜນງານ;
13. ສ້າງລະບົບເກັບກໍາຂໍ້ມູນທີ່ແຍກເພດ ແລະ ອາຍຸເຊິ່ງຈະເຮັດໃຫ້ພາກສ່ວນກ່ຽວຂ້ອງສາມາດຕິດຕາມການເຂົ້າເຖິງບໍລິການຂອງແຕ່ລະກຸ່ມອາຍຸແຕ່ລະເພດ;
14. ປະຕິບັດກົດໝາຍຄອບຄົວໂດຍສະເພາະກ່ຽວກັບອາຍຸຕາມກົດໝາຍກ່ອນທີ່ຄູ່ບ່າວສາວຈະສາມາດແຕ່ງງານກັນໂດຍຖືກຕ້ອງຕາມກົດໝາຍ;

15. ເຜີຍແຜ່ຄວາມຮູ້ກ່ຽວກັບລະເບີດທີ່ບໍ່ທັນແຕກທີ່ມີຜົນກະທົບຕໍ່ຮ່າງກາຍ ແລະ ເປັນໄພຂົ່ມຂູ່ຕໍ່ການດຳລົງຊີວິດຂອງປະຊົນລາວບັນດາເຜົ່າ ໂດຍສະເພາະຊາວໜຸ່ມ ແລະ ເຍົາວະຊົນ;

16. ປູກຈິດສຳນຶກກ່ຽວກັບຄວາມປອດໄພໃນການບໍລິໂພກອາຫານໃຫ້ປະຊາກອນທັງໝົດ ລວມທັງຊາວໜຸ່ມ ແລະ ເຍົາວະຊົນ ເພື່ອໃຫ້ເຂົາເຈົ້າບໍລິໂພກອາຫານທີ່ເໝາະສົມ ແລະ ຮັກສາອະນາໄມສາມສະອາດ: ກິນສະອາດ, ດື່ມສະອາດ ແລະ ຢູ່ໃນສະພາບແວດລ້ອມທີ່ສະອາດ;

17. ສຶກສາສຸຂະອະນາໄມ, ສົ່ງເສີມການເຂົ້າເຖິງບໍລິການຝາກທ້ອງ, ການເກີດລູກໃນສະຖານບໍລິການ ແລະ ການດູແລຫຼັງເກີດລວມທັງການສັກຢາກັນພະຍາດເດັກໃຫ້ຄົບກຳນົດ;

18. ປູກຈິດສຳນຶກກ່ຽວກັບອຸປະຕິເຫດຕາມທ້ອງຖະໜົນໃຫ້ຄວາມຮູ້ກ່ຽວກັບຄວາມປອດໄພ ແລະ ການປົກປ້ອງໃນການຂັບຂີ່ເຊັ່ນການໃສ່ໝວກກັນກະທົບ;

19. ນຳໃຊ້ເຕັກໂນໂລຊີການສື່ສານເພື່ອໃຫ້ທ່ານໝໍທີ່ຊຳນານຢູ່ເຂດຕົວເມືອງຊ່ວຍເຫຼືອພະນັກງານສາທາທີ່ບໍ່ມີປະສົບການຫຼາຍໃນເຂດຊົນນະບົດເພື່ອໃຫ້ຊາວໜຸ່ມ, ເຍົາວະຊົນໃນເຂດຊົນນະບົດເຂົ້າເຖິງບໍລິການທີ່ມີຄຸນນະພາບຢ່າງທົ່ວເຖິງ.


me
body
my
future
planet
UNFPA

# 2. ການສຶກສາ, ກິລາ ແລະ ການຝຶກອົບຮົມ

## 2.1. ສະພາບລວມດ້ານການສຶກສາ, ກິລາ ແລະ ການຝຶກອົບຮົມ

ສປປ ລາວ ມີຄວາມຄືບໜ້າຢ່າງຕໍ່ເນື່ອງກ່ຽວກັບວຽກງານການສຶກສາ ໂດຍສະເພາະການປະຕິບັດນະໂຍບາຍເອົາການສຶກສາຂັ້ນປະຖົມເປັນພາກບັງຄັບ ແລະ ຄວາມຄືບໜ້າກ່ຽວກັບອັດຕາການເຂົ້າຮຽນສຸດທິແຫ່ງຊາດ ເຊິ່ງມີຄາດໝາຍ 98% ສໍາລັບທັງເດັກຍິງ ແລະ ເດັກຊາຍ, ຜົນສໍາເລັດຂອງການສຶກສາໃນຂັ້ນມັດທະຍົມຕົ້ນຍັງຄົງຕໍ່າ, ອັດຕາເສັງຈົບມໍຕົ້ນຕໍ່າກວ່າອັດຕາເຂົ້າຮຽນຫຼາຍສົມຄວນຊຶ່ງໝາຍເຖິງອັດຕາປະລະສູງນັ້ນເອງ, ແຕ່ປີ 2012 ຫາ 2017 ອັດຕາລອດເຫຼືອໃນຂັ້ນມັດທະຍົມຕົ້ນເພີ່ມຂຶ້ນເຖິງ 73% ໃນຄະນະທີ່ອັດຕາລອດເຫຼືອຂັ້ນມໍປາຍ ມີພຽງແຕ່ 45%. ເຫດຜົນອາດຍ້ອນການສຶກສາບໍ່ແມ່ນຄວາມຈໍາເປັນຂອງປະຊາຊົນ, ການຄ້າງຫ້ອງເຮັດໃຫ້ເດັກໝົດຄວາມສົນໃຈໃນການຮຽນ, ເດີນທາງໄກເຮັດໃຫ້ເດັກປະລະໃນທີ່ສຸດ, ບາງສະຖິຕິສໍາຄັນໃນວຽກງານການສຶກສາ ມີຄືດັ່ງນີ້: (Voluntary National Review, 2018)

1. ອັດຕາສ່ວນການຮູ້ໜັງສືຍັງມີຄວາມແຕກຕ່າງລະຫວ່າງຍິງ-ຊາຍ, ຜູ້ຍິງມີອັດຕາຕໍ່າກວ່າຜູ້ຊາຍໃນກຸ່ມຊາຍໜຸ່ມ 15-24 ປີ, 85% ແມ່ນຮູ້ໜັງສືທຽບກັບຜູ້ຍິງກຸ່ມອາຍຸດຽວກັນແມ່ນ 78%, ອັດຕາການຮູ້ໜັງສືຍັງຕໍ່າຫລາຍໃນກຸ່ມອາຍຸ 25-34 ປີ ເຊິ່ງມີ 76% (ຊ) ແລະ 62% (ຍ) ຕາມລໍາດັບ. ນອກນີ້, ຍັງສັງເກດເຫັນວ່າເດັກຍິງຈາກບາງຊົນເຜົ່າ ແລະ ຖານະຍາກຈົນແມ່ນດ້ອຍໂອກາດດ້ານການສຶກສາກວ່າຄົນອື່ນ. (ESSDP 2016-2020);
2. ຍິງໜຸ່ມປະມານ 42% ຈາກກຸ່ມອາຍຸ 15-17 ປີ ບໍ່ໄດ້ເຂົ້າໂຮງຮຽນຫຼາຍກວ່າໜຶ່ງໃນຊາວຄົນບໍ່ເຄີຍເຂົ້າໂຮງຮຽນ ແລະ ໜຶ່ງໃນຫ້າປະລະການຮຽນ;
3. ເຖິງແມ່ນວ່າມີຄວາມຄືບໜ້າໃນວຽກງານບົດບາດຍິງ-ຊາຍໃນການເຂົ້າໂຮງຮຽນ ແລະອັດຕາລອດເຫຼືອໃນຂັ້ນປະຖົມຍັງມີຄວາມແຕກຕ່າງລະຫວ່າງຍິງ-ຊາຍ ໃນລະດັບມັດທະຍົມ ແລະ ຄວາມແຕກຕ່າງຍິ່ງຫຼາຍໃນເຂດຊົນນະບົດ ແລະ ກຸ່ມທີ່ມີສະຖານະພາບທາງເສດຖະກິດຫຍຸ້ງຍາກ;



4. ຄວາມຫຍຸ້ງຍາກທາງດ້ານການເງິນ, ການສົ່ງເສີມຂອງພໍ່ແມ່, ສະຖານທີ່ການສຶກສາທີ່ບໍ່ເອື້ອອໍານວຍ ແລະ ການເດີນທາງໄກໄປຫາໂຮງຮຽນເປັນບັນດາປັດໄຈທີ່ເປັນອຸປະສັກຕໍ່ການສືບຕໍ່ການຮຽນຂອງຍິງໜຸ່ມ (ການວິເຄາະສະຖານະການຂອງຊາວໜຸ່ມ-ເຢົາວະຊົນ);
5. ເຖິງແມ່ນວ່າຄວາມຕ້ອງການເຕັກນິກວິຊາການໃນຂະແໜງກະສິກໍາ, ກໍ່ສ້າງ ແລະ ອື່ນໆຄວາມຕ້ອງການເຂົ້າຮຽນໃນຂະແໜງອາຊີວະຍັງຕໍ່າເຫັນໄດ້ຈາກອັດຕາການລົງທະບຽນຮຽນໃນຂະແໜງດັ່ງກ່າວທີ່ຍັງຕໍ່າ, ຍ້ອນການສຶກສາໃນລະດັບອາຊີວະ ແລະ ເຕັກນິກແມ່ນບໍ່ໄດ້ຮັບຄວາມນິຍົມເມື່ອທຽບກັບການສຶກສາຊັ້ນສູງ ຫຼື ຂາດຄວາມເຂົ້າໃຈທີ່ຖືກຕ້ອງ;
6. ເຫັນວ່າຍັງມີຄວາມຈໍາເປັນຕ້ອງໄດ້ສຸມໃສ່ແຜນງານທີ່ສົ່ງເສີມການສຶກສາທີ່ກຽມຄວາມພ້ອມໃຫ້ແກ່ການຈ້າງງານ ແລະ ການພັດທະນາຄວາມເປັນຜູ້ປະກອບການເພື່ອສ້າງຊາວໜຸ່ມທີ່ພ້ອມເຂົ້າສູ່ອາຊີບ ແລະ ການຈ້າງງານ;
7. ສະຖາບັນການກິລາຕ້ອງໄດ້ສ້າງຄວາມເຂັ້ມແຂງແຕ່ສູນກາງຮອດທ້ອງຖິ່ນເພື່ອປັບປຸງມາດຕະຖານຂອງກິລາລາວ, ສ້າງສິ່ງອໍານວຍຄວາມສະດວກ ແລະ ສະໜອງອຸປະກອນກິລາໃຫ້ພຽງພໍ;
8. ກິລາສໍາລັບຊາວໜຸ່ມ-ເຢົາວະຊົນບໍ່ພຽງແຕ່ເຮັດໃຫ້ສຸຂະພາບກາຍ ແລະ ສຸຂະພາບໃຈໄດ້ຮັບການປັບປຸງແຕ່ຍັງສົ່ງເສີມວິຖີຊີວິດທີ່ມີຜົນດີຕໍ່ສຸຂະພາບ, ມີລະບຽບວິໄນ, ຄວາມເປັນຜູ້ນໍາ ແລະ ຈິດວິນຍານຂອງທີມງານນໍາອີກ, ກິລາ ຂ້ອນຂ້າງເປັນທີ່ນິຍົມຂອງຄົນລາວ ແລະ ມີການຈັດການແຂ່ງຂັນກິລາປະເພດຕ່າງໆໃນທຸກລະດັບ ເຊັ່ນ: ໃນບ່ອນເຮັດວຽກ, ໃນບ້ານ ແລະ ໃນຊຸມຊົນ;
9. ໂອກາດໃນການເຂົ້າເຖິງການຫຼິ້ນກິລາແມ່ນບໍ່ເທົ່າທຽມກັນ ໃນທຸກຂົງເຂດ ແລະ ລະຫວ່າງກຸ່ມຄົນ, ສະຖາບັນການກິລາຕ້ອງໄດ້ສ້າງຄວາມເຂັ້ມແຂງແຕ່ສູນກາງຮອດທ້ອງຖິ່ນເພື່ອປັບປຸງມາດຕະຖານຂອງກິລາລາວ, ສ້າງສິ່ງອໍານວຍຄວາມສະດວກ ແລະ ສະໜອງອຸປະກອນກິລາໃຫ້ພຽງພໍ.

## 2.2. ຂອບເຂດກົດໝາຍ ແລະ ຍຸດທະສາດ

ມາດຕາ 6 (ປັບປຸງ) ວ່າດ້ວຍສິດຂອງພົນລະເມືອງໃນການສຶກສາ (ກົດໝາຍວ່າດ້ວຍການສຶກສາປີ 2015) ກໍານົດໄວ້ວ່າພົນລະເມືອງທຸກຄົນ ໃນ ສປປ ລາວ ໂດຍບໍ່ຈໍາແນກສັນຊາດ, ເຊື້ອຊາດ, ສາດສະໜາ, ເຜົ່າ, ເພດ, ໄວ, ສະຖານະພາບທາງດ້ານຮ່າງກາຍ ແລະ ດ້ານເສດຖະກິດ-ສັງຄົມ ລ້ວນແຕ່ມີສິດໄດ້ຮັບການສຶກສາທີ່ມີຄຸນນະພາບ, ການຮຽນຮູ້ຕະຫຼອດຊີວິດຢ່າງເທົ່າທຽມກັນຕາມກົດໝາຍ ແລະ ລະບຽບການ, ອັນນີ້ແມ່ນເລີ່ມຈາກອາຍຸ 6 ປີ ດ້ວຍການສຶກສາຊັ້ນມັດທະຍົມທີ່ເປັນທາງເລືອກ ແລະ ບໍ່ມີຢູ່ໃນທຸກບ່ອນ, ສິດທິໃນການໄດ້ຮັບການສຶກສາຍັງໄດ້ຮັບການປົກປ້ອງໂດຍກົດໝາຍວ່າດ້ວຍການປົກປ້ອງສິດ ແລະ ຜົນປະໂຫຍດຂອງເດັກ (2007).

ແຜນພັດທະນາຂະແໜງສຶກສາ ແລະ ກິລາຂອງກະຊວງສຶກສາທິການ ແລະ ກິລາໄດ້ຖືເອົາການສຶກສາຂັ້ນປະຖົມເປັນພາກບັງຄັບເປັນບຸລິມະສິດ ນອກຈາກນັ້ນ, ດັ່ງທີ່ໄດ້ລະບຸໄວ້ໃນກອບວຽກພັດທະນາຂະແໜງສຶກສາ (2009-2015) ກະຊວງສຶກສາທິການ ແລະ ກິລາ ເນັ້ນໜັກການປັບປຸງການເຂົ້າເຖິງການສຶກສາຂັ້ນພື້ນຖານຂອງເດັກຍິງ, ເດັກທີ່ມີຄວາມຕ້ອງການພິເສດ ແລະ ເດັກນ້ອຍທີ່ຢູ່ໃນເຂດຫ່າງໄກສອກຫຼີກ, ກະຊວງຍັງມີໜ້າທີ່ຮັບຜິດຊອບຕໍ່ການສຶກສາ, ການຝຶກອົບຮົມເຕັກນິກ ແລະ ວິຊາຊີບສ້າງສະພາບແວດລ້ອມໃຫ້ຄົນຮຸ່ນໜຸ່ມຮູ້ຮັກມັກໃນການຮຽນສາຍວິຊາຊີບບໍ່ໃຫ້ແລ່ນຕາມກະແສ, ແຜນການພັດທະນາຂະແໜງການສຶກສາ ແລະ ກິລາ (ESSDP) 2016-2020 ສຸມທຸກຄວາມພະຍາຍາມເພື່ອບັນລຸເປົ້າໝາຍທີ່ກໍານົດໄວ້ພາຍໃຕ້ແຜນການດັ່ງກ່າວ.





## 2.3. ທິດທາງຍຸດທະສາດ

### ກ) ການສຶກສາ ແລະ ຝຶກອົບຮົມ

ຍຸດທະສາດການພັດທະນາຊາວໜຸ່ມ, ເຍົາວະຊົນລາວ ເນັ້ນໜັກເຖິງຄວາມສຳຄັນຂອງການພັດທະນາກຳລັງແຮງງານທີ່ມີປະສິດທິພາບທີ່ສາມາດປະກອບສ່ວນແບບຍືນຍົງເຂົ້າໃນການພັດທະນາເສດຖະກິດຂອງປະເທດ ແລະ ປະກອບສ່ວນເຂົ້າໃນຄວາມພະຍາຍາມຂອງລັດຖະບານ ເພື່ອຫຼຸດພົ້ນອອກສະຖານະພາບປະເທດດ້ອຍພັດທະນາເພື່ອບັນລຸຈຸດປະສົງດັ່ງກ່າວ, ຊາວໜຸ່ມ-ເຍົາວະຊົນທົ່ວປະເທດຕ້ອງເຂົ້າເຖິງການສຶກສາທີ່ມີຄຸນນະພາບສູງ ແລະ ໄດ້ຮັບໂອກາດໃນການພັດທະນາທັກສະທີ່ຈຳເປັນຢ່າງເທົ່າທຽມກັນນອກຈາກນັ້ນ, ຄວາມຮູ້ ແລະ ທັກສະຕ່າງໆຕ້ອງແທດເໝາະກັບຄວາມຕ້ອງການຂອງຕະຫຼາດເພື່ອໃຫ້ພວກເຂົາເຈົ້າມີວຽກເຮັດງານທຳຕາມທີ່ຕະຫຼາດສະໜອງໃຫ້ຢາກເຮັດໄດ້ແນວນັ້ນຕ້ອງມີທິດທາງຍຸດທະສາດ ດັ່ງລຸ່ມນີ້:

1. ອີງການຈັດຕັ້ງລັດ, ສັງຄົມ ແລະ ຄອບຄົວຊຸກຍູ້ໃຫ້ຊາວໜຸ່ມເຍົາວະຊົນເອົາໃຈໃສ່ໃນການສຶກສາ ແລະ ພັດທະນາຕົນເອງໃຫ້ກາຍເປັນພົນລະເມືອງດີ, ມີຄຸນສົມບັດ, ມີຄວາມຮູ້ຄວາມສາມາດ, ມີວິຊາອາຊີບ, ມີຄວາມຊຳນິຊຳນານ, ຮູ້ຮັກສາສິ່ງເສີມສີລະປະວັດທະນາທຳ ແລະ ຮີດຄອງປະເພນີອັນດີງາມຂອງຊາດ;
2. ເພີ່ມຈຳນວນເດັກຍິງເຂົ້າໂຮງຮຽນໃນທຸກລະດັບ ແລະ ຮັບປະກັນວ່າເດັກຍິງໂດຍສະເພາະແມ່ນໃນເຂດຊົນນະບົດບໍ່ໃຫ້ປະລະການຮຽນໂດຍສະໜອງທາງເລືອກຕ່າງໆ ເຊັ່ນ: ການປັບປຸງພື້ນຖານໂຄງລ່າງ, ສະໜອງສິ່ງຈູງໃຈ,ການໃຫ້ທຶນການສຶກສາແລະໂຄງການອາຫານໃນໂຮງຮຽນເປັນຕົ້ນ;
3. ຕິດຕາມຊາວໜຸ່ມທີ່ປະລະການຮຽນໃນຂັ້ນມັດທະຍົມ, ໂດຍສະເພາະເດັກຍິງ ເພື່ອສ້າງໂອກາດການຮຽນຮູ້ດ້ານວິຊາຊີບຕ່າງໆໃຫ້ກາຍເປັນກຳລັງແຮງງານທີ່ມີຄວາມຊຳນານງານ;

4. ສະໜັບສະໜູນການຂ້າມຜ່ານຈາກໂຮງຮຽນໄປສູ່ການເຮັດວຽກຜ່ານການໃຫ້ຄຳປຶກສາກ່ຽວກັບວຽກເຮັດງານທຳຕັ້ງແຕ່ເຂົາເຈົ້າຍັງຢູ່ໃນໂຮງຮຽນ ແລະ ສະຖານອາຊີວະສຶກສາ ແລະ ເຕັກນິກວິຊາຊີບອື່ນໆ;

5. ດຶງດູດເອົາຊາວໜຸ່ມ-ເຍົາວະຊົນໃຫ້ເຂົ້າຮ່ວມໂຄງການການສຶກສາເຕັກນິກ ແລະ ວິຊາຊີບໂດຍການສະໜອງທຶນການສຶກສາ, ໂຄງລ່າງພື້ນຖານ ແລະ ສິ່ງອຳນວຍຄວາມສະດວກທີ່ຢູ່ອາໄສນຳໜ້າໂດຍສູນກາງຊາວໜຸ່ມ ປະຊາຊົນ ປະຕິວັດລາວ ແລະ ສູນກາງສະຫະພັນແມ່ຍິງລາວ;

6. ສະໜອງທຶນການສຶກສາບົນພື້ນຖານຄວາມຮູ້ຄວາມສາມາດຕົວຈິງ ແລະ ສິ່ງເອື້ອອຳນວຍອື່ນໆທີ່ສະໜັບສະໜູນການສຶກສາໂດຍສະເພາະແມ່ນການສຶກສາຊັ້ນສູງ;

7. ສົ່ງເສີມການໃຫ້ຄຳປຶກສາ, ແນະນຳສາຍວິຊາຮຽນ ແລະ ຝຶກອົບຮົມເພື່ອໃຫ້ຊາວໜຸ່ມໄດ້ຮຽນ ຫຼື ຝຶກອົບຮົມໃນຂະແໜງການຕ່າງໆທີ່ສອດຄ່ອງກັບຄວາມຮູ້ ແລະ ທັກສະທີ່ຕະຫຼາດຕ້ອງການ ແລະ ເພື່ອຮັບປະກັນວ່າທັກສະຂອງກຳລັງແຮງງານພຽງພໍ ແລະ ເໝາະສົມກັບຄວາມຕ້ອງການຂອງຕະຫຼາດທັງພາຍໃນ ແລະ ຕ່າງປະເທດ;

8. ສົ່ງເສີມຄວາມເຂັ້ມແຂງ ແລະ ສົ່ງເສີມການສຶກສາຂັ້ນອາຊີວະສຶກສາໂດຍມີຈຸດສຸມແນໃສ່ເມືອງທີ່ທຸກຍາກ ແລະ ດ້ອຍໂອກາດ ຂອງ ສປປ ລາວ, ຖືເອົາການສົ່ງເສີມອາຊີວະສຶກສາທີ່ມີຄວາມຕ້ອງການທັງພາຍໃນ ແລະ ຕ່າງປະເທດເປັນຈຸດສຸມ;

9. ເຊື່ອມສານບົດຮຽນກ່ຽວກັບເພດສຶກສາ, ທັກສະຊີວິດເຂົ້າໃນຫຼັກສູດການສຶກສາ-ກິລາໃຫ້ກວ້າງຂວາງໃນໂຮງຮຽນ ແລະ ສະຖານການສຶກສາອື່ນໆ ເຊັ່ນ: ອາຊີວະ ແລະ ຫຼັກສູດຝຶກອົບຮົມເພື່ອສ້າງຄວາມຮູ້ ແລະ ທັກສະໃນຊາວໜຸ່ມ ເພື່ອໃຫ້ພວກເຂົາຕັດສິນໃຈໃນຊີວິດ ແລະ ມີພຶດຕິກຳທີ່ດີຕໍ່ສຸຂະພາບນັບມື້ນັບຫຼາຍຂຶ້ນ;

10. ຊຸກຍູ້ໃຫ້ຊາວໜຸ່ມໃຫ້ກາຍເປັນນາຍຊ່າງເຕັກນິກ, ປະກອບອາຊີບຢ່າງມີຄວາມຊຳນານ, ສົ່ງເສີມວິທະຍາສາດ ແລະ ເຕັກໂນໂລຊີທີ່ທັນສະໄໝເພື່ອຕອບສະໜອງຄວາມຕ້ອງການດ້ານເສດຖະກິດ-ສັງຄົມ ແລະ ການເລັ່ງພັດທະນາເຂດຊົນນະບົດຂອງປະເທດ;

11. ເຊື່ອມສານເອົາການສຶກສາ ເພື່ອການພັດທະນາແບບຍືນຍົງເຂົ້າໃນຫຼັກສູດການຮຽນການສອນ, ຫຼັກສູດການຝຶກອົບຮົມເພື່ອປູກຈິດສຳນຶກກ່ຽວກັບການອະນຸລັກຊັບພະຍາກອນທຳມະຊາດ ແລະ ຮັກສາສິ່ງແວດລ້ອມ;

12. ສົ່ງເສີມການນຳໃຊ້ເຕັກໂນໂລຊີຂໍ້ມູນຂ່າວສານ (ICT) ເຂົ້າການຮຽນການສອນເພື່ອໃຫ້ຊາວໜຸ່ມບໍລິໂພກສື່ໄດ້ຢ່າງປອດໄພ ແລະ ເປັນປະໂຫຍດຕໍ່ເຂົາເຈົ້າ ສະນັ້ນ, ຈະເຮັດໃຫ້ເຂົາເຈົ້າໄດ້ຮັບການປົກປ້ອງຈາກອັນຕະລາຍທີ່ອາດແຝງມາພ້ອມສື່ຕ່າງໆ;

13. ສົ່ງເສີມການສຶກສາຮຽນຮູ້ຕະຫຼອດຊີວິດ ແລະ ເຊື່ອມສານການຮຽນຮູ້ຕະຫຼອດຊີວິດເຂົ້າໃນແຜນພັດທະນາຊັບພະຍາກອນມະນຸດຂອງຂະແໜງການ ໂດຍສະເພາະການພັດທະນາຄວາມເປັນມືອາຊີບໃນໜ້າທີ່ຂອງພະນັກງານຊາວໜຸ່ມ;

14. ສົ່ງເສີມການສຶກສາກ່ຽວກັບຄວາມເປັນປະຊາກອນໂລກ, ສົ່ງເສີມການເຄົາລົບນັບຖືເຊິ່ງກັນ ແລະ ກັນ, ຄວາມຮັກໃນສັນຕິພາບ, ຄວາມສາມັກຄີ, ການຍອມຮັບເຊິ່ງກັນ ແລະ ກັນລະຫວ່າງເຊື້ອຊາດ, ຊົນເຜົ່າທັງພາຍໃນ ແລະ ຕ່າງປະເທດ, ຊາວໜຸ່ມ, ເຍົາວະຊົນຄວນຮຽນຮູ້ຄວາມແຕກຕ່າງທາງວັດທະນະທຳ, ສາສະໜາ ແລະ ຄວາມເຊື່ອຖືຂອງປະຊາຄົມໂລກ.

## ຂ) ກິລາ ແລະ ກາຍະກຳ

1. ສ້າງເງື່ອນໄຂໃຫ້ຊາວໜຸ່ມໄດ້ເຝິກແອບທັກສະ, ການຫຼິ້ນກິລາທຸກປະເພດທັງພື້ນເມືອງ ແລະ ສາກົນພ້ອມທັງອອກເຄື່ອນໄຫວທາງພາຍໃນ ແລະ ຕ່າງປະເທດ;
2. ສ້າງຄວາມເຂັ້ມແຂງທາງດ້ານວິທະຍາສາດການກິລາ-ກາຍະກຳຂອງຊາວໜຸ່ມ, ເຍົາວະຊົນຂະຫຍາຍຕາໜ່າງພື້ນຖານວັດຖຸເຕັກນິກເພື່ອຕອບສະໜອງໃຫ້ຊາວໜຸ່ມລາວໄດ້ຝຶກຊ້ອມ, ພັດທະນາຄູຝຶກ, ກຳມະການ, ນັກກາຍະພາບ ແລະ ຄູຝຶກນັກກິລາ;
3. ສ້າງພື້ນຖານໂຄງລ່າງສຳລັບກິລາ-ກາຍະກຳໂດຍການສະໜອງວັດຖຸອຸປະກອນທີ່ຮັບໃຊ້ການຮຽນ, ການສອນ, ສິລະປະວັນນະຄະດີ, ສະໜອງນັກປະພັນຄູອາຈານທີ່ຊຳນານງານດ້ານກິລາ, ສິລະປະວັນນະຄະດີ, ປຸກລະດົມຊຸກຍູ້ຊາວໜຸ່ມຜູ້ທີ່ມີພອນສະຫວັນ, ອານຸລັກຮັກສາວັດທະນາທຳ, ຮີດຄອງປະເພນີອັນດີງາມຂອງຊາດ, ສ້າງເງື່ອນໄຂໃຫ້ຊາວໜຸ່ມໄດ້ສະແດງອອກຜົນງານດ້ານສິລະປະ-ວັນນະຄະດີ ທາງພາຍໃນ ແລະ ຕ່າງປະເທດ;
4. ສົ່ງເສີມກິດຈະກຳສິລະປະວັນນະຄະດີໃນກຸ່ມຊາວໜຸ່ມ, ເຍົາວະຊົນ ເພື່ອສ້າງມະນຸດສຳພັນທີ່ດີ, ແນວຄິດສ້າງສັນ, ຄວາມກ້າສະແດງອອກ, ຄວາມເຂັ້ມແຂງທາງດ້ານຮ່າງກາຍ ແລະ ຈິດໃຈຂອງເຂົາເຈົ້າ;
5. ສົ່ງເສີມກຸ່ມຊາວໜຸ່ມ, ເຍົາວະຊົນທີ່ດ້ອຍໂອກາດ ເຊັ່ນ: ກຸ່ມນາງນ້ອຍ ໃຫ້ມີໂອກາດພັດທະນາດ້ານສິລະປະ ແລະ ກິລາ-ກາຍະກຳ.



# 3. ວຽກເຮັດງານທຳ ແລະ ການປະກອບການ

## 3.1. ສະພາບລວມດ້ານວຽກເຮັດງານທຳ ແລະ ການປະກອບການ

ໂດຍລວມແລ້ວ ສະພາບດ້ານວຽກເຮັດງານທຳ ແລະ ການປະກອບການພາຍໃນ ສປປ ລາວ ກໍ່ບໍ່ແຕກຕ່າງກັບສະພາບສາກົນ, ການເຂົ້າເຖິງການຈ້າງງານຂອງຊາວໜຸ່ມທີ່ຍັງບໍ່ມີປະສົບການ ແມ່ນມີຄວາມຫຍຸ້ງຍາກ. ນອກຈາກນັ້ນ, ການເຂົ້າເຖິງບໍລິການທີ່ສົ່ງເສີມການລິເລີ່ມການປະກອບການກໍ່ຍັງຈຳກັດ.

1. ອັດຕາຫວ່າງງານທົ່ວປະເທດແມ່ນ 9,7% ແລະ ອັດຕາຫວ່າງງານ ໃນກຸ່ມອາຍຸ 20 ຫາ 29 ຍິ່ງສູງກວ່າອັດຕາສະເລ່ຍລະດັບປະເທດ (ການສຳຫຼວດກຳລັງແຮງງານ 2017);
2. ກວ່າໜຶ່ງໃນສາມຂອງປະຊາກອນ ໃນ ສປປ ລາວ ເປັນຜູ້ອອກແຮງງານນອກລະບົບ (35%) ແລະ ເມື່ອລວມເຂົ້າກັບແຮງງານນອກລະບົບທີ່ຍັງມີຢູ່ໃນຂະແໜງ "ທາງການ" (ເຊັ່ນ: ຫົວໜ່ວຍທຸລະກິດ ແລະ ທຸລະກິດຄອບຄົວທີ່ບໍ່ມີສັນຍາວ່າຈ້າງຢ່າງຖືກຕ້ອງ) ອັດຕາສ່ວນແຮງງານນອກລະບົບສູງເຖິງ 83%. ໃນນັ້ນ, ແມ່ຍິງອອກແຮງງານຢູ່ໃນຖານະແຮງງານນອກລະບົບຫຼາຍກວ່າເມື່ອທຽບກັບຜູ້ຊາຍ;
3. ວຽກເຮັດງານທຳແບບດັ້ງເດີມບໍ່ແມ່ນການຈ້າງງານທີ່ຈະເຮັດໃຫ້ຊາວໜຸ່ມໄດ້ຫຼຸດພົ້ນອອກຈາກວົງຈອນຄວາມທຸກຍາກໄດ້, ຕົວເລກຊາວໜຸ່ມກວມເອົາ 37% ຂອງແຮງງານ "ບໍ່ເຕັມສ່ວນ"4 ສະທ້ອນໃຫ້ເຫັນເຖິງຄວາມຫຍຸ້ງຍາກທີ່ຊາວໜຸ່ມກຳລັງປະເຊີນເມື່ອເວົ້າເຖິງການເຂົ້າເຖິງຕະຫຼາດແຮງງານຢ່າງເຕັມສ່ວນ;
4. ໂອກາດການມີວຽກເຮັດງານທຳລະຫວ່າງຕົວເມືອງ, ຊົນນະບົດ, ຊົນນະບົດທີ່ບໍ່ມີເສັ້ນທາງເຂົ້າເຖິງ ແລະ ລະຫວ່າງຊາຍໜຸ່ມ, ຍິງໜຸ່ມແມ່ນແຕກຕ່າງກັນຫຼາຍ, ຄວາມຮູ້ ແລະ ທັກສະຂອງຊາວໜຸ່ມຍັງບໍ່ແທດເໝາະກັບຄວາມຕ້ອງການໃນຕະຫຼາດແຮງງານ, ລະດັບການສຶກສາຂອງຊາວໜຸ່ມໂດຍລວມແມ່ນຍັງຕໍ່າ;
5. ແມ່ຍິງເລີ່ມເຮັດວຽກແຕ່ອາຍຸຍັງນ້ອຍກວມເອົາອັດຕາສ່ວນຫຼາຍກວ່າຜູ້ຊາຍ, ໃນກຸ່ມອາຍຸ 15 ຫາ 24 ປີແມ່ຍິງ 18.6% ເຮັດວຽກແລ້ວທຽບກັບຜູ້ຊາຍ 15.5%, ປະກົດວ່າແມ່ຍິງມັກຈະຢູ່ໃນຕຳແໜ່ງຜູ້ບໍລິຫານ ແລະ ສາຂາວິຊາຊີບໃດໜຶ່ງຫຼາຍກວ່າເມື່ອທຽບກັບຜູ້ຊາຍ. ຊາວໜຸ່ມເຂດຊົນນະບົດຍັງຕ້ອງປະເຊີນກັບສິ່ງທ້າທາຍຫຼາຍຢ່າງ ເຊັ່ນ: ບໍ່ສາມາດເຂົ້າເຖິງຂໍ້ມູນກ່ຽວກັບຕະຫຼາດແຮງງານ, ຍັງບໍ່ສາມາດຊອກຫາວຽກເຮັດງານທຳ, ຂາດປະສົບການເພື່ອຕໍ່ຍອດເວລາຊອກວຽກ, ຄວາມກົດດັນມາຈາກວັດທະນະທຳ ແລະ ສັງຄົມ, ຄວາມກົດດັນຈາກຄອບຄົວເຊິ່ງເຮັດໃຫ້ການເຂົ້າເຖິງການຈ້າງງານຫຍຸ້ງຍາກ;
6. ຊາວໜຸ່ມສ່ວນໃຫຍ່ (87%) ຍົກຍ້າຍອອກນອກປະເທດຍ້ອນເຫດຜົນດ້ານເສດຖະກິດ, ແຕ່ເຖິງຢ່າງໃດກໍ່ຕາມ, ໃນຈຳນວນຜູ້ເຄື່ອນຍ້າຍ 127,000 ຄົນ, ມີພຽງແຕ່ບໍ່ເທົ່າໃດຄົນທີ່ດຳລົງຊີວິດຢູ່ຕ່າງປະເທດ ເກີນ 6 ເດືອນ;
7. ຊາວໜຸ່ມຍົກຍ້າຍພາຍໃນ ແລະ ອອກນອກປະເທດໂດຍບໍ່ມີຫຼັກປະກັນດ້ານຄວາມປອດໄພຢ່າງພຽງພໍໃນເລື່ອງສຸຂະພາບ ແລະ ສະຖານະດ້ານກົດໝາຍ, ເດັກຍິງ ແລະ ຍິງໜຸ່ມຍັງມີຄວາມສ່ຽງຕໍ່ການຄ້າມະນຸດໄປສູ່ບັນດາປະເທດໃກ້ຄຽງເພື່ອການແຕ່ງງານ ແລະ ການຄ້າປະເວນີນຳອີກ.

[4] *(ວຽກງານທີ່ບໍ່ພຽງພໍກັບຄວາມຕ້ອງການ ຂອງຜູ້ອອກແຮງງານ ເຊັ່ນ: ບໍ່ມີການຈ້າງງານຕະຫຼອດປີ ຫຼື ວຽກງານບໍ່ກົງກັບຄວາມຮູ້ຄວາມສາມາດ ແລະ ຫວ່າງງານ).*

## 3.2. ຂອບເຂດກົດໝາຍ ແລະ ຍຸດທະສາດ

ສຳລັບແຮງງານໃນຂະແໜງເປັນທາງການ, ກົດໝາຍແຮງງານ ສະບັບປີ 2013 ກຳນົດການຈ່າຍເງິນຊົດເຊີຍ, ວາງລະບຽບການລາພັກໃນເວລາເຈັບປ່ວຍສຳລັບຄົນງານທັງໝົດ, ວາງກົດລະບຽບການສືບຕໍ່ຈ່າຍຄ່າແຮງງານ ຫຼື ເງິນເດືອນຊົ່ວຄາວ ໃນກໍລະນີຜູ້ອອກງານໄດ້ຮັບບາດເຈັບ ແລະ ເປັນພະຍາດອັນມີສາເຫດມາຈາກການອອກແຮງງານ, ກຳນົດຜົນປະໂຫຍດຂອງແມ່ ແລະ ເງິນອຸດໜູນເວລາເກີດລູກ (ມາດຕາ 99), ເຊິ່ງໄດ້ລະບຸໄວ້ເພີ້ມຕື່ມໃນກົດໝາຍວ່າດ້ວຍການປະກັນສັງຄົມ, ສຳລັບຄົນງານໃນຂະແໜງເປັນທາງການ, ກົດໝາຍວ່າດ້ວຍການປະກັນສັງຄົມ ປີ 2013 ກວມເອົາ ຜົນປະໂຫຍດການຫວ່າງງານ, ການລາພັກໃນເວລາເຈັບປ່ວຍ ແລະ ຜົນປະໂຫຍດສຳລັບສະມາຊິກກອງທຶນປະກັນສັງຄົມ, ວາງລະບຽບການຮັບຜົນປະໂຫຍດໃນກໍລະນີສູນເສຍຄວາມສາມາດໃນການເຮັດວຽກຊຶ່ງມີສາເຫດກ່ຽວຂ້ອງ ແລະ ບໍ່ກ່ຽວຂ້ອງກັບການອອກແຮງງານ (ຫຼັງຈາກສິ້ນສຸດໄລຍະເວລາການສືບຕໍ່ຈ່າຍຄ່າແຮງງານຊົ່ວຄາວ). ຜູ້ອອກແຮງງານນອກລະບົບ ຫຼື ອອກແຮງງານໃນຂະແໜງບໍ່ເປັນທາງການກໍ່ມີສິດເຂົ້າຮ່ວມໂຄງການປະກັນສັງຄົມພາຍໃຕ້ກອງທຶນປະກັນສັງຄົມແຫ່ງຊາດ (NSSF) ບົນພື້ນຖານຄວາມສະໝັກໃຈ, ໄດ້ຮັບຜົນປະໂຫຍດຄືກັນກັບຜູ້ອອກແຮງງານໃນລະບົບຕ່າງແຕ່ບໍ່ໄດ້ຮັບຜົນໂຫຍດກ່ຽວກັບການໄດ້ຮັບບາດເຈັບ ແລະ ການຫວ່າງງານ. ແຕ່ເຖິງຢ່າງໃດກໍຕາມ, ຈຳນວນສະມາຊິກທີ່ມາລົງທະບຽນແບບສະໝັກໃຈແມ່ນຍັງຕໍ່າຫຼາຍ ແລະ ການຂະຫຍາຍອັດຕາປົກຄຸມຍັງຄົງເປັນສິ່ງທ້າທາຍ.

## 3.3. ທິດທາງຍຸດທະສາດ

1. ສົ່ງເສີມການຝຶກອົບຮົມຍົກລະດັບຄວາມຮູ້ຄວາມສາມາດທັກສະສີມືແຮງງານເພື່ອສ້າງຄວາມສາມາດແຂ່ງຂັນ ແລະ ເຊື່ອມໂຍງກັບການຈ້າງງານທີ່ໄດ້ມາດຕະຖານ, ຄຸນນະພາບລະດັບຊາດ ແລະ ສາກົນ ໂດຍຜ່ານການລົງທຶນຂອງພາກລັດ, ເອກະຊົນເພື່ອສົ່ງເສີມການເຂົ້າເຖິງຕະຫຼາດແຮງງານທັງພາຍໃນ ແລະ ຕ່າງປະເທດ;
2. ດຳເນີນການປະເມີນຄວາມຕ້ອງການຂອງຕະຫຼາດໃນປະເທດ ກໍ່ຄືຄວາມຕ້ອງການຂອງບັນດາປະເທດໃກ້ຄຽງ ເຊັ່ນ: ປະເທດໄທ, ຊຶ່ງເປັນບ່ອນທີ່ຊາວໜຸ່ມລາວຍົກຍ້າຍໄປເຮັດວຽກແລ້ວອອກແບບການຝຶກອົບຮົມທີ່ພັດທະນາທັກສະສະເພາະທີ່ສອດຄ່ອງກັບຄວາມຕ້ອງການຕົວຈິງ;





3. ເພີ່ມທະວີການລົງທຶນໃນຂະແໜງພື້ນຖານ ເຊັ່ນ: ກະສິກຳ, ປ່າໄມ້ ແລະ ການປະມົງເພື່ອສ້າງ "ວຽກເຮັດງານທຳທີ່ດີ" ໃນເຂດຊົນນະບົດນຳໄປສູ່ການປັບປຸງມາດຖານຂອງການດຳລົງຊີວິດໃນເຂດຊົນນະບົດ ແລະ ສົ່ງເສີມຂະແໜງການທີ່ເກີດຂຶ້ນໃໝ່ ເຊັ່ນ: ໄອທີ ແລະ ການທ່ອງທ່ຽວ ສຳລັບຊາວໜຸ່ມ;
4. ຈັດຕັ້ງໂຄງການປູກຈິດສຳນຶກທີ່ອປວງຊົນ ກ່ຽວກັບສິດທິ ແລະ ຜົນປະໂຫຍດຕ່າງໆທີ່ຊາວໜຸ່ມ-ເຍົາວະຊົນ ຄວນໄດ້ຮັບເມື່ອມີການຍົກຍ້າຍຖິ່ນຖານເພື່ອຊອກວຽກເຮັດງານທຳເພື່ອຮັບປະກັນການເຄື່ອນຍ້າຍແຮງງານທີ່ປອດໄພ;
5. ເຜີຍແຜ່ຄວາມຮູ້ກ່ຽວກັບການປ່ຽນແປງຂອງດິນຟ້າອາກາດທີ່ມີຜົນກະທົບຕໍ່ການດຳລົງຊີວິດໂດຍສະເພາະແມ່ນຂະແໜງການກະສິກຳ ແລະ ການປະມົງ;
6. ຊຸກຍູ້ໃຫ້ຊາວໜຸ່ມສ້າງຕັ້ງທຸລະກິດຂະໜາດນ້ອຍ ແລະ ຂະໜາດກາງໂດຍການເອື້ອອຳນວຍເຂົາເຈົ້າໃນການເຂົ້າເຖິງແຫຼ່ງທຶນ, ຄວາມຮູ້ດ້ານການຕະຫຼາດ ແລະ ການບໍລິຫານເພື່ອລິເລີ່ມທຸລະກິດ;
7. ສ້າງແຜນທີ່ບ້ານ ແລະ ກຸ່ມບ້ານຊຶ່ງເປັນບ່ອນທີ່ມີຊາວໜຸ່ມຍົກຍ້າຍອອກເປັນຈຳນວນຫຼາຍ ແລະ ດຳເນີນໂຄງການປູກຈິດສຳນຶກທີ່ອປວງຊົນເພື່ອສ້າງຄວາມເຂົ້າໃຈກ່ຽວກັບບັນຫາຕ່າງໆ ເຊັ່ນ: ການເຄື່ອນຍ້າຍແຮງງານບໍ່ປອດໄພ, ການຄ້າປະເວນີ ແລະ ການຄ້າມະນຸດໃນຮູບແບບການແຕ່ງງານ;
8. ພັດທະນາຫຼັກສູດອາຊີວະສຶກສາທີ່ມີທ່າແຮງດ້ານຕະຫຼາດຮອງຮັບ ແລະ ຄວາມຮູ້ພູມປັນຍາທ້ອງຖິ່ນເພື່ອສົ່ງເສີມຂໍ້ໄດ້ປຽບໃນຕະຫຼາດແຮງງານ ແລະ ສະໜອງການບໍລິການ;
9. ສົ່ງເສີມການສ້າງວຽກເຮັດງານທຳທີ່ມີລະສະນະສີຂຽວ, ສະອາດ ແລະ ທົນທານຕໍ່ການປ່ຽນແປງດິນຟ້າອາກາດ ໃນທຸກຂະແໜງການ;
10. ສົ່ງເສີມການເຂົ້າເຖິງການຈ້າງງານໂດຍການສ້າງລະບົບຖານຂໍ້ມູນກ່ຽວກັບຕະຫຼາດແຮງງານເຊື່ອມຕໍ່ກັບລະບົບການພັດທະນາສີມືແຮງງານ ແລະ ການຄຸ້ມຄອງແຮງງານ.


KOICA
UNFPA

# 4. ການປົກປ້ອງທາງສັງຄົມ

## 4.1 ສະພາບລວມດ້ານການປົກປ້ອງທາງສັງຄົມ

ອີງໃສ່ການວິໄຈສະພາບຊາວໜຸ່ມ ແລະ ເຍົາວະຊົນ ຢູ່ ສປປ ລາວ (2014) ການປົກປ້ອງເດັກນ້ອຍຍັງເປັນບັນຫາທ້າທາຍ ຢູ່ ສປປ ລາວ ຍ້ອນການບັງຄັບໃຊ້ກົດໝາຍຍັງບໍ່ທັນຮັດກຸມເທົ່າທີ່ຄວນມີຫຼາຍບັນຫາທີ່ໄດ້ຖືກຍົກຂຶ້ນຢູ່ໃນບົດລາຍງານດັ່ງກ່າວກ່ຽວກັບການປົກປ້ອງຊາວໜຸ່ມ ແລະ ເຍົາວະຊົນ ເຊິ່ງພົວພັນເຖິງສິ່ງທີ່ເຂົາເຈົ້າເຮັດເພື່ອປົກປ້ອງຄົນຮຸ້ນໜຸ່ມທີ່ມີຄວາມສ່ຽງ ຫຼື ຄົນຮຸ້ນໜຸ່ມທີ່ເປັນຜູ້ຖືກເຄາະຮ້າຍຈາກການໃຊ້ຄວາມຮຸນແຮງ, ການຂູດຮີດແຮງງານ, ການລ່ວງລະເມີດສິດທິສ່ວນບຸກຄົນ ແລະ ປ່ອຍປະ, ບັນຫາເຫຼົ່ານັ້ນກວມເອົາຊາວໜຸ່ມ, ເຍົາວະຊົນທີ່ແຕ່ງງານກ່ອນໄວອັນຄວນ, ຖືກກົດຂີ່ແຮງງານ ແລະ ພົວພັນກັບການຂາຍບໍລິການທາງເພດ.

1. ບົດປະເມີນຜົນກ່ຽວກັບບົດບາດຍິງ-ຊາຍທົ່ວປະເທດ ປີ 2012 ໄດ້ສັງເກດເຫັນບັນຫາຂອງການຄ້າມະນຸດ ແລະ ໄດ້ລາຍງານວ່າ: ແມ່ຍິງ ແລະ ຊາວໜຸ່ມເພດຍິງ ທີ່ຕົກເປັນເຫຍື່ອຂອງການຄ້າມະນຸດສ່ວນຫຼາຍແລ້ວ ແມ່ນຖືກບັງຄັບໃຫ້ຄ້າປະເວນີ, ເປັນແຮງງານຮັບໃຊ້ພາຍໃນເຮືອນ; ການດື່ມສິ່ງມຶນເມົາ (ເຫຼົ້າ, ເບຍ) ເປັນບັນຫາສໍາລັບຊາວໜຸ່ມທັງຍິງ ແລະ ຊາຍ, ສ່ວນໜຶ່ງກໍຍ້ອນການໂຄສະນາ, ການຄວບຄຸມຍັງບໍ່ທັນເຄັ່ງຄັດ ແລະ ທັດສະນະຂອງສັງຄົມຕໍ່ກັບການດື່ມສິ່ງມຶນເມົາ (ເຫຼົ້າ-ເບຍ) ຍັງບໍ່ຖືກຕ້ອງຫຼາຍຄົນເຫັນການດື່ມສິ່ງມຶນເມົາຂອງເຍົາວະຊົນເປັນເລື່ອງທໍາມະດາ;

2. ຄວາມຈິງແລ້ວການດື່ມສິ່ງມຶນເມົາກໍ່ໃຫ້ເກີດອຸບັດຕິເຫດ, ນໍາໄປສູ່ການນໍາໃຊ້ສິ່ງເສບຕິດອື່ນໆລວມທັງການມີເພດສໍາພັນທີ່ບໍ່ປອດໄພ ນອກຈາກນັ້ນ, ການປະກັນສຸຂະພາບ ແລະ ການປົກປ້ອງທາງສັງຄົມຍັງຈໍາກັດບໍ່ສາມາດເຮັດໃຫ້ຊາວກະສິກອນຫຼຸດຜ່ອນຄວາມສ່ຽງດັ່ງກ່າວໄດ້ສະຫຼຸບແລ້ວ, ການຫຼຸດຜ່ອນຄວາມທຸກຍາກ ແລະ ການຂະຫຍາຍຕົວຂອງການບໍລິໂພກຍັງບໍ່ໄປຄຽງຄູ່ກັບການເຕີບໂຕຂອງເສດຖະກິດ ຫຼື GDP ຂອງປະເທດ, ເພາະການເຕີບໂຕຂອງເສດຖະກິດອາໄສຊັບພະຍາກອນທໍາມະຊາດເປັນຫຼັກບໍ່ມີການຈ້າງງານ (VNR 2018);

3. ຊາວໜຸ່ມ, ເຍົາວະຊົນ ຍັງໄດ້ຮັບຜົນກະທົບຈາກການແຜ່ຂະຫຍາຍຂອງການນໍາໃຊ້ອິນເຕີເນັດ ແລະ ໂທລະສັບສະມາດໂຟນເຮັດໃຫ້ຊາວໜຸ່ມເຂົ້າເຖິງຂໍ້ມູນຂ່າວສານທີ່ບໍ່ໄດ້ຮັບການກັ່ນກອງເຊິ່ງອາດຊັກນໍາໄປໃນທາງທີ່ຜິດ, ອາດຕົກເປັນເຫຍື່ອຂອງອາດສະຍາກໍາອອນລາຍ ແລະ ອື່ນໆ[5]. ການເຊື່ອມໂຍງເຂົ້າກັບພາກພື້ນ ແລະ ສາກົນເຮັດໃຫ້ການເຄື່ອນຍ້າຍແຮງງານເກີດຂຶ້ນໄດ້ງ່າຍ ແລະ ຈໍານວນຫຼາຍ, ກຸ່ມໜຶ່ງເຄື່ອນຍ້າຍແບບຜິດກົດໝາຍເຊິ່ງໝາຍເຖິງເອົາຕົນເອງເຂົ້າໄປສ່ຽງອັນຕະລາຍໃນຕົວ, ການຄຸ້ມຄອງການໃຊ້ລົດໃຊ້ຖະໜົນຍັງບໍ່ທັນເປັນລະບຽບຮຽບຮ້ອຍບວກກັບການຫຍຸ້ງກ່ຽວກັບເຄື່ອງດື່ມທາດເຫຼົ້າຕ່າງໆ ເຮັດໃຫ້ຊາວໜຸ່ມເປັນກຸ່ມສ່ຽງຕໍ່ອຸປະຕິເຫດ;

4. ການແຜ່ລະບາດຂອງສານເສບຕິດຕ່າງໆແມ່ນເປັນບັນຫາໃຫຍ່ໃນກຸ່ມຊາວໜຸ່ມ-ເຍົາວະຊົນເຮັດໃຫ້ຜູ້ເສບກາຍເປັນເຫຍື່ອຂອງສານເສບຕິດເຫຼົ່ານັ້ນ ສະນັ້ນ, ພວກເຂົາເຈົ້າຕ້ອງໄດ້ຮັບການປ້ອງກັນ ແລະ ປົກປ້ອງ, ເຖິງແມ່ນວຽກງານກ່ຽວກັບຊາວໜຸ່ມ-ເຍົາວະຊົນເປັນບຸລິມະສິດສໍາຄັນທາງດ້ານຍຸດທະສາດ, ແຕ່ການຜັນຂະຫຍາຍວຽກງານການປ້ອງກັນ ແລະ ປົກປ້ອງຍັງບໍ່ທັນໄດ້ຮັບໝາກຜົນເທົ່າທີ່ຄວນ, ຊາວໜຸ່ມມີການເຄື່ອນຍ້າຍທັງພາຍໃນ ແລະ ຕ່າງປະເທດເຮັດໃຫ້ເຂົາເຈົ້າຕົກໃນສະພາບຄວາມສ່ຽງ ແລະບໍ່ສາມາດເຂົ້າເຖິງຕໍາໜ່າງການບໍລິການທາງສັງຄົມໂດຍສະເພາະການຮັບປະກັນດ້ານສຸຂະພາບ ແລະ ການຊ່ວຍເຫຼືອດ້ານກົດໝາຍ (VNR 2018).

[5] *ກົດໝາຍ ວ່າດ້ວຍ ເຕັກໂນໂລຊີການສື່ສານຂໍ້ມູນຂ່າວສານ.*

## 4.2 ຂອບເຂດກົດໝາຍ ແລະ ຍຸດທະສາດ

ກົດໝາຍວ່າດ້ວຍການປົກປ້ອງສິດແລະຜົນປະໂຫຍດຂອງເດັກ (2007) ໄດ້ກຳນົດຫຼາຍຂົງເຂດທີ່ເດັກນ້ອຍ (ທຸກຄົນທີ່ອາຍຸຕໍ່າກວ່າ 18 ປີ) ຕ້ອງໄດ້ຮັບການປົກປ້ອງ, ມາດຕາ 2 ຂອງກົດໝາຍໄດ້ກຳນົດການປົກປ້ອງເດັກທີ່ດ້ອຍໂອກາດ[6], ກົດໝາຍດັ່ງກ່າວຍັງກຳນົດຈະໃຫ້ການປົກປ້ອງເດັກທີ່ດ້ອຍໂອກາດ ແລະ ເດັກພິການໂດຍລັດຈະສະໜອງການຮຽນໂດຍບໍ່ເສຍຄ່າ, ສະໜອງອຸປະກອນການຮຽນ, ການຊ່ວຍເຫຼືອທີ່ຈຳເປັນ ແລະ ໄດ້ຮັບການຍົກເວັ້ນຄ່າຮຽນເພື່ອສົ່ງເສີມເດັກທີ່ດ້ອຍໂອກາດ, ເດັກຈາກເຂດຫ່າງໄກສອກຫຼີກ, ເດັກທີ່ມາຈາກຄອບຄົວທຸກຍາກ (ມາດຕາ 29) ແລະ ໃຫ້ເຂົ້າເຖິງການຝຶກອົບຮົມວິຊາຊີບ (ມາດຕາ 30), ມາດຕາ 3 ໄດ້ກຳນົດສິດຂອງເດັກນ້ອຍ, ຄວາມຮັບຜິດຊອບຂອງພໍ່ແມ່, ຜູ້ປົກຄອງ, ສັງຄົມ ແລະ ລັດ. ມາດຕາ 8 ກຳນົດວ່າຄວາມຮັບຜິດຊອບຂັ້ນພື້ນຖານຂອງລັດແມ່ນສ້າງນະໂຍບາຍກ່ຽວກັບວຽກການສຶກສາ ແລະ ສ້າງຄວາມອາດສາມາດໃຫ້ເດັກນ້ອຍມີນໍ້າໃຈຮັກຊາດ ແລະ ບ້ານເກີດເມືອງນອນ, ມາດຕາ 46 ແລະ 47, ຂອງກົດໝາຍດັ່ງກ່າວກຳນົດການປ້ອງກັນ ແລະ ການຟື້ນຟູການຕິດຢາເສບຕິດໃນກຸ່ມຊາວໜຸ່ມ, ເຍົາວະຊົນສະໜອງເງື່ອນໄຂ ແລະ ສິ່ງອຳນວຍຄວາມສະດວກໃຫ້ແກ່ເຂົາເຈົ້າກ່ຽວກັບການປິ່ນປົວ, ການຟື້ນຟູ, ການບຳບັດ, ໃຫ້ຄວາມຮູ້ຄວາມເຂົ້າໃຈກ່ຽວກັບໄພອັນຕະລາຍ ແລະ ຜົນສະທ້ອນຂອງສິ່ງເສບຕິດພ້ອມທັງການຝຶກອົບຮົມວິຊາຊີບເພື່ອຊຸກຍູ້ໃຫ້ມີການມີສ່ວນຮ່ວມຂອງສັງຄົມຫຼາຍຂຶ້ນມາດຕາ 48 ຫ້າມບໍ່ໃຫ້ເດັກນ້ອຍນຳໃຊ້ຢາເສບຕິດ, ການດື່ມເຫຼົ້າ, ເບຍ, ການສູບຢາ, ຫ້າມບໍ່ໃຫ້ເດັກຮັບໃຊ້ຢູ່ໃນສະຖານບັນເທີງໃນຍາມກາງຄືນ, ບ້ານພັກ, ໂຮງແຮມ, ຮ້ານອາຫານ, ນຳໃຊ້ການບໍລິການຂອງສະຖານທີ່ຕ່າງໆເຫຼົ່ານັ້ນໃນທາງທີ່ບໍ່ຖືກຕ້ອງ ແລະ ບໍ່ເໝາະສົມ", ມາດຕາ 49 ຫ້າມພໍ່ແມ່, ຜູ້ປົກຄອງ ແລະ ບຸກຄົນອື່ນໆເຮັດໃຫ້ເດັກນ້ອຍໄດ້ຮັບບາດເຈັບ ຫຼື ໝິ່ນປະໝາດເດັກ, ບໍ່ອະນຸຍາດໃຫ້ເດັກເຮັດວຽກໃນສະຖານທີ່ຕ້ອງຫ້າມຫຼືເຂົ້າເຖິງສານເສບຕິດທີ່ຕ້ອງຫ້າມ, ມາດຕາ 53 ຂອງກົດໝາຍວ່າດ້ວຍການປົກປ້ອງສິດ ແລະ ຜົນປະໂຫຍດຂອງຊາວໜຸ່ມ, ເຍົາວະຊົນໄດ້ກຳນົດວ່າມີ 4 ຂະແໜງການທີ່ໄດ້ສະໜອງວິທີການແກ້ໄຂບັນຫາໂດຍທີ່ບໍ່ຜ່ານສານເຊິ່ງລວມມີໜ່ວຍງານໄກ່ເກ່ຍຄະດີເດັກນ້ອຍຂັ້ນບ້ານຫ້ອງການຍຸຕິທຳເມືອງ ຫຼື ເທດສະບານ, ອົງການສືບສວນ-ສອບສວນ ແລະ ອົງການໄອຍະການປະຊາຊົນ. ສານເດັກນ້ອຍໃນມາດຕາ 69 ເວົ້າເຖິງຄະດີອາຍາທີ່ເດັກເປັນຜູ້ກະທຳຄວາມຜິດ; ຄະດີກ່ຽວກັບແຮງງານເດັກນ້ອຍ; ຄະດີແພ່ງທີ່ພົວພັນກັບເດັກນ້ອຍ ແລະ ຄະດີອື່ນໆທີ່ພົວພັນກັບເດັກ.

ກົດໝາຍວ່າການຕ້ານການຄ້າມະນຸດມາດຕາ 48 ວ່າດ້ວຍການຊ່ວຍເຫຼືອດ້ານການສຶກສາ ແລະ ການຝຶກອົບຮົມວິຊາຊີບໃຫ້ແກ່ຜູ້ຖືກເຄາະຮ້າຍທີ່ຍັງຢູ່ໃນໄວຮຽນ ຫຼື ເດັກທີ່ຕິດມານຳຜູ້ຖືກເຄາະຮ້າຍ ນອກຈາກນັ້ນ, ຍັງໄດ້ກ່າວເຖິງນະໂຍບາຍເພື່ອຮັບປະກັນໃຫ້ຊາວໜຸ່ມທີ່ໄດ້ຮັບຜົນກະທົບຈາກການຄ້າມະນຸດໃຫ້ສາມາດເຂົ້າເຖິງການສຶກສາແລະການຝຶກອົບຮົບເພື່ອໃຫ້ເຂົາເຈົ້າເຂົ້າເຖິງການມີວຽກເຮັດງານທຳ.

ກົດໝາຍວ່າດ້ວຍແຮງງານມາດຕາ 10 ໄດ້ກຳນົດກ່ຽວກັບການໃຊ້ແຮງງານ "ໄວໜຸ່ມ" ໂດຍກຳນົດວ່າເດັກຕໍ່າກວ່າ 18 ປີສາມາດເຮັດວຽກໄດ້ແຕ່ບໍ່ໃຫ້ຫຼຸດ 14 ປີ ແລະ ບໍ່ໃຫ້ເຮັດວຽກເພີ່ມເວລາໃນການເຮັດວຽກ, ໃນກໍລະນີພິເສດຜູ້ໃຊ້ແຮງງານສາມາດຮັບເອົາຜູ້ອອກແຮງງານອາຍຸ 12 ປີແຕ່ໃຫ້ເຮັດສະເພາະວຽກເບົາ.

[6] *ຄຳນິຍາມເດັກດ້ອຍໂອກາດແມ່ນກຳນົດໄວ້ໃນເອກະສານຊ້ອນທ້າຍ.*

## 4.3 ທິດທາງຍຸດທະສາດ

1. ປູກຈິດສຳນຶກໃຫ້ແກ່ຊາວໜຸ່ມ ແລະ ເຍົາວະຊົນໃນຂອບເຂດທົ່ວປະເທດກ່ຽວກັບຜົນຮ້າຍຂອງສິ່ງເສບຕິດທຸກປະເພດ ເຊັ່ນ: ຢາບ້າ, ເຫຼົ້າແລະອື່ນໆ;
2. ສົ່ງເສີມການຂັບຂີ່ປອດໄພ ແລະ ນັບຖືລະບຽບຈະລະຈອນ;
3. ໂຄສະນາເຜີຍແຜ່ກົດໝາຍແຮງງານ ແລະ ສະຫວັດດີການ ແລະ ຄວາມປອດໄພໃນສະຖານທີ່ອອກແຮງງານເພື່ອຮັບປະກັນບໍ່ໃຫ້ມີການຂູດຮີດແຮງງານ, ຄວາມປອດໄພ ແລະ ຜູ້ອອກແຮງງານໄດ້ຮັບສິດ ແລະ ຜົນປະໂຫຍດອັນຊອບທຳຂອງເຂົາເຈົ້າ;
4. ເຝິກອົບຮົມ ແລະ ປູກຈິດສຳນຶກໃຫ້ຊາວໜຸ່ມ-ເຍົາວະຊົນຮູ້ນຳໃຊ້ຂໍ້ມູນຂ່າວສານ ແລະ ເຕັກໂນໂລຊີ ICT ໃຫ້ເກີດປະໂຫຍດພ້ອມກັນນັ້ນກໍ່ສຶກສາອົບຮົມໃຫ້ຮູ້ເຖິງຜົນຮ້າຍຂອງໂລກອອນລາຍເພື່ອບໍ່ໃຫ້ຕົກເປັນເຫຍື່ອຂອງອາດຊະຍາກຳທາງອອນລາຍ;
5. ເຜີຍແຜ່ຄວາມຮູ້ກ່ຽວກັບລູກລະເບີດທີ່ບໍ່ທັນແຕກທີ່ມີຜົນກະທົບຕໍ່ຮ່າງກາຍ ແລະ ເປັນໄພຂົ່ມຂູ່ຕໍ່ການດຳລົງຊີວິດຂອງປະຊົນລາວບັນດາເຜົ່າໂດຍສະເພາະຊາວໜຸ່ມ-ເຍົາວະຊົນ;
6. ສົ່ງເສີມການປະກັນສຸຂະພາບທົ່ວໜ້າຮັບປະກັນໃຫ້ຊາວໜຸ່ມ-ເຍົາວະຊົນຜູ້ທີ່ດ້ອຍໂອກາດບໍ່ວ່າຈະເປັນດ້ານເສດຖະກິດ, ວັດທະນະທຳ-ສັງຄົມໃຫ້ເຂົ້າເຖິງຫຼັກປະກັນດັ່ງກ່າວ;
7. ໂຄສະນາເຜີຍແຜ່ລະບົບການຈົດທະບຽນ ໂດຍສະເພາະຜູ້ຍົກຍ້າຍມາຈາກບ່ອນອື່ນກັບພາກສ່ວນຮັບຜິດຊອບໃນແຕ່ລະຂັ້ນ;
8. ສົ່ງເສີມການປົກປ້ອງສິດຜົນປະໂຫຍດຂອງແຮງງານເຄື່ອນຍ້າຍ, ການດູແລສຸຂະພາບ, ການເຂົ້າເຖິງສະຫວັດດີການ ແລະ ບໍລິການຕ່າງໆ.
9. ເສີມສ້າງຄວາມເຂັ້ມແຂງຂອງກົນໄກບັງຄັບໃຊ້ກົດໝາຍແຮງງານ ແລະ ກົດໝາຍວ່າດ້ວຍ ການຕ້ານການຄ້າມະນຸດ (2016), ການຈັດຕັ້ງປະຕິບັດດຳລັດວ່າດ້ວຍ ຄ່າແຮງງານຂັ້ນຕໍ່າ ແລະອື່ນໆເພື່ອຮັບປະກັນໃຫ້ຊາວໜຸ່ມໄດ້ຮັບສິດຜົນປະໂຫຍດອັນຊອບທຳຈາກການໃຊ້ແຮງງານ, ບໍ່ຕົກເປັນເຫຍື່ອຂອງການຄ້າມະນຸດ, ການທາລຸນທາງຮ່າງກາຍ, ຈິດໃຈ ແລະ ການຂູດຮີດອື່ນໆ;
10. ສົ່ງເສີມ ແລະ ໃຫ້ການຊ່ວຍເຫຼືອຜູ້ເສບສິ່ງເສບຕິດໃນການເຂົ້າເຖິງການບຳບັດຟື້ນຟູ ແລະ ການບໍລິການເພື່ອໃຫ້ເຂົ້າເຈົ້າຄືນສູ່ສະພາບປົກກະຕິ;
11. ຊຸກຍູ້ສົ່ງເສີມຄອບຄົວ, ສັງຄົມໃຫ້ມີສ່ວນຮ່ວມຮັບຮູ້, ເຂົ້າໃຈ ແລະ ສະໜັບສະໜູນຜູ້ທີ່ເຄີຍຕົກເປັນເຫຍື່ອຂອງສິ່ງເສບຕິດໃຫ້ເຂົາເຈົ້າໄດ້ຮັບໂອກາດ ແລະ ຖືກຍອມຮັບ;
12. ຊຸກຍູ້ ແລະ ສົ່ງເສີມໃຫ້ໂຮງຮຽນ ຫຼື ສະຖາບັນການສຶກສາຕ່າງໆໃຫ້ເປັນສະຖານທີ່ປອດໄພທີ່ສຸດສຳລັບຊາວໜຸ່ມ ແລະ ເຍົາວະຊົນ.


We
SUPPORT
"NANG NOI"
AND
GIRLS
DEVELOPMENT

# 5. ພັນທະພົນລະເມືອງ ແລະ ການມີສ່ວນຮ່ວມ

## 5.1. ສະພາບລວມດ້ານພັນທະພົນລະເມືອງ ແລະ ການມີສ່ວນຮ່ວມ

ຜົນຂອງການວິໄຈສະພາບຊາວໜຸ່ມ ແລະ ເຍົາວະຊົນ ປີ 2014 ຊີ້ໃຫ້ເຫັນວ່າການມີສ່ວນຮ່ວມຂອງຊາວໜຸ່ມ ແລະ ເຍົາວະຊົນເປັນລັກສະນະການປະກອບສ່ວນໃນກິດຈະກຳທາງສັງຄົມຕ່າງໆ ເຊັ່ນ: ງານບຸນປະເພນີ, ງານດອງ ແລະ ການອອກແຮງງານລວມໝູ່ຕາມບົດບາດຍິງ - ຊາຍແຕກຕ່າງກັນໄປເຊິ່ງການປະກອບດ້ານແຮງງານ ຫຼື ເປັນກິດຈະກຳເພື່ອຄວາມສາມັກຄີ ແລະ ອາສາສະໝັກ, ສ່ວນວ່າການມີສ່ວນຮ່ວມໃນການເຂົ້າຮ່ວມໃນການຕັດສິນບັນຫາທີ່ກ່ຽວຂ້ອງກັບຊີວິດຂອງເຂົາເຈົ້າໃນທຸກລະດັບຍັງຈຳກັດດ້ວຍຫຼາຍປັດໄຈ ເຊັ່ນ: ການສຶກສາຍັງຕ່ຳ, ໂດຍສະເພາະຊາວໜຸ່ມເພດຍິງ ແລະ ຊາວໜຸ່ມໃນເຂດຊົນນະບົດ.

ທັດສະນະຄະຕິຂອງຜູ້ທີ່ຮັບຜິດຊອບຕໍ່ການມີສ່ວນຮ່ວມຂອງຊາວໜຸ່ມຍັງບໍ່ແທດເໝາະ, ຊາວໜຸ່ມ ແລະ ເຍົາວະຊົນຍັງຖືເປັນເປັນຝ່າຍຮັບເອົາຜົນຂອງການຕັດສິນໃຈຈາກຜູ້ໃຫຍ່ແທນທີ່ຈະເປັນຜູ້ເຂົ້າຮ່ວມໃນຂະບວນການຕັດສິນໃຈຢ່າງຕັ້ງໜ້າ ຢ່າງໃດກໍ່ຕາມ ສປປ ລາວ ກຳລັງເປີດກວ້າງໃຫ້ຊາວໜຸ່ມ, ເຍົາວະຊົນມີສ່ວນຮ່ວມໃນຂະບວນການຕັດສິນໃຈຕໍ່ກັບບັນຫາທີ່ພົວພັນກັບເຂົາເຈົ້າເຊິ່ງສະແດງອອກຄວາມມຸ້ງມາດປາດຖະໜາຂອງຊາວໜຸ່ມ, ເຍົາວະຊົນໄດ້ຮັບການເອົາໃຈໃສ່, ຄວາມຕ້ອງການຂັ້ນພື້ນຖານໄດ້ຮັບການສະໜອງ ແລະ ຄຳຄິດຄຳເຫັນຂອງເຂົາເຈົ້າໄດ້ຮັບການພິຈາລະນາ.

## 5.2. ຂອບເຂດກົດໝາຍ ແລະ ຍຸດທະສາດ

ກົດໝາຍວ່າດ້ວຍຄະນະຊາວໜຸ່ມ ປະຊາຊົນ ປະຕິວັດລາວ (2009) ໄດ້ກຳນົດພາລະບົດບາດການເຄື່ອນໄຫວວຽກງານຂອງຄະນະຊາວໜຸ່ມ ປະຊາຊົນ ປະຕິວັດລາວ, ພາລະບົດບາດທີ່ສຳຄັນຂອງສູນກາງຊາວໜຸ່ມ ລວມມີການປູກຈິດສຳນຶກກ່ຽວກັບບັນຫາດ້ານສຸຂະພາບ ແລະ ສັງຄົມທີ່ກ່ຽວຂ້ອງກັບຊາວໜຸ່ມ, ລວມທັງການຍົກຍ້າຍຖິ່ນຖານ, ການສຶກສາ, ການນຳໃຊ້ສານເສບຕິດ, ການບັງຄັບໃຊ້ກົດໝາຍ, ການອະນຸລັກທາງວັດທະນະທຳ ແລະ ການປ້ອງກັນພະຍາດຕິດຕໍ່ໃນຂະນະທີ່ຊາວໜຸ່ມຫຼາຍຄົນບໍ່ແມ່ນສະມາຊິກຂອງສູນກາງຊາວໜຸ່ມ, ແຕ່ທາງສູນກາງຊາວໜຸ່ມກໍ່ສະແຫວງໂອກາດຢ່າງຕັ້ງໜ້າທີ່ຈະເຂົ້າຫາຊາວໜຸ່ມ ແລະ ລະດົມຊາວໜຸ່ມເຂົ້າຮ່ວມໃນກິດຈະກຳຊຸມຊົນ ແລະ ສັງຄົມຕ່າງໆ.

ກົດໝາຍວ່າດ້ວຍຄະນະຊາວໜຸ່ມ ປະຊາຊົນ ປະຕິວັດລາວ (2017) ວາງຂອບເຂດສິດ ແລະ ໜ້າທີ່ຂອງຄະນະຊາວໜຸ່ມ ປະຊາຊົນ ປະຕິວັດລາວ ໂດຍການເພີ່ມສິດ ແລະ ຄວາມຮັບຜິດຊອບໃຫ້ແກ່ສູນກາງຊາວໜຸ່ມ, ຄະນະກຳມະການສູນກາງຊາວໜຸ່ມ ປະຊາຊົນ ປະຕິວັດລາວ, ຄະນະປະຈຳ, ເລຂາ, ຮອງເລຂາຄະນະບໍລິຫານງານ ສຊປລ ແລະ ບັນດາມາດຕາໃໝ່ກ່ຽວກັບສິດ ແລະ ຄວາມຮັບຜິດຊອບຂອງຄະນະກຳມະການກວດກາຂອງສູນກາງຊາວໜຸ່ມ ປະຊາຊົນ ປະຕິວັດລາວ.

ກົດໝາຍວ່າດ້ວຍ ຄະນະຊາວໜຸ່ມ ປະຊາຊົນ ປະຕິວັດລາວ ແມ່ນກົດໝາຍສະບັບທຳອິດສຳລັບຊາວໜຸ່ມລາວ ໂດຍສະເພາະແມ່ນສຳລັບ ສຊປລ, ດັ່ງທີ່ໄດ້ລະບຸໄວ້ໃນມາດຕາ 2, ກຳມະການສູນກາງຊາວໜຸ່ມຮັບຜິດຊອບໃນການສ້າງນະໂຍບາຍ, ຍຸດທະສາດ ແລະ ນິຕິກຳ ສຳລັບຊາວໜຸ່ມ, ເຍົາວະຊົນທຸກຄົນ.

ສິດທິຂອງຊາວໜຸ່ມ ແລະ ເຍົາວະຊົນ ອາຍຸຕ່ຳກວ່າ 18 ປີ ໃນການມີສ່ວນຮ່ວມໄດ້ກຳນົດອອກໃນ ກົດໝາຍວ່າດ້ວຍການປົກປ້ອງສິດ ແລະ ຜົນປະໂຫຍດຂອງເດັກ (2007) ຢ່າງຈະແຈ້ງ. ມາດຕາ 7, ການມີສ່ວນຮ່ວມຂອງເດັກນ້ອຍກຳນົດໄວ້ວ່າລັດ, ສັງຄົມ ແລະ ຄອບຄົວຕ້ອງສ້າງເງື່ອນໄຂໃຫ້ເດັກນ້ອຍໄດ້ມີສ່ວນຮ່ວມ

ໃນກົດຈະກໍາຕ່າງໆ ແລະ ສາມາດສະແດງທັດສະນະຂອງຕົນໃນທຸກເລື່ອງທີ່ມີຜົນກະທົບຕໍ່ພວກເຂົາ. ມາດຕາ 6 ໄດ້ກ່າວເຖິງການປົກປ້ອງຊາວໜຸ່ມ-ເຍົາວະຊົນຈາກການຈໍາແນກເພດ, ເຊື້ອຊາດ, ຊົນເຜົ່າ, ພາສາ, ຄວາມເຊື່ອ, ສາດສະໜາ, ສະພາບທາງດ້ານຮ່າງກາຍ ແລະ ສະຖານະທາງດ້ານເສດຖະກິດ-ສັງຄົມ.

ຊາວໜຸ່ມມີສິດລົງຄະແນນສຽງເລືອກຕັ້ງໄດ້ເມື່ອອາຍຸຮອດ 18 ປີ ແລະ ເປັນຜູ້ສະໝັກເລືອກຕັ້ງໃນຕໍາແໜ່ງການເມືອງເມື່ອອາຍຸຮອດ 21 ປີຂຶ້ນໄປ ເຊິ່ງໄດ້ກໍານົດໄວ້ໃນມາດຕາ 6 ຂອງກົດໝາຍວ່າດ້ວຍການເລືອກຕັ້ງ (2015). ຊາວໜຸ່ມທຸກຄົນສາມາດເຂົ້າເປັນທະຫານເມື່ອອາຍຸໄດ້ 18 ປີພາຍໃຕ້ກົດໝາຍວ່າດ້ວຍປ້ອງກັນຊາດ ແລະ ປ້ອງກັນຄວາມສະຫງົບ (1995), ໃນມາດຕາ 3.

## 5.3 ທິດທາງຍຸດທະສາດ

1. ໂຄສະນາປູກຈິດສໍານຶກໃນການສະກັດກັ້ນ ແລະ ຕ້ານບັນດາປະກົດການຫຍໍ້ທໍ້ໃນກຸ່ມຊາວໜຸ່ມ-ເຍົາວະຊົນ ເຊັ່ນ: ການແຕ່ງງານກ່ອນໄວອັນຄວນ, ຄວາມຮຸນແຮງຕໍ່ແມ່ຍິງລວມທັງຄວາມຮຸນແຮງທາງເພດ, ການໃຊ້ສານເສບຕິດ, ການດື່ມເຫຼົ້າ ແລະ ການຄ້າມະນຸດ;
2. ຊຸກຍູ້ທຸກຂະແໜງການໃນສັງຄົມລວມທັງພາກລັດ, ເອກະຊົນ, ອົງການຈັດຕັ້ງທີ່ບໍ່ສັງກັດລັດຖະບານ (NGO) ຕ່າງປະເທດ ແລະ ອົງການຈັດຕັ້ງທາງສັງຄົມ (CSO) ເພື່ອເພີ່ມທະວີການລົງທຶນເຂົ້າໃນການພັດທະນາຊາວໜຸ່ມ-ເຍົາວະຊົນ;
3. ສ້າງສະພາບແວດລ້ອມທີ່ເໝາະສົມສໍາລັບການສົ່ງເສີມການມີສ່ວນຮ່ວມຂອງຊາວໜຸ່ມ-ເຍົາວະຊົນໃນທຸກລະດັບ (ສູນກາງຮອດທ້ອງຖິ່ນ) ໃນຂະບວນການພັດທະນາຮອບດ້ານ ແລະ ບັນຫາທີ່ມີຜົນກະທົບຕໍ່ຊີວິດຂອງເຂົາເຈົ້າ;
4. ສົ່ງເສີມ ແລະ ເພີ່ມທະວີການລົງທຶນເຂົ້າໃນການສ້າງຜູ້ໃຫ້ຄໍາແນະນໍາກ່ຽວກັບກອບແຜນງານນາງນ້ອຍ Nang Noi ເພື່ອສ້າງສະຖານທີ່ທີ່ປອດໄພເພື່ອໃຫ້ຍິງໜຸ່ມມີໂອກາດເສີມສ້າງຄວາມເຂັ້ມແຂງທາງດ້ານເສດຖະກິດ-ສັງຄົມ, ທັກສະຊີວິດ, ສຸຂະພາບ, ການສຶກສາ, ການສ້າງວຽກເຮັດງານທໍາ, ການປົກປ້ອງ ແລະ ການມີສ່ວນຮ່ວມ;
5. ສົ່ງເສີມການສ້າງທັກສະພື້ນຖານ, ຄວາມຮູ້, ຄວາມສາມາດ, ຄຸນສົມບັດຂອງຊາວໜຸ່ມ ແລະ ເຍົາວະຊົນ ເພື່ອໃຫ້ກາຍເປັນສະມາຊິກທີ່ມີການຈັດຕັ້ງເປັນຕົ້ນຊາວໜຸ່ມ ປະຊາຊົນ ປະຕິວັດລາວ, ອົງການຈັດຕັ້ງທາງສັງຄົມຂອງຊາວໜຸ່ມອື່ນໆ;
6. ສົ່ງເສີມການມີສ່ວນຮ່ວມຂອງຊາວໜຸ່ມ-ເຍົາວະຊົນ ໃນບັນດາກອງປະຊຸມລະດັບຊາດ, ສາກົນ ແລະ ໂຄງການແລກປ່ຽນຕ່າງໆຂອງຊາວໜຸ່ມ;
7. ປູກຈິດສໍານຶກໃຫ້ກັບຊາວໜຸ່ມ-ເຍົາວະຊົນກ່ຽວກັບການປົກປັກຮັກສາສິ່ງແວດລ້ອມໂດຍການສົ່ງເສີມຄວາມຮູ້ຈິດສໍານຶກ ແລະ ພຶດຕິກໍາທີ່ດີຕໍ່ສິ່ງແວດລ້ອມ;
8. ສ້າງໂອກາດໃນການສະແດງອອກຂອງຊາວໜຸ່ມໃຫ້ຫລາຍຂຶ້ນ ແລະ ຮັບປະກັນເສລີພາບໃນການສະແດງຄໍາຄິດເຫັນ, ເຊື່ອມສານການສະແດງອອກດັ່ງກ່າວ ກັບອົງການທີ່ເປັນຕົວແທນສິດ ແລະ ຜົນປະໂຫຍດຂອງເຂົາເຈົ້າ;
9. ສົ່ງເສີມອົງການຈັດຕັ້ງທີ່ລິເລີ່ມ ແລະ ນໍາພາໂດຍຊາວໜຸ່ມເພື່ອຂະຫຍາຍໂອກາດໃນການປະກອບສ່ວນເຂົ້າໃນຂະບວນການປົກປັກຮັກສາ ແລະ ສ້າງສາພັດທະນາປະເທດຊາດ;
10. ເສີມຂະຫຍາຍກົນໄກການຮ່ວມມືລະຫວ່າງອົງການຈັດຕັ້ງພາກລັດ, ອົງການຈັດຕັ້ງມະຫາຊົນ, ອົງການຈັດຕັ້ງທາງສັງຄົມ, ພາກເອກະຊົນ, ສື່ມວນຊົນ,ອົງການຈັດຕັ້ງສາກົນບໍ່ສັງກັດລັດຖະບານ ແລະ ອົງການສະຫະປະຊາຊາດ, ໃຫ້ການສະໜັບສະໜູນການພັດທະນາຊາວໜຸ່ມຢ່າງກວ້າງຂວາງ ແລະ ທົ່ວເຖິງ.

# IV. ມາດຕະການໃນການຈັດຕັ້ງປະຕິບັດ



## 4.1. ການນຳພາ-ຊີ້ນຳ

ເພີ່ມທະວີການນຳພາ-ຊີ້ນຳການຈັດຕັ້ງປະຕິບັດຍຸດທະສາດການພັດທະນາຊາວໜຸ່ມ, ເຍົາວະຊົນລາວ ສະບັບນີ້ ໂດຍຕິດພັນກັບແຜນພັດທະນາເສດຖະກິດ-ສັງຄົມ, ນະໂຍບາຍແຫ່ງຊາດດ້ານປະຊາກອນ ແລະ ການພັດທະນາ, ຍຸດທະສາດພັດທະນາໃນແຕ່ລະຂົງເຂດ ແລະ ຄວາມຮຽກຮ້ອງຕ້ອງການຂອງຊາວໜຸ່ມ, ເຍົາວະຊົນ ໃນແຕ່ລະໄລຍະ, ຄຊປລ ແຕ່ລະຂັ້ນນັບແຕ່ສູນກາງຮອດທ້ອງຖິ່ນຊາວໜຸ່ມ, ເຍົາວະຊົນທຸກຄົນຕ້ອງຍົກສູງຈິດໃຈເອກະລາດ, ເປັນເຈົ້າຕົນເອງ, ເພິ່ງຕົນເອງ ແລະ ສ້າງຄວາມເຂັ້ມແຂງດ້ວຍຕົນເອງໃນຂະບວນການຈັດຕັ້ງປະຕິບັດຍຸດທະສາດສະບັບນີ້.

ສູນກາງຊາວໜຸ່ມ ປະຊາຊົນ ປະຕິວັດລາວ ເປັນຜູ້ນຳພາໃນການຈັດຕັ້ງປະຕິບັດ ແລະ ຜັນຂະຫຍາຍຍຸດທະສາດສະບັບນີ້ ໂດຍປະສານສົມທົບກັບບັນດາກະຊວງ, ອົງການທຽບເທົ່າ, ອົງການປົກຄອງທ້ອງຖິ່ນ, ອົງການຈັດຕັ້ງທຸກພາກສ່ວນທີ່ກ່ຽວຂ້ອງ, ບັນດາອົງການທີ່ກ່ຽວຂ້ອງຕ້ອງຮັບຮູ້ ແລະ ໃຫ້ການຮ່ວມມືຈັດຕັ້ງປະຕິບັດຍຸດທະສາດການພັດທະນາຊາວໜຸ່ມ, ເຍົາວະຊົນລາວສະບັບນີ້ ຢ່າງເຂັ້ມງວດ ແລະ ໄດ້ຮັບຜົນດີ.

ຄະນະກຳມະການຊີ້ນຳລະດັບຊາດຈະໄດ້ຮັບການສ້າງຕັ້ງຂຶ້ນເພື່ອນຳພາ-ຊີ້ນຳການຈັດຕັ້ງປະຕິບັດ, ຄະນະກຳມະການດັ່ງກ່າວນຳໂດຍເລຂາຄະນະບໍລິຫານງານສູນກາງຊາວໜຸ່ມ ປະຊາຊົນ ປະຕິວັດລາວຊີ້ນຳລວມຊຸກຍູ້ຕິດຕາມກວດກາ, ການວາງແຜນ, ການປະຕິບັດ ແລະ ປະເມີນການຈັດຕັ້ງປະຕິບັດຍຸດທະສາດສະບັບນີ້.

ຮອງລັດຖະມົນຕີກະຊວງແຜນການ ແລະ ການລົງທຶນ, ກະຊວງສາທາລະນະສຸກ, ກະຊວງສຶກສາທິການ ແລະ ກິລາ, ກະຊວງແຮງງານ ແລະ ສະຫວັດດີການສັງຄົມ, ກະຊວງການຕ່າງປະເທດ, ຮອງປະທານສະຫະພັນແມ່ຍິງລາວ, ຮອງປະທານສະຫະພັນກຳມະບານລາວ ຈະເປັນສະມາຊິກຂອງຄະນະກຳມະການ. ຄະນະກຳມະການຊີ້ນຳລະດັບຊາດ ຈະຕ້ອງເປີດກອງປະຊຸມປີລະຄັ້ງເພື່ອປຶກສາຫາລື ແລະ ທົບທວນການຈັດຕັ້ງປະຕິບັດປີຜ່ານມາ ແລະ ວາງແຜນການຈັດຕັ້ງປະຕິບັດໃນປີຕໍ່ໄປກອງປະຊຸມຄະນະກຳມະການຊີ້ນຳລະດັບຊາດຈະຖືກຈັດຂຶ້ນໂດຍສູນກາງຊາວໜຸ່ມ ປະຊາຊົນ ປະຕິວັດລາວ.



ເນື່ອງຈາກມີຫຼາຍກະຊວງ ແລະ ອົງການທີ່ຈະຈັດຕັ້ງປະຕິບັດຍຸດທະສາດສະບັບນີ້ ກົນໄກປະສານງານຈຶ່ງຕ້ອງໄດ້ຮັບການສ້າງຂຶ້ນໂດຍປະກອບມີບັນດາກະຊວງ ແລະ ອົງການຕ່າງໆທີ່ກ່ຽວຂ້ອງ, ສູນກາງຊາວໜຸ່ມປະຊາຊົນ ປະຕິວັດລາວ ເປັນສູນກາງໃນການປະສານງານອຳນວຍຄວາມສະດວກ ແລະ ຕິດຕາມກວດກາການປະສານງານຢ່າງໃກ້ຊິດກັບບັນດາກະຊວງ ແລະ ພາກສ່ວນກ່ຽວຂ້ອງໃນທຸກລະດັບເພື່ອຮັບປະກັນການປະຕິບັດຍຸດທະສາດໃຫ້ມີປະສິດທິພາບ ແລະ ປະສິດທິຜົນ.

## 4.2. ການສ້າງຄວາມເຂັ້ມແຂງໃຫ້ແກ່ຄະນະຊາວໜຸ່ມ ປະຊາຊົນ ປະຕິວັດລາວ

ຄະນະບໍລິຫານງານ ສຊປລ ຕ້ອງເອົາໃຈໃສ່ໃນການນໍາພາຊີ້ນໍາປັບປຸງກໍ່ສ້າງການຈັດຕັ້ງ ຄຊປປລ ໃນຂອບເຂດທົ່ວປະເທດ ໂດຍສະເພາະແມ່ນການຈັດຕັ້ງຊາວໜຸ່ມຢູ່ຂັ້ນຮາກຖານຕ້ອງສາມາດເຮັດບົດບາດ ແລະ ເປັນແກນນໍາໃນການນໍາພາຊາວໜຸ່ມ, ເຍົາວະຊົນ ສ້າງສາ ແລະ ພັດທະນາປະເທດຊາດ, ປັບປຸງພາລະບົດບາດ,ບັນຈຸຊັບຊ້ອນບຸກຄະລາກອນໂດຍມີການປະສານສົມທົບກັບຄະນະພັກແຂວງ,ນະຄອນຫຼວງ,ກະຊວງ-ອົງການ ເພື່ອກວດກາຄືນການຈັດຕັ້ງຂອງ ຄຊປປລ ແຕ່ລະຂັ້ນໃຫ້ມີຄວາມໜັກແໜ້ນເຂັ້ມແຂງທາງດ້ານປະລິມານ ແລະຄຸນນະພາບ.

## 4.3. ການປະສານງານ

ການປະສານງານຂັ້ນສູນກາງ ແມ່ນນໍາໂດຍຄະນະກໍາມະການປະສານງານລະດັບຊາດ, ຄະນະກໍາມະການປະສານງານລະດັບຊາດ ນໍາໂດຍຮອງເລຂາຄະນະບໍລິຫານງານສູນກາງຊາວໜຸ່ມ ປະຊາຊົນ ປະຕິວັດລາວ ຈະຕ້ອງຈັດກອງປະຊຸມປຶກສາຫາລືສອງຄັ້ງຕໍ່ປີ ເພື່ອຮັບປະກັນການວາງແຜນ, ການຈັດຕັ້ງປະຕິບັດ, ການປະເມີນ ແລະ ຕິດຕາມກວດກາການປະຕິບັດຍຸດທະສາດ ແລະ ແຜນງານຂອງນະໂຍບາຍສະບັບນີ້.

ຫົວໜ້າຫ້ອງການກະຊວງແຜນການ ແລະ ການລົງທຶນ, ກະຊວງສາທາລະນະສຸກ, ກະຊວງສຶກສາທິການ ແລະ ກິລາ, ກະຊວງແຮງງານ ແລະ ສະຫວັດດີການສັງຄົມ, ກະຊວງພາຍໃນ, ກະຊວງຍຸຕິທໍາ, ຫົວໜ້າຫ້ອງການສູນກາງສະຫະພັນແມ່ຍິງລາວ ແລະ ຫົວໜ້າຫ້ອງການສູນກາງສະຫະພັນກໍາມະບານເປັນສະມາຊິກ, ກອງປະຊຸມຄະນະກໍາມະການປະສານງານລະດັບຊາດ ຈະຖືກຈັດຂຶ້ນໂດຍສູນກາງຊາວໜຸ່ມ ປະຊາຊົນ ປະຕິວັດລາວ, ປະສານງານ ແລະ ຮ່ວມກັບຂະແໜງການທີ່ກ່ຽວຂ້ອງ, ເສີມຂະຫຍາຍບົດບາດການຮ່ວມມືກັບສູນກາງແນວລາວສ້າງຊາດ, ອົງການຈັດຕັ້ງມະຫາຊົນ, ອົງການຈັດຕັ້ງສັງຄົມ, ອົງການປົກຄອງທ້ອງຖິ່ນ, ຄອບຄົວ, ສື່ມວນຊົນ ແລະ ພົນລະເມືອງທົ່ວສັງຄົມ ເພື່ອໃຫ້ມີສ່ວນຮ່ວມໃນການເຜີຍແຜ່ແລະຈັດຕັ້ງປະຕິບັດຍຸດທະສາດການພັດທະນາຊາວໜຸ່ມ, ເຍົາວະຊົນລາວໃຫ້ປະກົດຜົນເປັນຈິງ.

ຢູ່ຂັ້ນແຂວງ, ຄະນະກໍາມະການປະສານງານຂັ້ນແຂວງເປັນຜູ້ຊີ້ນໍາ ແລະ ຮັບຜິດຊອບການປະສານງານຢູ່ຂັ້ນແຂວງ ເພື່ອຮັບປະກັນການຈັດຕັ້ງປະຕິບັດຍຸດທະສາດທີ່ເໝາະສົມໃນຂັ້ນແຂວງ, ຄະນະກໍາມະການຈັດຕັ້ງປະຕິບັດຂັ້ນແຂວງນໍາໂດຍຮອງເຈົ້າແຂວງ, ຮອງເຈົ້າຄອງນະຄອນຫຼວງ ຈະໄດ້ຮັບການສ້າງຕັ້ງຂຶ້ນ ແລະ ຈັດກອງປະຊຸມປຶກສາຫາລືສອງຄັ້ງຕໍ່ປີ ເພື່ອຮັບປະກັນການວາງແຜນ, ການປະຕິບັດ, ການປະເມີນ ແລະ ຕິດຕາມກວດກາການປະຕິບັດຍຸດທະສາດ ແລະ ແຜນງານໃນລະດັບແຂວງ, ປະກອບດ້ວຍຄະນະຊາວໜຸ່ມ ປະຊາຊົນ ປະຕິວັດລາວແຂວງ ຫົວໜ້າພະແນກຂັ້ນແຂວງ: ພະແນກແຜນການ ແລະ ການລົງທຶນ, ພະແນກສາທາລະນະສຸກ, ພະແນກສຶກສາທິການ ແລະ ກິລາ, ພະແນກແຮງງານ ແລະ ສະຫວັດດີການສັງຄົມ, ພະແນກພາຍໃນ, ພະແນກຍຸຕິທໍາ, ປະທານສະຫະພັນແມ່ຍິງແຂວງ ແລະ ປະທານສະຫະພັນກໍາມະບານແຂວງກອງປະຊຸມຄະນະຊີ້ນໍາຂັ້ນແຂວງຈະຖືກຈັດຂຶ້ນໂດຍຄະນະຊາວໜຸ່ມ ປະຊາຊົນ ປະຕິວັດລາວແຂວງ.

## 4.4. ດ້ານງົບປະມານ

ຍຸດທະສາດການພັດທະນາຊາວໜຸ່ມ, ເຍົາວະຊົນລາວ ຈະໄດ້ຮັບການຈັດຕັ້ງປະຕິບັດໂດຍບັນດາກະຊວງ, ອົງການຈັດຕັ້ງພັກ-ລັດ ແລະ ອົງການຈັດຕັ້ງມະຫາຊົນຂັ້ນສູນກາງຮອດທ້ອງຖິ່ນຕາມພາລະບົດບາດ, ບັນດາກະຊວງທີ່ກ່ຽວຂ້ອງຕ້ອງໄດ້ກຳນົດນິຕິກຳ, ແຜນງົບປະມານ, ແຜນງານ ແລະ ໂຄງການທີ່ຈຳເປັນເພື່ອຈັດຕັ້ງປະຕິບັດຍຸດທະສາດທີ່ຢູ່ພາຍໃຕ້ຂອບເຂດຄວາມຮັບຜິດຊອບຂອງຕົນ,ງົບປະມານເພີ່ມເຕີມຕາມຄວາມຕ້ອງການຈະໄດ້ຮັບການຈັດສັນໂດຍລັດຖະບານໃຫ້ແກ່ບັນດາກະຊວງ ແລະ ອົງການຈັດຕັ້ງພາກລັດໂດຍອີງໃສ່ແຜນການປະຈຳປີຂອງພາກສ່ວນກ່ຽວຂ້ອງ.

ບັນດາກະຊວງທີ່ກ່ຽວຂ້ອງແລະອົງການຈັດຕັ້ງພັກ-ລັດ ຈະກຳນົດງົບປະມານປະຈຳປີໂດຍຖືເອົາວຽກງານພັດທະນາຊາວໜຸ່ມ, ເຍົາວະຊົນເປັນບຸລິມະສິດ, ການໃຊ້ຈ່າຍງົບປະມານຂອງຂະແໜງການຈະໄດ້ຮັບການທົບທວນຄືນເພື່ອປະເມີນການຕອບສະໜອງຄວາມຕ້ອງການຂອງຊາວໜຸ່ມ ແລະ ເຍົາວະຊົນດັ່ງທີ່ໄດ້ກຳນົດໄວ້ໃນຍຸດທະສາດ.

ນອກຈາກນີ້, ຍັງຈະໄດ້ລະດົມການສະໜັບສະໜູນທາງດ້ານວິຊາການ ແລະ ທຶນຮອນອົງການຈັດຕັ້ງສາກົນ, ຄູ່ຮ່ວມພັດທະນາ, ອົງການຈັດຕັ້ງທາງສັງຄົມ ແລະ ພາກເອກະຊົນເພື່ອເພີ່ມທະວີການລົງທຶນເຂົ້າໃນການຈັດຕັ້ງປະຕິບັດຕາມທິດຊີ້ນຳທີ່ໄດ້ກຳນົດໄວ້ໃນຍຸດທະສາດສະບັບນີ້.

ສູນກາງຊາວໜຸ່ມ ປະຊາຊົນ ປະຕິວັດລາວ ສ້າງກອງທຶນປົກປ້ອງສົ່ງເສີມຊາວໜຸ່ມທີ່ດ້ອຍໂອກາດໂດຍການສ້າງນິຕິກຳສະເພາະເພື່ອສົ່ງເສີມໃນການລະດົມທຶນ, ແຫຼ່ງທຶນຂອງກອງທຶນອາດຈະມາຈາກງົບປະມານແຫ່ງລັດ, ອົງການຈັດຕັ້ງສາກົນ, ຄູ່ຮ່ວມພັດທະນາ, ອົງການຈັດຕັ້ງທາງສັງຄົມ ແລະ ພາກເອກະຊົນ.



# V. ການຕິດຕາມກວດກາ ແລະ ປະເມີນຜົນ



ການຕິດຕາມກວດກາ ແລະ ປະເມີນຜົນຄວາມຄືບໜ້າຂອງການປະຕິບັດຍຸດທະສາດນີ້ ຈະຖືກຕິດຕາມໃນແຕ່ລະປີຢູ່ໃນລະດັບຊາດ ແລະ ລະດັບແຂວງ, ນະໂຍບາຍນີ້ຈະໄດ້ຮັບການທົບທວນຄືນ ແລະ ປັບປຸງໃນທຸກໆ 5 ປີເພື່ອໃຫ້ສອດຄ່ອງຕາມຄວາມຕ້ອງການໂດຍອີງໃສ່ຄວາມຄືບໜ້າຂອງການປະຕິບັດຍຸດທະສາດ ແລະ ການປ່ຽນແປງສະພາບແວດລ້ອມທາງເສດຖະກິດ ແລະ ການພັດທະນາຂອງປະເທດ, ສູນກາງຊາວໜຸ່ມປະຊາຊົນ ປະຕິວັດລາວ ເປັນຜູ້ປະຕິບັດການທົບທວນ ແລະ ປະເມີນຍຸດທະສາດນີ້ໂດຍມີການປະສານງານຢ່າງໃກ້ຊິດກັບຄະນະຊີ້ນໍາລະດັບຊາດ, ກະຊວງທີ່ກ່ຽວຂ້ອງ, ອົງການຈັດຕັ້ງອື່ນໆໃນລະດັບຊາດ ແລະ ລະດັບແຂວງ

# VI. ເອກະສານອ້າງອີງ



- ສະພາແຫ່ງຊາດ ແຫ່ງ ສປປ ລາວ (2015) ລັດຖະທຳມະນູນ, ນະຄອນຫຼວງວຽງຈັນ.
- ສະພາແຫ່ງຊາດ ແຫ່ງ ສປປ ລາວ (2016) ກົດໝາຍວ່າດ້ວຍການສຶກສານະຄອນຫຼວງວຽງຈັນ.
- ສະພາແຫ່ງຊາດ ແຫ່ງ ສປປ ລາວ (2007) ກົດໝາຍແຮງງານນະຄອນຫຼວງວຽງຈັນ.
- ລັດຖະບານ ແຫ່ງ ສປປ ລາວ (2015) ຍຸດທະສາດການພັດທະນາຊັບພະຍາກອນມະນຸດແຫ່ງຊາດ 2025 ນະຄອນຫຼວງວຽງຈັນ.
- ກະຊວງສຶກສາ ແລະ ກິລາ (2015) ແຜນຍຸດທະສາດການພັດທະນາກິລາ, ກາຍະກຳແຕ່ນີ້ຮອດປີ 2020 ນະຄອນຫຼວງວຽງຈັນ.
- ກະຊວງຖະແຫຼງຂ່າວ ວັດທະນະທຳ ແລະ ທ່ອງທ່ຽວ (2015) ກົດໝາຍວ່າດ້ວຍເຕັກໂນໂລຊີການສື່ສານຂໍ້ມູນຂ່າວສານ.
- ກອງເລຂາອາຊຽນ (2017) ດັດຊະນີການພັດທະນາຊາວໜຸ່ມອາຊຽນຄັ້ງທຳອິດ. ຈາກາຕາ: ການເຜີຍແຜ່ສາທາລະນະ ແລະ ສັງຄົມພົນລະເຮືອນ.
- ສະພາແຫ່ງຊາດ ແຫ່ງ ສປປ ລາວ ກົດໝາຍວ່າດ້ວຍຄະນະຊາວໜຸ່ມ ປະຊາຊົນ ປະຕິວັດລາວ (ການປັບປຸງ2017). ນະຄອນຫຼວງວຽງຈັນ.
- ສູນກາງຊາວໜຸ່ມ ປະຊາຊົນ ປະຕິວັດລາວ (2014) ການວິເຄາະສະຖານະການເຍົາວະຊົນ ແລະ ຊາວໜຸ່ມ. ນະຄອນຫຼວງວຽງຈັນ.
- ສຳນັກງານສະຖິຕິຂອງລາວ (2015) ການສຳຫຼວດພົນລະເມືອງ ແລະ ທີ່ຢູ່ອາໄສ ຄັ້ງທີ 4. ນະຄອນຫຼວງວຽງຈັນ: ກະຊວງແຜນການ ແລະ ການລົງທຶນ.
- ສຳນັກງານສະຖິຕິລາວ (2018) ການສຳຫຼວດຕົວດັດສະນີໝາຍສັງຄົມຂອງ ສປປ ລາວ II, 2017. ນະຄອນຫຼວງວຽງຈັນ: ກະຊວງແຜນການ ແລະ ການລົງທຶນ.
- ສຳນັກງານສະຖິຕິຂອງລາວ (2018b) ການສຳຫຼວດຜົນກະທົບແຮງງານຂອງ ສປປ ລາວ, 2017. ນະຄອນຫຼວງວຽງຈັນ: ກະຊວງແຜນການ ແລະ ການລົງທຶນ.
- ຄະນະກຳມະກົດໝາຍຂອງສະພາແຫ່ງຊາດ ຂອງ ສປປ ລາວ (2005). ກົດໝາຍວ່າດ້ວຍການດູແລສຸຂະພາບ, 2005 (ເລກທີ09 / ນຍ) (ຖືກອອກແບບໂດຍກົດໝາຍເລກ 139/PDR ວັນທີ 9 ທັນວາ 2005).
- ກະຊວງສຶກສາທິການ (2009) ກອບການພັດທະນາດ້ານການສຶກສາ (2009-2015). ວຽງຈັນ: ກະຊວງສຶກສາທິການ.
- ກະຊວງສຶກສາທິການ ແລະ ກິລາ (2015) ແຜນການພັດທະນາຂະແໜງການສຶກສາ ແລະ ກິລາ (2016-2020). ວຽງຈັນ: ກະຊວງສຶກສາທິການ ແລະ ກິລາ.
- ກະຊວງສາທາລະນະສຸກ (2005) ນະໂຍບາຍດ້ານສຸຂະພາບການຈະເລີນພັນແຫ່ງຊາດ. ນະຄອນຫຼວງວຽງຈັນ.
- ກະຊວງແຮງງານ ແລະ ສະຫວັດດີການສັງຄົມ (2017) ບົດລາຍງານສະຫຼຸບ. ການປຶກສາຫາລືລະດັບຊາດກ່ຽວກັບການປະຕິບັດດ້ານສັງຄົມກ່ຽວກັບການປົກປັກຮັກສາສັງຄົມລາວ. ນະຄອນຫຼວງວຽງຈັນ.

- ກະຊວງແຜນການ ແລະ ການລົງທຶນ (2020) ນະໂຍບາຍແຫ່ງຊາດ ດ້ານປະຊາກອນ ແລະ ການພັດທະນາຂອງ ສປປ ລາວ. ນະຄອນຫຼວງວຽງຈັນ: ກະຊວງແຜນການ ແລະ ການລົງທຶນ.
- ກະຊວງແຜນການ ແລະ ການລົງທຶນ (2019) ຍຸດທະສາດການເຕີບໂຕຂອງສີຂຽວແຫ່ງຊາດ. ນະຄອນຫຼວງວຽງຈັນ: ກະຊວງແຜນການ ແລະ ການລົງທຶນ.
- ກະຊວງແຜນການ ແລະ ການລົງທຶນ (2016) ແຜນພັດທະນາເສດຖະກິດ - ສັງຄົມ 5 ປີ ຄັ້ງທີ 8 (2016-2020). ວຽງຈັນ: ກະຊວງແຜນການ ແລະ ການລົງທຶນ.
- ບົດລາຍງານການວາງແຜນ ແລະ ການລົງທຶນ (2017) ບົດລາຍງານ RTM, ນະຄອນຫຼວງວຽງຈັນ, MPI.
- ຄະນະຊີ້ນຳແຫ່ງຊາດກ່ຽວກັບ SDGs (2018) ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ: ການທົບທວນຄືນແບບສະໝັກໃຈແຫ່ງຊາດ ກ່ຽວກັບການຈັດຕັ້ງປະຕິບັດແຜນງານ 2030 ເພື່ອການພັດທະນາແບບຍືນຍົງ. ນະຄອນຫຼວງວຽງຈັນ: ລັດຖະບານ ຂອງສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ.
- UNFPA (nd) ຍຸດທະສາດ UNFPA ກ່ຽວກັບໄວລຸ້ນ ແລະ ຊາວໜຸ່ມ: ຫັນໄປສູ່ການຮັບຮູ້ຄວາມສາມາດອັນເຕັມທີ່ຂອງໄວໜຸ່ມ ແລະ ເຍົາວະຊົນ, ນິວຢອກ: ສຳນັກງານຂອງອົງການສະຫະປະຊາຊາດ.
- UNFPA (nd) ຂອບເຂດການປະຕິບັດງານຂອງ UNFPA ກ່ຽວກັບເຍົາວະຊົນ ແລະ ຊາວໜຸ່ມ ນິວຢອກ: ສຳນັກງານຂອງສະຫະປະຊາຊາດ.
- ສະຫະປະຊາຊາດ (2015) ການປ່ຽນແປງໂລກຂອງພວກເຮົາ: ວາລະ 2030 ສຳລັບການພັດທະນາແບບຍືນຍົງ. ນິວຢອກ: ສຳນັກງານໃຫຍ່ຂອງອົງການສະຫະປະຊາຊາດ.
- ສະຫະປະຊາຊາດ (2010) ໂຄງການປະຕິບັດງານໂລກສຳລັບຊາວໜຸ່ມ. ນິວຢອກ: ສຳນັກງານໃຫຍ່ຂອງອົງການສະຫະປະຊາຊາດ.
- ສະຫະປະຊາຊາດ, 2018, ສົນທິສັນຍາກ່ຽວກັບສິດທິຂອງເດັກ, CRC / C / LAO / CO / 3-6: ສຳນັກງານໃຫຍ່ຂອງສະຫະປະຊາຊາດ.
- ອົງການສະຫະປະຊາຊາດ, 2018, ຄະນະກຳມະການກ່ຽວກັບການລົບລ້າງການແບ່ງແຍກຕໍ່ແມ່ຍິງ, CEDAW / C / LAO / CO / 8-9, ສຳນັກງານອົງການສະຫະປະຊາຊາດ.
- ທະນາຄານໂລກ (2015) ນະໂຍບາຍຄວາມທຸກຍາກ ຂອງ ສປປ ລາວ: ໂຕຂັບເຄື່ອນການຫຼຸດຜ່ອນຄວາມທຸກຍາກ ໃນ ສປປ ລາວ (ພາສາອັງກິດ). Washington, D.C: World Bank Group.
- ອົງການສຸຂະພາບໂລກ (2014) ສຸຂະພາບສຳລັບຂອງຊາວໜຸ່ມ ແລະ ເຍົາວະຊົນດ້ອຍໂອກາດຄັ້ງທີສອງ ໃນທົດສະຫວັດທີສອງ [Online]. Available at: http://apps.who.int/adolescent/second-decade/section2/page1/recognizing-adolescence.html (Accessed: 14 July 2018)
- ອົງການອະນາໄມໂລກ (1948) ຄຳນຳຂອງລັດຖະທຳມະນູນຂອງອົງການອະນາໄມໂລກທີ່ໄດ້ຮັບຮອງໂດຍກອງປະຊຸມສຸຂະພາບສາກົນ, ນິວຢອກ, 19 ມິຖຸນາ - 22 ກໍລະກົດ1946; ໄດ້ລົງນາມໃນວັນທີ 22 ກໍລະກົດ1946 ໂດຍຜູ້ຕາງໜ້າຂອງ 61 ປະເທດ (ບັນທຶກທາງການຂອງ WHO, ເລກທີ 2, ໜ້າ100) ແລະ ໄດ້ເຂົ້າຮ່ວມໃນວັນທີ 7 ເມສາ1948.

# VII. ເອກະສານຊ້ອນທ້າຍ



# ເອກະສານຊ້ອນທ້າຍ 1: ກອບວຽກ “ນາງນ້ອຍ” 2030

## ຂອບແຜນງານ ນາງ ນ້ອຍ ປີ 2030: ເພື່ອບັນລຸເປົ້າໝາຍຄວາມສະເໝີພາບ ລະຫວ່າງ ຍິງ-ຊາຍ ແລະ ສ້າງຄວາມເຂັ້ມແຂງໃຫ້ກັບໄວໜຸ່ມຍິງ.

ນ້ອຍ ເປັນຕົວແທນໃຫ້ໄວໜຸ່ມຍິງ ທີ່ມີອາຍຸ 10-19 ປີ ຈຳນວນ 700,230 ໃນ ສປປ ລາວ. **ຂໍ້ຄຶງຄ້າງຈາກເປົ້າໝາຍການພັດທະນາສະຫະສະວັດໄດ້ເຮັດໃຫ້ໄວໜຸ່ມຍິງ ຖືກປ່ອຍປະໄວ້ຂ້າງຫຼັງ. ດັ່ງນັ້ນ, ເປົ້າໝາຍການພັດທະນາແບບຍືນຍົງ ເພື່ອຮັບປະກັນວ່າບໍ່ປ່ອຍປະຜູ້ໃດໄວ້ຂ້າງຫຼັງ.

ນ້ອຍ ຖືກສ້າງຂຶ້ນເພື່ອປູກຈິດສຳນຶກ, ສ້າງຄວາມເຂັ້ມແຂງ ໃນການຮ່ວມມື ແລະ ເພີ່ມທະວີການລົງທຶນພັດທະນາໄວໜຸ່ມຍິງ ເພື່ອໃຫ້ເຂົາເຈົ້າບັນລຸເປົ້າໝາຍຕາມທ່າແຮງທີ່ເໝາະສົມ. ຂອບແຜນງານ ນາງ ນ້ອຍ ຖືກນຳສະເໜີຢ່າງເປັນທາງການໃນວັນເດັກຍິງສາກົນ ປີ 2016.

*ເປົ້າໝາຍ 2:*
ຍ້ອນຂາດໂພສະນາການທີ່ດີ ໄວໜຸ່ມຍິງ ອາຍຸ 15-19* ປີ ເປັນພະຍາດ ເລືອດຈາງ ຈຳນວນ 42.6%

*ເປົ້າໝາຍ 3:*
ອັດຕາການເກີດລູກໃນໄວໜຸ່ມ ແມ່ນສູງທີ່ສຸດໃນພາກພື້ນ 83 ຕໍ່ 1,000 ຄົນ ແລະ ເພີ່ມຄວາມສ່ຽງຕໍ່ການຕາຍຂອງແມ່.

*ເປົ້າໝາຍ 4:*
ໄວໜຸ່ມຍິງ ອາຍຸ 15-17 ປີ ຈຳນວນ 41.8%* ໄດ້ອອກໂຮງຮຽນ ເຂົາເຈົ້າຂາດໂອກາດໄດ້ຮັບການພັດທະນາທາງດ້ານເສດຖະກິດ ແລະ ສັງຄົມ.




*ເປົ້າໝາຍ 8:*
ຍ້ອນຂາດການປົກປ້ອງທາງສັງຄົມ, ໄວໜຸ່ມຍິງ ອາຍຸ 5 -17 ປີ ໄດ້ມີສ່ວນຮ່ວມເປັນແຮງງານເດັກ ຈຳນວນ 42.4%.*

*ເປົ້າໝາຍ 5:*
ການແຕ່ງງານແຕ່ອາຍຸຍັງນ້ອຍຂອງໄວໜຸ່ມຍິງ ອາຍຸ 15-19 ປີ ມີເຖິງ 23.5%*.

ຄວາມຄືບໜ້າການຈັດຕັ້ງປະຕິບັດແຜນງານ ນາງ ນ້ອຍ ຈະໄດ້ຕິດຕາມຢ່າງໃກ້ຊິດຈາກ 5 ຕົວຊີ້ວັດ ຂອງເປົ້າໝາຍການພັດທະນາແບບຍືນຍົງ ຮອດ 2030 ນາງ ນ້ອຍ ຈະມີອາຍຸ 25 ປີ. ຈະນຳໃຊ້ຂໍ້ມູນຈາກການສຳຫຼວດທຸກໆ 5 ປີ.

ມີແຜນງານ ແລະ ວິທີການຈັດຕັ້ງປະຕິບັດທີ່ຮອບດ້ານ ເພື່ອແກ້ໄຂອຸປະສັກທີ່ກີດຂວາງ ນາງ ນ້ອຍ ທີ່ກຳລັງປະເຊີນຢູ່ນັ້ນໃຫ້ໝົດໄປ ຈະຊ່ວຍໃຫ້ມີຄວາມຄືບໜ້າໃນການຈັດຕັ້ງປະຕິບັດເປົ້າໝາຍການພັດທະນາແບບຍືນຍົງ (SDGs) ແລະ ຫຼຸດພົ້ນອອກຈາກວົງຈອນຄວາມທຸກຍາກ ເຊິ່ງຈະນຳຜົນປະໂຫຍດມາສູ່ ນາງ ນ້ອຍ, ຊຸມຊົນ ແລະ ປະເທດລາວ.

*** ການສຳຫຼວດດັດສະນີໝາຍສັງຄົມລາວ 2017** **** ການສຳຫຼວດປະຊາກອນ 2015**

## ເອກະສານຊ້ອນທ້າຍ 2:

### ໂຄງຮ່າງຄະນະຮັບຜິດຊອບຮ່າງຍຸດທະສາດການພັດທະນາຊາວໜຸ່ມ, ເຍົາວະຊົນລາວ

ຄະນະຊີ້ນຳລະດັບຊາດ
ລະດັບຮອງລັດຖະມົນຕີກະຊວງ, ອົງການທຽບເທົ່າ

ຄະນະຊີ້ນຳລະດັບຊາດ
ລະດັບຂັ້ນກົມ ແລະ ພະແນກການກະຊວງ,
ອົງການທຽບເທົ່າ

ຄະນະກອງເລຂາ
(ສູນກາງຊາວໜຸ່ມ ປະຊາຊົນ ປະຕິວັດລາວ)

ຄະນະວິຊາການ UNFPA
ຊ່ຽວຊານພາຍໃນ ແລະ ຕ່າງປະເທດ

ຄະນະຊາວໜຸ່ມແຂວງ/ສະມາຊິກຊາວໜຸ່ມ
ແລະ ຊາວໜຸ່ມຫຼາກຫຼາຍ

ເຄືອຂ່າຍ UN ແລະ ອົງການຈັດຕັ້ງສາກົນ
ທີ່ກ່ຽວຂ້ອງ

- **ຄະນະຊີ້ນຳ**

| | |
|---|---|
| ທ່ານ. ອາລຸນໄຊ ສູນນະລາດ | ເລຂາຄະນະບໍລິຫານງານ ສຊປລ |
| ທ່ານ. ໃບຄຳ ຂັດທິຍະ | ຮອງລັດຖະມົນຕີກະຊວງ ແຮງງານ ແລະ ສະຫວັດດີການສັງຄົມ |
| ທ່ານ ນ. ວິລະວອນ ພັນທະວົງ | ຮອງເລຂາຄະນະບໍລິຫານງານ ສຊປລ |
| ທ່ານ. ບົວລານ ສີຣີປັນຍາ | ຮອງລັດຖະມົນຕີ ກະຊວງ ສຶກສາທິການ ແລະ ກິລາ |
| ທ່ານ ຮສ ດຣ. ພູທອນ ເມືອງປາກ | ຮອງລັດຖະມົນຕີ ກະຊວງ ສາທາລະນະສຸກ |
| ທ່ານ ນ. ວັນເພັງ ແກ້ວນະຄອນ | ຮອງປະທານກຳມາທິການບັນດາເຜົ່າ, ສະພາແຫ່ງຊາດ |
| ທ່ານ. ຄຳມູນ ວິພົງໄຊ | ຮອງລັດຖະມົນຕີ ກະຊວງ ພາຍໃນ |
| ທ່ານ ພົຕ. ປອ. ສົມຫວັງ ທຳມະສິດ | ຮອງລັດຖະມົນຕີ ກະຊວງປ້ອງກັນຄວາມສະຫງົບ |
| ທ່ານ ວັນນາ ດວງພະຈັນ | ຮອງປະທານ ສູນກາງສະຫະພັນກຳມະບານລາວ |
| ທ່ານ ນ. ທຸມມາລີ ວົງພະຈັນ | ຮອງປະທານ ຄະນະບໍລິຫານງານສູນກາງສະຫະພັນແມ່ຍິງລາວ |
| ທ່ານ. ແກ້ວຈະເລີນ ເຊ່ຍຢັ້ງຢ່າງ | ຄະນະປະຈຳ, ຫົວໜ້າກົມໂຄສະນາອົບຮົມ, ສນຊ |
| ທ່ານ ພົນ.ວ ທອງວັນ ກອງມະນີ | ຮອງກົມໃຫຍ່ການເມືອງກອງທັບ, ຜູ້ຊີ້ນຳລວມອົງການຈັດຕັ້ງມະຫາຊົນ |

- **ຄະນະຮັບຜິດຊອບຊີ້ນຳວິຊາການ**

| | |
|---|---|
| ທ່ານ ດຣ. ໄພວັນ ແກ້ວປະເສີດ | ກຳມະການ, ເລຂາຄະນະບໍລິຫານງານ ຊປປລ ກະຊວງສາທາລະນະສຸກ |
| ທ່ານ. ສຸລິຍາ ສີດາວົງ | ກຳມະການ, ເລຂາຄະນະບໍລິຫານງານ ຊປປລ ກະຊວງຍຸຕິທຳ |
| ທ່ານ ພັທ ສຸດໃຈ ມະຫາວົງ | ກຳມະການ, ຮອງຫົວໜ້າຫ້ອງການຊາວໜຸ່ມກອງທັບ ກະຊວງ ປກຊ |
| ທ່ານ ພັທ ນ. ນວນ ເທບພະວົງ | ກຳມະການ, ຮອງເລຂາຄະນະບໍລິຫານງານ ຊປປລ ກະຊວງ ປກສ |
| ທ່ານ ປອ ຕຸລາວັນ ໜໍ່ເມືອງເສດ | ຮອງເລຂາຄະນະບໍລິຫານງານ ຊປປລ ກະຊວງສຶກສາທິການ ແລະ ກິລາ |
| ທ່ານ. ດາວເພັດ ເມືອງໂພນທອງ | ຮອງເລຂາຄະນະບໍລິຫານງານ ຊປປລ ກະຊວງອຸດສະຫະກຳ ແລະ ການຄ້າ |
| ທ່ານ. ວຽງຂອງ ອິນທະລັງສີ | ຮອງຫົວໜ້າກົມແຜນການ ແລະ ການຮ່ວມມືສາກົນ, ກະຊວງ ແຮງງານ ແລະ ສະຫວັດດີການສັງຄົມ |
| ທ່ານ. ຂັນທອງ ສຸດທິມາດ | ຮອງຫົວໜ້າຫ້ອງການ, ສູນກາງສະຫະພັນກຳມະບານລາວ |
| ທ່ານ. ຈັນສີທາ ທຳມະວົງ | ຮອງຫົວໜ້າກົມແຜນການ, ກະຊວງ ແຜນການ ແລະ ການລົງທຶນ |
| ທ່ານ ປອ ນ. ອຳມະລາ ແກ້ວໝູຈັນ | ຮອງຫົວໜ້າກົມແຜນການ ແລະ ການຮ່ວມມື ກະຊວງພາຍໃນ |
| ທ່ານ ນ. ຈິງຈິດ ຈັນທະລານິນ | ຮອງຫົວໜ້າຫ້ອງການ, ຄະນະກຳມະທິການເພື່ອຄວາມກ້າວໜ້າຂອງແມ່ຍິງ ແລະ ແມ່-ເດັກ |
| ທ່ານ ນ. ສີສະໝຸດ ຈັນທະວົງ | ຫົວໜ້າພະແນກພົວພັນອົງການຈັດຕັ້ງມະຫາຊົນ, ກຳມາທິການບັນດາເຜົ່າສະພາແຫ່ງຊາດ |
| ທ່ານ. ວັນດີ ຈັນສົມບັດ | ຫົວໜ້າພະແນກຄົ້ນຄວ້າສັງລວມ, ສຳນັກງານສູນກາງແນວລາວສ້າງຊາດ |

- **ຄະນະຮັບຜິດຊອບຈັດຕັ້ງປະຕິບັດ**

| | |
|---|---|
| ທ່ານ ດຣ. ອິນປົງ ທົງພະຈັນ | ຮອງເລຂາຄະນະບໍລິຫານງານ ຊປປລ ກະຊວງສາທາລະນະສຸກ |
| ທ່ານ ນ. ວິໄລວັນ ບຸບຜານຸວົງ | ຫົວໜ້າພະແນກແຜນການ-ການເງິນ ແລະ ການຮ່ວມມື, ຄະນະກຳມະທິການເພື່ອຄວາມກ້າວໜ້າຂອງແມ່ຍິງ ແລະ ແມ່-ເດັກ |
| ທ່ານ. ອະທິລັກ ອຸດົມເດດ | ຫົວໜ້າພະແນກປົກປ້ອງແຮງງານ, ສູນກາງສະຫະພັນກຳມະບານລາວ |
| ທ່ານ ນ. ມອນທອງ ອິນທະວົງ | ຮອງຫົວໜ້າພະແນກແຜນການ ແລະ ການປະເມີນຜົນ, ກະຊວງ ແຮງງານ ແລະ ສະຫວັດດີການສັງຄົ |
| ທ່ານ ຮອ ບົວໄລ ສີສຸລາດ | ຮອງຫົວໜ້າພະແນກອົບຮົມຈັດຕັ້ງ, ກະຊວງ ປກສ |

| | |
|---|---|
| ທ່ານ. ວຽງມະນີ ວໍລະວົງ | ຮອງເລຂາໜ່ວຍຊາວໜຸ່ມກົມຈັດຕັ້ງ-ພະນັກງານ ກະຊວງ ຍຸຕິທຳ |
| ທ່ານ. ລາຕີ ແກ້ວລັງສີ | ວິຊາການກົມແຜນການ ແລະ ການຮ່ວມມື, ກະຊວງ ພາຍໃນ |
| ທ່ານ. ສຸລິຈັນ ເພັດມະນີ | ວິຊາການພະແນກພົວພັນອົງການຈັດຕັ້ງມະຫາຊົນ, ກຳມາທິການບັນດາເຜົ່າ ສະພາແຫ່ງຊາດ |
| ທ່ານ. ບຸນນະພົນ ແສງຄຳຢອງ | ວິຊາການສູນຄົ້ນຄວ້ານະໂຍບາຍການພັດທະນາ, ກະຊວງ ແຜນການ ແລະ ການລົງທຶນ |

- **ຄະນະຊຽນຍຸດທະສາດການພັດທະນາຊາວໜຸ່ມ, ເຍົາວະຊົນລາວ**

| | |
|---|---|
| ທ່ານ. ສົມກຽວ ກົ່ງສະດາ | ຫົວໜ້າກົມພົວພັນຮ່ວມມືກັບຕ່າງປະເທດ |
| ທ່ານ ນ. ມີນາ ສີວິໄລ | ຮອງຫົວໜ້າກົມອົບຮົມຊາວໜຸ່ມ |
| ທ່ານ ນ. ສີໄຄເພັດ ແສງມະນີ | ຫົວໜ້າພະແນກຄົ້ນຄວ້າ-ສັງລວມ ແລະ ສະຖິຕິ, ຫ້ອງການ ສຊປລ |
| ທ່ານ. ໜູຈາ ເຢ່ຍມ່າຈ່າງ | ຫົວໜ້າພະແນກ ນິຕິກຳ, ກົມຈັດຕັ້ງພະນັກງານ ສຊປລ |

- **ກອງເລຂາ**

| | |
|---|---|
| ທ່ານ ນ. ພອນມະນີ ລີຈັງ | ຫົວໜ້າພະແນກ, ກົມເຍົາວະຊົນ ສຊປລ |
| ທ່ານ. ສາຍສະໝອນ ເທັ້ງສີວັດ | ຮອງຫົວໜ້າພະແນກຂໍ້ມູນຂ່າວສານ |
| ທ່ານ. ວາງ ລາວຊາງ | ວິຊາການ, ຫ້ອງການ ສຊປລ |

- **ອົງການສະຫະປະຊາຊາດ ກອງທຶນສຳລັບປະຊາກອນ ປະຈຳ ສປປ ລາວ (UNFPA)**

| | |
|---|---|
| ທ່ານ ນ. ມາຮຽມ ເອ ຄານ | ຜູ້ຕາງໜ້າ ອົງການສະຫະປະຊາຊາດ ກອງທຶນສຳລັບປະຊາກອນ ປະຈຳ ສປປ ລາວ |
| ທ່ານ ປອ ເຕສຣາມຈັດ | ຫົວໜ້າແຜນງານໄວໜຸ່ມ |
| ທ່ານ. ສີວົງໄຊ ຈັງປີຕິກຸນ | ຜູ້ປະສານງານ |
| ທ່ານ ດຣ. ດີປາປູາຊາດ | ຜູ້ປະສານງານ |

- **ອົງການ UNESCO**

| | |
|---|---|
| ທ່ານ. ເດວິດຍັງ | ທີ່ປຶກສາປະຈຳຫ້ອງການພາກພື້ນບາງກອກ |
| ທ່ານ. ທອງເດືອນ ນັນທະນາວອນ | ທີ່ປຶກສາ |

## ເອກະສານຊ້ອນທ້າຍ 3: ຂັ້ນຕອນການສ້າງຍຸດທະສາດການພັດທະນາຊາວໜຸ່ມ, ເຍົາວະຊົນລາວ

ອີງໃສ່ຜົນຂອງການວິເຄາະສະຖານະການເຍົາວະຊົນ ແລະ ຊາວໜຸ່ມ ໃນປີ 2014 ແລະ ອີງໃສ່ແຜນຍຸດທະສາດ 5 ປີ ຂອງສູນກາງຊາວໜຸ່ມ ປະຊາຊົນ ປະຕິວັດລາວ, ສຊປລ ໄດ້ລິເລີ່ມການສົນທະນາເພື່ອສ້າງຍຸດທະສາດແຫ່ງຊາດການພັດທະນາຊາວໜຸ່ມ-ເຍົາວະຊົນ ໃນປີ 2016. ສຊປລ ໄດ້ນຳພາຂະບວນການສ້າງຍຸດທະສາດການພັດທະນາຊາວໜຸ່ມ, ເຍົາວະຊົນລາວ.

ໃນຕອນເລີ່ມຕົ້ນ, ໄດ້ມີການສົນທະນາປຶກສາຫາລືກັບກັບບັນດາກະຊວງທີ່ກ່ຽວຂ້ອງ, ອົງການຈັດຕັ້ງຂອງຊາວໜຸ່ມ ແລະ ຜູ້ທີ່ກ່ຽວຂ້ອງເພື່ອຍົກໃຫ້ເຫັນຄວາມສຳຄັນຂອງການພັດທະນາຍຸດທະສາດການພັດທະນາຊາວໜຸ່ມ, ເຍົາວະຊົນລາວ. ໃນເວລາດຽວກັນຂະບວນການພັດທະນາຍຸດທະສາດດັ່ງກ່າວ ຄວາມອາດສາມາດຂອງສູນກາງຊາວໜຸ່ມກໍ່ໄດ້ຮັບການເສີມຂະຫຍາຍ. ແນວຄວາມຄິດເບື້ອງຕົ້ນກ່ຽວກັບການພັດທະນາຍຸດທະສາດການພັດທະນາຊາວໜຸ່ມ, ເຍົາວະຊົນລາວ ພ້ອມດ້ວຍແຜນປະຕິບັດງານໄດ້ຮັບການສ້າງຂຶ້ນ ແລະ ຮັບຮອງເອົາ. ເພື່ອຮັບປະກັນການດຳເນີນງານຂອງຂະບວນການຮ່າງຍຸດທະສາດ, ກົນໄກການປະສານງານ ແລະ ກົນໄກການຈັດຕັ້ງປະຕິບັດໄດ້ຮັບການສ້າງຕັ້ງຂຶ້ນ. ກົນໄກນີ້ລວມມີການສ້າງຕັ້ງຄະນະກຳມະການດ້ານວິຊາການສະເພາະດ້ານ, ກຸ່ມຊາວໜຸ່ມ, ທີມງານການວິຊາການ, ກອງເລຂາຮ່າງຍຸດທະສາດ ແລະ ຄະນະກຳມະການຊີ້ນຳແຫ່ງຊາດມີຜູ້ນຳໃນລະດັບສູງຈາກບັນດາກະຊວງທີ່ກ່ຽວຂ້ອງ. ຈາກນັ້ນ ມີການສ້າງໂຄງຮ່າງ ແລະ ກຳນົດຂົງເຂດເນື້ອໃນຕົ້ນຕໍໂດຍກຳນົດຄຳຖາມຊີ້ນຳການຄົ້ນຄວ້າແຕ່ລະເນື້ອໃນ ແລະ ໄດ້ສັງລວມເອກະສານອ້າງອີງຂອງແຕ່ລະຂົງເຂດເນື້ອໃນ. ອົງການ UNFPA ໄດ້ສະໜອງການສະໜັບສະໜູນດ້ານວິຊາການ ແລະ ດ້ານການເງິນ ໃນທຸກຂັ້ນຕອນຂອງການພັດທະນາຍຸດທະສາດດັ່ງກ່າວ. ນອກຈາກນີ້ ຍັງມີອົງການສະຫະປະຊາຊາດເພື່ອການສຶກສາ, ວິທະຍາສາດ ແລະ ວັດທະນະທຳ (UNESCO) ໃຫ້ການສະໜັບສະໜູນໃນຂັ້ນຕອນການຮ່າງຍຸດທະສາດ.

ຜ່ານກອງປະຊຸມປຶກສາຫາລື, ການປະຊຸມຂັ້ນວິຊາການທີ່ໄດ້ຮັບການວາງແຜນ, ປະສານງານຢ່າງຄັກແນ່ຫຼາຍຫຼືບຫຼາຍຕ່າວ ແລະ ຈັດຕັ້ງປະຕິບັດຢ່າງກວ້າງຂວາງເຊິ່ງໄດ້ຮັບການຈັດຕັ້ງປະຕິບັດ ແລະ ປະສານງານໂດຍກອງເລຂາ, ກຸ່ມຊາວໜຸ່ມ, ຄະນະກຳມະການດ້ານວິຊາການ, ຄະນະຊີ້ນຳລະດັບຊາດ, ອົງການຈັດຕັ້ງຊາວຂອງໜຸ່ມ, ບັນດາກະຊວງ ແລະ ພາກສ່ວນທີ່ກ່ຽວຂ້ອງອື່ນໆໄດ້ມີໂອກາດປະກອບສ່ວນເຂົ້າໃນການຮ່າງຍຸດທະສາດຢ່າງກົງໄປກົງມາ, ໜຶ່ງໃນອົງປະກອບຫຼັກໃນຂະບວນການພັດທະນາຍຸດທະສາດແມ່ນເພື່ອສ້າງຄວາມອາດສາມາດຂອງພະນັກງານສູນກາງຊາວໜຸ່ມ, ກຸ່ມຊາວໜຸ່ມ ແລະ ຜູ້ທີ່ກ່ຽວຂ້ອງອື່ນໆທີ່ມີສ່ວນຮ່ວມໃນຂັ້ນຕອນຕ່າງໆຂອງຂະບວນການພັດທະນາຍຸດທະສາດນີ້, ລວມທັງການເຂົ້າຮ່ວມຂອງຊາວໜຸ່ມໃນການເກັບກຳ ແລະ ວິເຄາະຂໍ້ມູນດ້ານຄຸນນະພາບ, ການມີສ່ວນຮ່ວມຂອງຊາວໜຸ່ມ, ເຍົາວະຊົນຖືເປັນໝາກຫົວໃຈສຳຄັນໃນທຸກໆຂັ້ນຕອນຂອງຂະບວນການພັດທະນາຍຸດທະສາດ.

ທາງຄະນະຮັບຜິດຊອບໄດ້ມີມາດຕະການອັນຈຳເປັນເພື່ອຮັບປະກັນການມີສ່ວນຮ່ວມຢ່າງເລິກເຊິ່ງຂອງຊາວໜຸ່ມ, ເຍົາວະຊົນຮ່ວມກັບການນຳທີ່ມີບົດບາດຕັດສິນໃນຂະບວນການສ້າງຍຸດທະສາດ ແລະ ຮັບປະກັນວ່າທິດທາງນະໂຍບາຍຂອງຍຸດທະສາດສອດຄ່ອງກັບຄວາມຕ້ອງການ, ຄວາມຈຳເປັນ ແລະ ຄວາມປາຖະໜາຂອງຊາວໜຸ່ມ, ເຍົາວະຊົນ ກຸ່ມຊາວໜຸ່ມຫຼາຍກຸ່ມໄດ້ຮັບໂອກາດເຂົ້າຮ່ວມໃນຂະບວນການຮ່າງຍຸດທະສາດ ເຊັ່ນ: ກຸ່ມປະລະໂຮງຮຽນ, ກຸ່ມຫຼາກຫຼາຍທາງເພດ (LGBTQI) ແລະ ຊາວໜຸ່ມ-ເຍົາວະຊົນພິການ, ຊາວໜຸ່ມ-ເຍົາວະຊົນ ຍັງໄດ້ຮັບການຝຶກອົບຮົມເພື່ອພັດທະນາຍຸດທະສາດ ແລະ ວິທີການເພື່ອໃຫ້

ສາມາດກຳນົດບັນຫາ ແລະ ຄວາມຕ້ອງການຊາວໜຸ່ມ ໃນ ສປປ ລາວ ໃຫ້ຖືກຕ້ອງເພື່ອບັນຈຸເຂົ້າໃນແຕ່ລະພາກຂອງຍຸດທະສາດ.

ບົດລາຍງານດ້ານວິຊາການ, ເອກະສານ, ຂໍ້ມູນຈາກແຫຼ່ງຕ່າງໆທີ່ມີຢູ່ແລ້ວໄດ້ຖືກນຳມາທົບທວນ, ໄດ້ເກັບກຳຂໍ້ມູນດ້ານປະລິມານ, ຄຸນນະພາບໃໝ່ເພື່ອກຳນົດບັນຫາ ແລະ ຄວາມຕ້ອງການຂອງຊາໜຸ່ມ, ເຍົາວະຊົນ ໃຫ້ຖືກຕ້ອງກັບຄວາມເປັນຈິງທີ່ສຸດ, ຂໍ້ມູນເຫຼົ່ານີ້ ໄດ້ຖືກນຳມາວິເຄາະ ແລະ ນຳໃຊ້ເຂົ້າໃນການພັດທະນາຍຸດທະສາດການພັດທະນາຊາວໜຸ່ມ, ເຍົາວະຊົນລາວສະບັບນີ້, ເອກະສານສາກົນບົດແນະນຳ, ບົດລາຍງານ ແລະ ເອກະສານທີ່ກ່ຽວຂ້ອງອື່ນໆກໍ່ໄດ້ນຳເອົາມາສຶກສາ, ເປັນບ່ອນອີງ ແລະ ເປັນທິດຊີ້ນຳເພື່ອຖອດຖອນເອົາບົດຮຽນທີ່ດີຈາກພາກພື້ນ ແລະ ທົ່ວໂລກ. ໃນເວລາດຽວກັນ, ຍຸດທະສາດໄດ້ສຸມໃສ່ການສ້າງນະໂຍບາຍ ແລະ ການຊອກຫາທາງແກ້ໄຂທີ່ແທດເໝາະກັບສະພາບຂອງທ້ອງຖິ່ນໃຫ້ຫຼາຍທີ່ສຸດເພື່ອສະໜັບສະໜູນທາງດ້ານວິຊາການ, ຮັບປະກັນຄຸນນະພາບ, ທີ່ປຶກສາແຫ່ງຊາດ ແລະ ທີ່ປຶກສາສາກົນໄດ້ຮັບການວ່າຈ້າງໃຫ້ມາຊ່ວຍໃນຂະບວນການຮ່າງຍຸດທະສາດເຊິ່ງໄດ້ເຮັດວຽກຢ່າງໃກ້ຊິດກັບກອງເລຂາ ແລະ ຊ່ວຍອຳນວຍຄວາມສະດວກໃນກອງປະຊຸມປຶກສາຫາລື.

ຮ່າງທຳອິດຂອງຍຸດທະສາດໄດ້ຖືກພັດທະນາ, ແຈກຢາຍໃຫ້ພາກສ່ວນກ່ຽວຂ້ອງເພື່ອຄົ້ນຄວ້າ ແລະ ປະກອບຄຳເຫັນ. ຫຼັງຈາກໄດ້ຮັບຄຳຄິດຄຳເຫັນຈາກພາກສ່ວນກ່ຽວຂ້ອງດັ່ງກ່າວທາງກອງເລຂາໄດ້ສັງລວມ ແລະ ດັດແກ້ຮ່າງຍຸດທະສາດຕາມຄວາມເໝາະສົມ ແລະ ໄດ້ຮ່າງທີສອງຂອງຍຸດທະສາດ, ຮ່າງທີສອງໄດ້ຖືກນຳສະເໜີໃຫ້ສະເໜີຕໍ່ຄະນະກຳມະການລະຫວ່າງກະຊວງເພື່ອພິຈາລະນາ ແລະ ມີຄຳເຫັນໃນກອງປະຊຸມ ອີງໃສ່ຄຳຄິດເຫັນ ແລະ ຄຳແນະນຳຈາກກອງປະຊຸມກອງເລຂາໄດ້ປັບປັງຮ່າງຍຸດທະສາດມາເປັນຮ່າງທີສາມ ແລະ ແຈກຢາຍໃຫ້ແກ່ພາກສ່ວນທີ່ກ່ຽວຂ້ອງທັງພາຍໃນ ແລະ ຕ່າງປະເທດ, ກອງປະຊຸມຂັ້ນວິຊາການໄດ້ຮັບການຈັດຂຶ້ນເພື່ອພິຈະລະນາ ແລະ ດັດແກ້ຍຸດທະສາດໂດຍອີງໃສ່ຄຳຄິດຄຳເຫັນຈາກກອງປະຊຸມປຶກສາຫາລືທີ່ຜ່ານມາ. ຮ່າງທີສີ່ຖືກນຳສະເໜີຕໍ່ຄະນະກຳມະການຊີ້ນຳ ເພື່ອຮັບຮອງເອົາເປັນຮ່າງສຸດທ້າຍກ່ອນຈະສົ່ງໄປຫ້ອງວ່າການລັດຖະບານເພື່ອນຳສະເໜີຄະນະລັດຖະບານພິຈາລະນາຮັບຮອງເອົາເປັນຂັ້ນຕອນສຸດທ້າຍ.

**ເອກະສານຊ້ອນທ້າຍ 4**

# SUSTAINABLE DEVELOPMENT GOALS



# ນ້ອຍ 2030

*"...ເຄິ່ງໜຶ່ງປະຊາກອນຂອງ ສປປ ລາວ ເຮົາ ແມ່ນໄວໜຸ່ມ ແລະ ເຄິ່ງໜຶ່ງຂອງໄວໜຸ່ມແມ່ນເປັນເດັກຍິງ, ພວກເຂົາແມ່ນກຳລັງແຮງຂອງຊາດໃນອະນາຄົດ. ເພື່ອເຮັດໃຫ້ປະເທດໄດ້ຮັບຜົນປະໂຫຍດສູງສຸດຈາກກຳລັງແຮງຂອງປະຊາກອນໜຸ່ມ, ພວກເຮົາຈະຕ້ອງໄດ້ເອົາໃຈໃສ່ ໂດຍສະເພາະຜູ້ດ້ອຍໂອກາດ ແລະ ຖືກປ່ອຍປະໄວ້ຂ້າງຫຼັງ ເປັນວາລະທີ່ສຳຄັນແຫ່ງຊາດ ຂອງການພັດທະນາ"*

ກ່າວໂດຍ ທ່ານ ປອ ຄຳລຽນ ພົນເສນາ, ຮອງລັດຖະມົນຕີ ກະຊວງແຜນການ ແລະ ການລົງທຶນ
ເນື່ອງໃນໂອກາດສະເຫຼີມສະຫຼອງ ວັນເດັກຍິງສາກົນ, 11 ຕຸລາ 2016

**ສູນກາງຊາວໜຸ່ມ ປະຊາຊົນ ປະຕິວັດລາວ, ສປປ ລາວ**

ຖະໜົນໂພນທັນ, ນະຄອນຫຼວງວຽງຈັນ, ສປປ ລາວ

ຕູ້ໄປສະນີ 736

WWW.lpryu.gov.la

**ສະໜັບສະໜູນໂດຍ:**

ອົງການ ສະຫະປະຊາຊາດ ກອງທຶນສໍາລັບປະຊາກອນ ປະຈໍາ ສປປ ລາວ

ອີເມວ: laos.office@unfpa.org

ເວັບໄຊ້: http://laos.unfpa.org/

http://facebook.com/unfpalaos